# ຫັນປ່ຽນດິນ ໃຫ້ກາຍເປັນທຶນ

## ການທວນຄືນການຄົ້ນຄວ້າໃຫ່ມໆ ກ່ຽວກັບການສຳປະທານທີ່ດິນ ເພື່ອການລົງທຶນຢູ່ໃນ ສ.ປ.ປ.ລ

### ສັງລວມເອກະສານທີ່ມີຢູ່ໃນປະຈຸບັນ



ບົດລາຍງານສະຫນັບສະຫນູນໂດຍ

## ກຸ່ມທີ່ເຮັດວຽກກ່ຽວກັບບັນຫາທີ່ດິນ

**CIDSE-Laos**
**CONCERN**
**GTZ**
**HELVETAS**
**PLAN International**
**VECO**


ໄມດາຍເອີ, mdwyer@berkeley.edu

ນັກຄົ້ນຄວ້າປຣິນຍາເອກ, ກຸ່ມພະລັງງານ&ຊັບພະຍາກອນ, ມະຫາວິທະບາລັຍ ແຄລິຟໍເນັຍ, ເບີເກີເລ



ຜະລິດໂດຍອົງການ ຊິດເຊ-ລາວ, ສະຫນັບສະຫນູນທຶນໂດຍອົງການ ແປລນສາກົນ ລາວ

*ການປັບປຸງບາງລະບຽບການທີ່ນຳໄປສູ່ຄວາມຜິດພາດໃນສັງຄົມ,*
*ຖ້າຫາກອັດຕາຂອງຄວາມຜິດພາດຍັງມີຫລາຍ, ຊຸມຊົນຈະຕ້ອງຕົກຢູ່ໃນທ່າຮັບຕໍ່ຂະບວນການດັ່ງກ່າວ*
*Karl Polanyi, ການປ່ຽນແປງຄັ້ງຍິ່ງໃຫຍ່, 1944*

1. <u>ອະລຳພະບົດ: ການຫຍຸດໂຄງການຊົ່ວຄາວ</u>

ໃນວັນທີ 9 ເດືອນ ພຶດສະພາ ປີ 2007, ທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກປະກາດຫຍຸດໂຄງການການໃຫ້ທີ່ດິນ ເພື່ອການສຳປະທານສຳລັບການປູກຕົ້ນໄມ້ອຸດສາຫະກຳ, ການປູກພືດຍືນຕົ້ນ ແລະ ການລົງທຶນດ້ານການຂຸດຄົ້ນແຮ່ທາດຕ່າງໆ (ໜັງສືພິມວຽງຈັນທາຍມ໌ 2007) ກ່າວເຖິງການຂາດຄວາມເອົາໃຈໃສ່ຕໍ່ກັບຄວາມສຳຄັນຂອງດິນ, ພູມີປະເທດຂອງລາວ, ຄວາມເປັນເຈົ້າຂອງທີ່ດິນ ແລະ ການກຳນົດເຂດນິເວດວິທະຍາ ແລະ ໄດ້ເນັ້ນເຖິງຄວາມຈຳເປັນຈະຕ້ອງ "ໄດ້ປັບປຸງຍຸດທະສາດ ແລະ ເນັ້ນເຖິງການຂາດຕົກບົກຜ່ອງຂອງການວາງຍຸດທະສາດທີ່ຜ່ານມາ",ທ່ານນາຍົກລັດຖະມົນຕີໄດ້ອະທິບາຍລັກສະນະຂອງບັນຫາທີ່ມີການພົວພັນກັບສັງຄົມ, ເສດຖະກິດ ແລະ ນິເວດ. ການໂຕ້ແຍ້ງກັນເລື່ອງທີ່ດິນນຳໃຊ້ໄດ້ເກີດຂຶ້ນຢູ່ ເມືອງເລົ່າງາມ ແຂວງສາລະວັນ ແລະ ເມືອງບາຈຽງ ແຂວງຈຳປາສັກ, ເຊິ່ງທ່ານເຈົ້າແຂວງໄດ້ກຳນົດເປັນເຂດປົກປັກຮັກສາ ແຕ່ໃນມື້ຕໍ່ມາ, ບັນດານັກລົງທຶນຊໍ້າພັດທຳລາຍພືນລະປູກ ແລະຕົ້ນໄມ້ (ໄມ້ສັກ) ຂອງຊາວບ້ານ. ທັງນີ້ນັກລົງທຶນຈະປູກຕົ້ນໄມ້ອຸດສາຫະກຳຢາງພາລາ ໂດຍບໍ່ມີການແຈ້ງໃຫ້ຊາວບ້ານຮູ້ລ່ວງໜ້າ (ໜັງສືພິມວຽງຈັນທາຍມ໌, 2007). ທີ່ນັ້ນໄດ້ມີການປູກຢາງພາລາ ເຊິ່ງທີ່ດິນຕອນນັ້ນອາດຈະປູກພືດທີ່ມີຄ່າສູງກວ່ານີ້ໄດ້, ໃນຂະນະນັ້ນທີ່ເມືອງ ປາກກະດິງ ແຂວງ ບໍລິຄຳໄຊ, ປ່າໄມ້ທີ່ມີຄຸນຄ່າຢ່າງມະຫາສານໄດ້ຖືກຕັດຢ່າງຫລວງຫລາຍໂດຍບໍ່ມີການຈ່າຍຄ່າທົດແທນໃຫ້ປະຊາຊົນທ້ອງຖິ່ນ ຫລື ປູກທົດແທນຄືນທັງສິ້ນ.

ຄຳຖະແຫລງການຂອງທ່ານນາຍົກລັດຖະມົນຕີໄດ້ສະທ້ອນໃຫ້ເຫັນຫລາຍແງ່ມຸມ: ໂຄງການທີ່ໃຫ້ສຳປະທານທີ່ດິນແມ່ນມີຄວາມສ່ຽງ ແລະ ບາງກໍລະນີກໍ່ມີໃຫ້ເຫັນແລ້ວເຊັ່ນ (1) ບໍ່ມີການທົດແທນຄືນຄ່າເສຍຫາຍທາງຊັບສິນຂອງຊາວບ້ານເອງ, ຂອງຂະແໜງການເອກະຊົນ ຫລື ຂອງລັດ (2) ບໍ່ມີການທົດແທນຄືນຄ່າເສຍຫາຍທີ່ບໍ່ແມ່ນຊັບສິນຂອງປະຊາຊົນ (ເຄື່ອງປ່າຂອງດົງ) ຫລືວ່າການປົກປັກຮັກສາແຫລ່ງນໍ້າເພື່ອການທຳມາຫາກິນຂອງປະຊາຊົນ ແລະ (3) ມີການເຊັນສັນຍາເພື່ອຄວບຄຸມແຫລ່ງຊັບພະຍາກອນ ແຕ່ຫລຸດຜ່ອນຜົນປະໂຫຍດໂດຍລວມ, ໃນເມື່ອເປັນແນວນີ້ແລ້ວ ມັນຈະຕົກ

ໄປໃນຮູບການລົງທຶນໃຫ້ເຂົາເຈົ້າໄດ້ຮັບຜົນປະໂຫຍດໄປຂ້າງດຽວ ໃນການສົມທຽບກັບຜົນທີ່ເຂົາເຈົ້າໄດ້ຮັບ. ການຖະແຫລງການຂອງທ່ານນາຍົກລັດຖະມົນຕີຍັງໄດ້ກ່າວເຖິງ ເຫດການທີ່ຫາກໍ່ເກີດຂຶ້ນໃຫມ່ໃນຂະແຫນງການພະລັງງານ, ຊຶ່ງໄດ້ກ່າວເຖິງການສະເຫນີໃຫ້ມີການປ່ຽນແປງພູມີປະເທດ ໃນການພັດທະນາບັນດາກິດຈະກໍາຕ່າງໆ ເຊິ່ງລັດຖະບານແຫ່ງ ສ.ປ.ປ.ລາວ ໄດ້ຊອກຫາການນໍາໃຊ້ທີ່ດິນເພື່ອການສໍາປະທານ ໂດຍມີການເລືອກເຟັ້ນເປັນພິເສດໂດຍ (a) ມີການຊຸກຍູ້ອີງໃສ່ ("2+3") ໃຫ້ໄດ້ມີການຕົກລົງສັນຍາເລື່ອງການນໍາໃຊ້ທີ່ດິນ (b) ສືບຕໍ່ໃຫ້ມີການສໍາປະທານທີ່ດິນແຕ່ໃນຂອບເຂດຈໍາກັດ ຄື ມີເນື້ອທີ່ນ້ອຍກວ່າ 100 ຮຕ ລົງມາ. ທັງນີ້ເພື່ອດຶງດູດຄວາມສົນໃຈບາງຂະແຫນງການເຊັ່ນ: ການທ່ອງທ່ຽວດ້ານອຸດສາຫະກໍາ, ກະເສດຕະກໍາ ແລະ (c) ປະເມີນຄືນບັນດາກິດຈະກໍາຈະໃຫ້ເຊົາເຊັ່ນ ຢູ່ຂະແຫນງບໍ່ແຮ່ເປັນຕົ້ນ. Art

ໃນຫລາຍໆຮູບການກ່ຽວກັບການສໍາປະທານທີ່ດິນໄດ້ກາຍມາເປັນປະເດັນຄໍາຖາມທີ່ໃຫຍ່ໂຕ ເຊິ່ງບາງ ຄັ້ງກໍ່ມີການກ່າວວ່າ ແມ່ນພູມປັນຍາຂອງລັດຖະບານ: ຈະມີການປັບດ້ວຍວິທີໃດ ບັນ ດາຄວາມຮັ່ງມີຂອງຊັບພະຍາກອນທໍາມະຊາດຢູ່ເຂດຂົນນະບົດ, ເຊິ່ງປັບຈາກພູມີປະເທດດ້ານພູມີສາດ ເຊິ່ງສ່ວນຫລາຍແລ້ວຍັງບໍ່ທັນເຫມາະສົມ "ຊົມໃຊ້ບໍ່ຄຸ້ມຄ່າ" ເຊິ່ງລັດຖະບານເອງທີ່ຢາກເປັນເຈົ້າການ (ເຊັ່ນ ຜົນໄດ້ຮັບຈາກການຜະລິດ ແລະ ຊັບພະຍາກອນເລືອກເຟັ້ນ ແຕ່ຍັງຢູ່ສ່ວນສູນກາງ ສົມທຽບໃສ່ການປະ ກອບສ່ວນໃຫ້ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນດີຂຶ້ນ) ໃນການນໍາໃຊ້ແຫລ່ງຊັບພະຍາກອນ ອອກມາຢ່າງມີປະສິດທິຜົນ - ເພື່ອນໍາໃຊ້ໃຫ້ປະເທດຊາດ ແລະ ປະຊາກອນຂອງຕົນ - ໃນຄວາມເປັນຈິງ, ລັດຈະສາມາດເຮັດສິ່ງນັ້ນເພື່ອພັດທະນາ ຫລືຈະພັດທະ ນາສິ່ງນັ້ນໄດ້ຫລືບໍ່? ກ່າວໄດ້ອີກວິທີການຫນຶ່ງຄືວ່າ ຈະສ້າງຊັບພະຍາກອນໄປປັບປຸງຊຸມຊົນ ຂອງປະເທດຊາດດ້ວຍວິທີໃດ ໂດຍປາສະຈາກການເຂົ້າຮ່ວມຂອງຊຸມຊົນນັ້ນໆ "ກໍ່ຄືການເຂົ້າຮ່ວມ ໃນຂະບວນການ". ການຫຍຸດໂຄງການຊົ່ວຄາວຂອງການສໍາປະທານທີ່ດິນທີ່ກວ້າງສະແດງໃຫ້ເຫັນຢ່າງຈະແຈ້ງໃນບົດຮຽນທີ່ໄດ້ຮັບໂດຍສະ ເພາະກໍລະນີທີ່ເກີດຂຶ້ນຢູ່ເມືອງ ເລົ່າງາມ, ບາຈຽງ, ປາກກະດິງ. ເຫມືອນດັ່ງທີ່ທ່ານນາຍົກໄດ້ສະເຫນີ ວ່າ ການຫຍຸດການສໍາປະທານທີ່ດິນ ແມ່ນໄດ້ເຊີນພາກສ່ວນຕ່າງໆເຂົ້າມາກວດກາຄືນ, ພ້ອມທັງເນັ້ນ ເຖິງບົດບາດຂອງການນໍາໃຊ້ທີ່ດິນ ເພື່ອສໍາປະທານເຊິ່ງໄດ້ກ່າວໄວ້ວ່າ ໄດ້ມີການອອກແຮງເພື່ອຫລຸດ ຜ່ອນຄວາມທຸກຈົນ. ເກືອບທັງຫມົດຂອງບົດລາຍງານນີ້ໄດ້ສະຫລຸບບົດຮຽນທີ່ໄດ້ຮັບ ແລະ ຄໍາຖາມ ໄດ້ຍົກມາເວົ້າກ່ຽວກັບການຄົ້ນຄວ້າທີ່ຜ່ານມາ ແລະ ກໍາລັງຄົ້ນຄວ້າກ່ຽວກັບການສໍາປະທານທີ່ດິນ ຢູ່ ສ.ປ.ປ.ລາວ ບົດສັງລວມນີ້ໄດ້ກໍານົດຢູ່ພາກ 3 ກ່ອນຫນ້ານັ້ນ, ພາກນີ້ໄດ້ເພີ່ມເຕີມບັນດາເງື່ອນໄຂ ຕ່າງໆ ເພື່ອຊ່ວຍໃນການວິເຄາະສິ່ງທີ່ພົບເຫັນເຊິ່ງໄດ້ສະຫລຸບຢູ່ພາກ 3.

## 2. ວິທີການແລະຄວາມເປັນມາ: ເປັນຫຍັງແລະວິທີການສຶກສາການສຳປະທານທີ່ດິນ?

ຂໍເລີ່ມຕົ້ນກັບນິຍາມຂອງການສຳປະທານທີ່ດິນ: ການສຳປະທານທີ່ດິນແມ່ນຫຍັງ?

ທຳອິດ, ການສຳປະທານທີ່ດິນມີຄວາມຫມາຍສອງຢ່າງແຕກຕ່າງກັນ: ຄວາມຫມາຍວ່າ "ໃຫ້ສຳປະທານ" ແມ່ນໄດ້ຖືກນຳໃຊ້ຢ່າງກວ້າງຂວາງ ແລະ ແຜ່ຫລາຍ, ສ່ວນອີກຄວາມຫມາຍຫນຶ່ງແມ່ນ "ໃຫ້ເຊົ່າດິນ". ໃນການຄົ້ນຄວ້າໃນທີ່ນີ້ຈຶ່ງນຳໃຊ້ "ສຳປະທານທີ່ດິນ" ຫລືວ່າ "land concession" ເຊິ່ງມາຈາກສອງແຫລ່ງຄົ້ນຄວ້າ. ອັນທີຫນຶ່ງກ່ຽວພັນເຖິງການຄົ້ນຄວ້າດ້ານການພັດທະນາ ເຊິ່ງໄດ້ກ່າວເຖິງການສຳປະທານທີ່ດິນໂດຍຜານການສຳຫລວດທີ່ກ່ຽວພັນເຖິງປະເດັນການພັດທະນາຕ່າງໆ. ຢ່າງທີສອງ, ມາຈາກການຄົ້ນຄວ້າປະເດັນກ່ຽວກັບດິນສະເພາະ ໂດຍສະເພາະແມ່ນກ່ຽວກັບດິນ ແລະ ການພົວພັນກັບຊັບສົມບັດຂອງທຸກຄົນ.

ຕໍ່ມາ, "ການສຳປະທານທີ່ດິນ" ແມ່ນມີຄວາມແຕກຕ່າງກັນໃນພາກປະຕິບັດຕົວຈິງ. ບາງເທື່ອການໃຫ້ສຳປະທານແມ່ນການກຳນົດໃຫ້ດິນຕາມເນື້ອທີ່ໃຫ້ເຊົ່າທາງດ້ານພູມສາດ ເຊັ່ນ: ຕົວຢ່າງ ໃຫ້ເຊົ່າປູກຢາງພາລາ ທີ່ກວມເອົາເນື້ອທີ່ດິນພາກສ່ວນຫນຶ່ງຂອງຊາວບ້ານຈຳນວນຫນຶ່ງ. ໃນເວລາອື່ນ, "ການໃຫ້ສຳປະທານ" ແມ່ນສິດທີ່ໃຫ້ເພື່ອການສຳຫລວດເນື້ອທີ່ດິນ ເພື່ອຈະຄາດຄະເນສຳປະທານຫາບໍ່ແຮ່ຕ່າງໆ. ແຕ່ວ່າດິນດັ່ງກ່າວຈະຕ້ອງພົບແຫລ່ງບໍ່ແຮ່ກ່ອນຈຶ່ງມີການ "ເຊົ່າດິນເພື່ອສຳປະທານ" ໃນຂັ້ນຕໍ່ໆໄປ.

ຄວາມຫມາຍທີສາມ, ໄດ້ເກີດມີຄວາມບໍ່ຈະແຈ້ງລະຫວ່າງຂັ້ນຕອນຂະບວນການຂອງການອະນຸມັດໃນການລົງທຶນ (ພ້ອມທັງການອອກແຮງໃຫ້ບໍລິການຢູ່ "ບ່ອນດຽວ" ສຳລັບນັກລົງທຶນ) ບັນດາເອກະສານຕ່າງໆໄດ້ກາຍເປັນລະບຽບຫລັກການ ແຕ່ຍັງບໍ່ໄດ້ຖືກນຳມານຳໃຊ້ກັບຂະບວນການວິເຄາະ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ເຊິ່ງພົວພັນກັບຂະບວນການປະຕິບັດຕົວຈິງຂອງບັນດາໂຄງການຕ່າງໆ. ການລາຍງານເມື່ອບໍ່ດົນທີ່ຜ່ານມານີ້ທີ່ມີເນື້ອໃນກ່ຽວກັບຂະບວນການຮັບຮອງການປ່ຽນແປງຂອງການລົງທຶນໄດ້ຍົກໃຫ້ເຫັນບັນຫາວ່າການບໍລິການຢູ່ "ປະຕູດຽວ" ຫລື ບ່ອນດຽວຍັງຢູ່ໄກຫລາຍກ່ຽວກັບຂະບວນການ ESIA ທັງໆທີ່ໄດ້ກຳນົດວ່າໃຫ້ໄດ້ຮັບຮອງເອກະສານພາຍໃນ 15 ມື້ ແລະ 60 ມື້ ໃນການອອກແຮງບໍລິການຢູ່ບ່ອນປະຕູດຽວ ທັງນີ້ແມ່ນການອອກແຮງເລັ່ງໃຫ້ມີການຮອງຮັບຂະບວນການໄວຂຶ້ນກວ່າເກົ່າ (ຫນັງສືພິມວຽງຈັນທາຍມ໌ 2007). ຂັ້ນຕອນຂອງ ESIA ໄດ້ກຳນົດຢ່າງຈະແຈ້ງນັບແຕ່ຂະບວນການລິເລີ່ມ, ແຕ່ວ່າໄດ້ເກີດມີກົນໄກປະຕິບັດຕົວຈິງຍັງບໍ່ຈະແຈ້ງ. ປະເດັນທີ່ສະແດງໃຫ້ເຫັນເຖິງການປະຕິບັດຕົວຈິງນັ້ນແມ່ນມີຄວາມຫມາຍສຳຄັນທີ່ສຸດ ເພາະວ່າມີຫລາຍໂຄງການທີ່ກ່ຽວກັບກະສິກຳ ແລະ ຂະແຫນງການປູກພືດຕ່າງໆຍັງບໍ່ທັນໄດ້ປະຕິບັດຫນ້າທີ່ຂອງຕົນຕໍ່ ESIA ຢ່າງເປັນທາງການເທື່ອ.

ສຸດທ້າຍ, ໄດ້ເກີດມີສາມຄຳຖາມໃນການສົນທະນາສຳລັບການສຳປະທານທີ່ດິນ: ຄຳຖາມທຳອິດ, ດິນຂອງລັດນັ້ນມີບໍ່ ແລະ ຖ້າມີມີຢູ່ໃສແທ້? ຄຳຖາມທີສອງ ດິນຂອງບ້ານມີບໍ່ແລະ ຖ້າມີມີຢູ່ບ່ອນໃດ? ສຸດທ້າຍ ການພົວພັນກັນລະຫວ່າງສອງຢ່າງດັ່ງກ່າວມີໃນຮູບແບບໃດ? ໃນບາງບ່ອນໄດ້ກ່າວວ່າ (ອີງຕາມຫລາຍແຫ່ງອ້າງອີງ) ໄດ້ກ່າວວ່າ "ການສຳປະທານທີ່ດິນ" ແມ່ນດິນໃຫ້ສຳປະທານມາຈາກລັດຢ່າງດຽວ ເຊິ່ງການໃຫ້ຜູ້ລົງທຶນເຊົ່າທີ່ດິນໃນໄລຍະຍາວນານ, ແບບທີ່ສອງໄດ້ສະແດງໃຫ້ເຫັນຕົວຈິງເພີ່ມຂຶ້ນເລື້ອຍໆກ່ຽວກັບການໃຫ້ສຳປະທານທີ່ດິນ ແມ່ນສິດທີ່ດິນມາຈາກດິນຂອງລັດຢ່າງດຽວເທົ່ານັ້ນ. ດັ່ງທ່ານ ຄຳອ້ວນ ບຸບຜາ ໄດ້ເນັ້ນໃນກອງປະຊຸມສຳມະນາເລື່ອງ ການປູກຕົ້ນໄມ້ໃນເດືອນກຸມພາ ເຊິ່ງເນັ້ນຫນັກວ່າດິນໃຫ້ສຳປະທານຕ້ອງໄດ້ວິເຄາະພິຈາລະນາຢ່າງຖີ່ຖ້ວນ ຍ້ອນວ່າໄດ້ເກີດມີການໄປກວມເອົາດິນຂອງຊາວບ້ານຢູ່ເລື້ອຍໆ. ການກວມເອົາດິນຂອງຊາວບ້ານນັ້ນໄດ້ເກີດມີຜົນກະທົບສຳຄັນຫລາຍຕໍ່ການອອກແຮງ ຫລື ຄວາມພະຍາຍາມຂອງລັດຖະບານ ເພື່ອປັບປຸງອະນຸມັດການລົງທຶນຕ່າງໆ, ຈາກນັ້ນກໍ່ເກີດມີການບໍ່ລົງຮອຍກັນເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ. ຈາກນັ້ນມັນໄດ້ສົ່ງຜົນກະທົບຕໍ່ຊາວບ້ານສຳລັບການຕັດສິນບັນຫາຊີວິດການເປັນຢູ່ຂອງເຂົາເຈົ້າ.

ສະຫລຸບລວມແລ້ວ, ການສຳປະທານທີ່ດິນແມ່ນມີຄວາມຫຍຸ້ງຍາກ ແຕ່ກໍ່ມີຄ່າທີ່ຈຳເປັນຕ້ອງມີການລະມັດລະວັງ. ທັງນີ້ ຜ່ານມາໄດ້ມີການຖົກຖຽງກັນກ່ຽວກັບສິດທິທາງດ້ານຊັບສົມບັດ ແລະ ແຫລ່ງຊັບພະຍາກອນອື່ນໆ ແລະພ້ອມທັງສິດທິທາງດ້ານການເປັນພົນລະເມືອງ ແລະ ດ້ານການພັດທະນາ. "ການໂຕ້ຖຽງກັນຢ່າງກວ້າງຂວາງ" ນີ້ມີຄວາມສຳຄັນທີ່ຈະເຮັດໃຫ້ສັງຄົມຂອງລາວ, ແລະ INGOs ຕ່າງໆ, ຜູ້ໃຫ້ທຶນ ແລະ ບັນດາຄົນອື່ນທີ່ເປັນຍາດຕິພີ່ນ້ອງກັນ (ບົດລາຍງານບົດນີ້ໄດ້ກ່າວເຖິງ) ຕ້ອງໄດ້ຕັດສິນໃຈວ່າຈະພ້ອມກັນ "ໃຫ້ຄຳແນະນຳ" ແລະ "ຊ່ວຍເຫລືອ" ໄດ້ແນວໃດທາງດ້ານການປະຕິບັດຕົວຈິງ. ໃນບົດລາຍງານບົດນີ້, ຂ້າພະເຈົ້າໄດ້ພະຍາຍາມອອກແຮງເພື່ອສັງລວມຫລາຍກວ່າການເລັ່ງໃສ່ແຕ່ການຕຳຫນິຕິຕຽນ ໂດຍສະເພາະສຳລັບການສຶກສາໃນເວລານີ້. ໃນນີ້ໄດ້ສະເຫນີສິດອຳນາດຢ່າງຄົບຖ້ວນຂອງການສຳປະທານທີ່ດິນຂອງລາວມາເຖິງຍຸກປະຈຸບັນ ການບັນທຶກຈາກຫນັງສືພິມວຽງຈັນທາຍມ໌ ບາງເທື່ອກໍ່ແມ່ນຂໍ້ມູນໃນຮູບການບໍ່ໄດ້ວິເຄາະ ທີ່ຈະນຳມາເປັນເອກະສານຕິດຄັດເຊິ່ງແຍກກັນກັບອີກພາກຫນຶ່ງ.

## 3. <u>ການຄົ້ນຄວ້າການສຳປະທານທີ່ດິນ</u>

ບັນດາຂະແຫນງການຕໍ່ໄປນີ້ແມ່ນການສະຫລຸບວິທີການ ແລະ ການພົບເຫັນຂອງການສຶກສາໃຫມ່ໆກ່ຽວກັບປະເດັນການສຳປະທານທີ່ດິນ ບາງກໍລະນີແມ່ນ "ການຄົ້ນຄວ້າສະເພາະ", ບາງກໍລະນີແມ່ນການສຶກສາໂຄງການດ້ານການພັດທະນາ. ອີກຢ່າງຫນຶ່ງທີ່ປະກົດມີແມ່ນປະເດັນທີ່ຍັງບໍ່ຈະແຈ້ງຢູ່ລະຫວ່າງສອງຢ່າງທີ່ກ່າວມາ. ໃນຂະນະທີ່ສະຫລຸບສັງລວມຢູ່ນີ້, ຂ້າພະເຈົ້າພະຍາຍາມໃຫ້ບົດນີ້ອອກໄປ

ທາງພູມີສາດ ແລະ ໄປຕາມຂັ້ນຕອນວິທີການຕ່າງໆເພື່ອສະແດງອອກໃນໃນບົດນີ້ເທົ່າທີ່ເປັນໄປໄດ້. ທັງນີ້ເພື່ອຊ່ວຍໃຫ້ນັກຄົ້ນຄວ້າຄົນອື່ນໃນອະນາຄົດໄດ້ສຶກສາຄືນ ບັນກາເອກະສານທີ່ຍັງບໍ່ທັນໄດ້ຕົກລົງກັນ. ສິ່ງທີ່ບໍ່ຍັງບໍ່ສາມາດຕົກລົງກັນໄດ້ນັ້ນ ຈະເກີດຂື້ນໃນດ້ານການແຕກຕ່າງກັນຂອງທີ່ດິນກຳນົດວິທີການຕີລາຄາ, ການເກີດມີການແຕກຕ່າງກັນຍ້ອນວິທີການເກັບກຳຂໍ້ມູນ ຫລືມີຫລາຍວິທີເກີດຂື້ນຢ່າງມີການປະສານຮ່ວມກັນ? ພາກ 3.1 ທວນຄືນການສຶກສາການສຳປະທານທີ່ດິນ ເຊິ່ງມີການພົວພັນເຖິງນະໂຍບາຍກ່ຽວກັບດິນ. ພາກ 3.2 ເຖິງ 3.4 ສັງເກດການສຶກສາສະເພາະກໍລະນີການສຳປະທານທີ່ດິນຂອງຂະແໜງການຕ່າງໆ. ສຸດທ້າຍ ພາກ 3.5 ແມ່ນການສຶກສາການພົວພັນການສຳປະທານທີ່ດິນໃນການຖາມເຖິງການພັດທະນາຢູ່ ສ.ປ.ປ.ລາວ.

### 3.1.1 <u>ການຄົ້ນຄວ້າກ່ຽວກັບນະໂຍບາຍທີ່ດິນ</u>

ການສຶກສາໃນພາກດັ່ງກ່າວນີ້ແມ່ນມາຈາກໄລຍະ II ຂອງໂຄງການຈັດແບ່ງປັນດິນ (LTP II) ເຊິ່ງໄດ້ຮັບເງິນກູ້ຢືມຈາກທະນາຄານໂລກ (WB) ແລະເງິນຊ່ວຍເຫລືອລ້າຈາກລັດຖະບານອົດສະຕາລີ ແລະ ເຢຍລະມັນ ເຊິ່ງຊ່ວຍເຫລືອທາງດ້ານທີ່ປຶກສາການຍັ້ງຢືນໃຫ້ທີ່ດິນ, ດ້ານການປົກຄອງ ແລະການຕີລາຄາ, ແລະ ນະໂຍບາຍທີ່ດິນ. ການສຳປະທານທີ່ດິນໄດ້ກາຍເປັນປະເດັນສຳຄັນໃນດ້ານນະໂຍບາຍ (ກະລຸນາເບິ່ງ Box 1: ການວັດແທກດິນໃຫ້ສຳປະທານ) ໃນຂະບວນການສຶກສາໂດຍເຢຍລະມັນ (GTZ) ໃນໄລຍະ II ຂອງໂຄງການຈັດສັນອອກໃບຕາດິນ LTP (2003-2007) ເຊິ່ງເຂົາເຈົ້າເປັນທັງຜູ້ປະຕິບັດ ແລະ ຜູ້ແນະນຳທີ່ພະຍາຍາມເຂົ້າໃຈດິນຂອງຂົງເຂດຊົນນະບົດໃຫ້ຖືກຕ້ອງ ແລະ ຊັດເຈນກ່ອນທີ່ຈະອອກໃບຕາດິນໂດຍຈະເຮັດເວລາໃດ ແລະຈະອອກໃບຕາດິນໃຫ້ກັບດິນເຂດຊົນນະບົດແນວໃດ? ພາກສ່ວນ GTZ ໄດ້ສຶກສານະໂຍບາຍດ້ານທີ່ດິນຕາມຂັ້ນຕອນແຕ່ລະໄລຍະ ໃນ 4 ຂົງເຂດ ໄດ້ສຶກສາທວດຄືນຢູ່ທີ່ນີ້ ແລະໄດ້ມີການພິມເຜີຍແຜ່. ການສຶກສາຂອງ LNRRIC ແລະ WB ຕ້ອງການແນໃສ່ກົນລະຍຸດການເຈລະຈາຫລາຍກວ່າ. ບາງຂໍ້ມູນແລະເອກະສານແມ່ນເປັນຂອງສາທາລະນະ ແລະບາງສ່ວນກໍ່ແມ່ນຂອງບຸກຄົນ[1].

**GTZ (ຈັນທະລາສີ ແລະເພື່ອນຮ່ວມງານ) 2005. ການສຶກສານະໂຍບາຍກ່ຽວກັບທີ່ດິນ 2: ຕະຫລາດທີ່ດິນໃນຂົງເຂດຕົວເມືອງ ແລະຊົນນະບົດຂອງ ສ.ປ.ປ.ລາວ**

ອົງການ GTZ ຂອງເຢຍລະມັນໄດ້ສຶກສາຕະຫລາດທີ່ດິນ ໃນປີ 2005 ໂດຍເຮັດວຽກຢູ່ພື້ນຖານ 3 ອາທິດຢູ່ແຂວງວຽງຈັນ ແລະ ແຂວງຈຳປາສັກ, ເຊກອງ, ອຸດົມໄຊ ແລະແຂວງຫລວງພະບາງ ເຊິ່ງໄດ້ວິເຄາະ "ດິນໃຫ້ເຊົ່າ ແລະດິນໃຫ້ສຳປະທານ" ເຊິ່ງຈະນຳໄປເປັນຫົວຂໍ້ສຳຄັນໃນການຄົ້ນຄວ້າໃນອະນາຄົດ. ການພົບເຫັນທີ່ເດັ່ນຊັດມີຄື: (1) ດິນລັດທີ່ໃຫ້ເຊົ່າ ແລະສຳປະທານໄດ້ມີການເພີ່ມຂື້ນ ອັນ

[1] ເບິ່ງ http://worldbank.org → *ໂຄງການ & ການປະຕິບັດ* → *ຊອກໂດຍ ປະເທດ/ພື້ນທີ່* → *ສ.ປ.ປ.ລາວ* ສຳລັບຂໍ້ມູນທີ່ມີພາຍໃຕ້ນະໂຍບາຍເປີດກວ້າງຂອງ ທະນາຄານໂລກ; ອາດຕິດຕໍ່ ຫ້ອງການທະນາຄານໂລກ, ວຽງຈັນ

ເນື່ອງມາຈາກຜົນຂອງ FDI ແຕ່ແມ່ນດິນທີ່ບໍ່ມີການຜະລິດ (ໄດ້ມີການລົບລ້າງຈາກຜູ້ລົງທຶນເປັນປະຈຳ, ແຕ່ລັດພັດບໍ່ໄດ້ມີການລົບລ້າງຫຍັງ); (2) ໄດ້ມີຫລາຍໆເຫດຜົນພ້ອມທັງ "ບົດລາຍງານວ່າດ້ວຍດິນຂອງລັດທີ່ໃຫ້ເຊົ່າ ແລະໃຫ້ສຳປະທານ ແມ່ນຍ້ອນໄດ້ຮັບອະນຸຍາດຈາກອຳນາດການປົກຄອງເມືອງ", "ບໍ່ມີການສັນຍາກັນຢ່າງຈະແຈ້ງ" ແລະ "ຂໍ້ກຳນົດບາງກົດໝາຍກໍ່ບໍ່ຈະແຈ້ງ" ສຳລັບສັນຍາກ່ຽວກັບການນຳໃຊ້ທີ່ດິນ. ນອກນັ້ນຍັງເຫັນວ່າ "ການຈ່າຍຄ່າເຊົ່າ ແລະສຳປະທານທີ່ດິນຍັງມີລາຄາ "ຕໍ່າຫລາຍ". ດັ່ງນັ້ນຄວາມຮັບຜິດຊອບເພື່ອອະນຸຍາດໃຫ້ເຊົ່າ ແລະສຳປະທານການນຳໃຊ້ດິນຂອງລັດຄວນໃຫ້ຈະແຈ້ງ ແລະ "ຕ້ອງການຄວາມຈຳເປັນຕ້ອງກຳນົດລະອຽດໃນອະນາຄົດ" ***(ສາມາດເອົາຂໍ້ມູນໄດ້ຈາກ GTZ ຢູ່ນະຄອນຫລວງວຽງຈັນ)***

**GTZ (ສຸແມນ ແລະເພື່ອນຮ່ວມງານ) 2005. ການສຶກສານະໂຍບາຍກ່ຽວກັບທີ່ດິນ 2: ດິນຂອງລັດທີ່ໃຫ້ເຊົ່າ ແລະໃຫ້ສຳປະທານຢູ່ ສ.ປ.ປ.ລາວ**

ການສຶກສາດັ່ງກ່າວໄດ້ອີງໃສ່ການລົງເຮັດວຽກຢູ່ພື້ນຖານບັນດາແຂວງຕ່າງໆເປັນໄລຍະເວລາ 3 ອາທິດເຊັ່ນ: ນະຄອນຫລວງວຽງຈັນ, ແຂວງຈຳປາສັກ, ສາລະວັນ, ສະຫວັນນະເຂດ ແລະ ຄຳມ່ວນ. ຜົນການສຶກສາໄດ້ຢັ້ງຢືນສິ່ງທີ່ພົບເຫັນມາຈາກການສຶກສາກ່ຽວກັບທີ່ດິນຄັ້ງທີ 2. ການພົບເຫັນມີດັ່ງນີ້ເ (1) ເຖິງແມ່ນວ່າດິນສຳປະທານ ແມ່ນດິນທີ່ໄດ້ມອບໃຫ້ຕາມກົນໄກຂອງປະເທດໃນການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດເຊັ່ນ: ໂຄງການໃຫຍ່ລະດັບປະເທດຄື ນ້ຳເທີນ 2 ເຊິ່ງເປັນໂຄງການພະລັງງານໄຟຟ້ານ້ຳຕົກ, ໂຄງການບໍ່ຄຳຢູ່ ເມືອງເຊໂປນ, ແຫລ່ງລາຍຮັບດ້ານການສຳປະທານເຫັນວ່າຢູ່ໃນລະດັບນ້ອຍທີ່ສຸດ ໂດຍອີງໃສ່ GDP ຂອງປະເທດ ແລະລາຍຮັບຈາກຊັບສິນບັດຂອງປະເທດ. ນັ້ນສະແດງໃຫ້ເຫັນໄດ້ວ່າ ລັດຖະບານລາວຍັງບໍ່ທັນໄດ້ກຳນົດ ຫລືພັດທະນາແຫລ່ງລາຍຮັບນີ້ໄດ້ເຕັມສ່ວນ. (2) ການຂາດລະບອບດຸ່ນດ່ຽງໃນຫລັກການການລົງທຶນຢູ່ຂັ້ນສູນກາງ ໄດ້ນຳໄປສູ່ການອະນຸຍາດໃຫ້ຫລາຍພາກສ່ວນເຂົ້າມາມີສ່ວນຮ່ວມ (ຕົວຢ່າງ ບໍ່ມີການກຳນົດການບໍລິການຢູ່ບ່ອນດຽວ) ໃນຂະນະທີ່ດິນຂອງລັດມີສ່ວນຮ່ວມ ແລະການມີເນື້ອທີ່ດິນຈຳກັດຫລາຍເກີນໄປເພື່ອໃຫ້ແຂວງ ແລະເມືອງສາມາດຈຳກັດການລົງທຶນຂອງຕ່າງປະເທດ ແລະ ເພື່ອການປ້ອງການລົງທຶນໂດຍກົງຈາກຕ່າງປະເທດເຊິ່ງອາດເຂົ້າມາໃນຮູບການແອບແຝງເພື່ອການພັດທະນາ ຍ້ອນຜົນປະໂຫຍດຈາກການເຈລະຈາທີ່ເບິ່ງຈາກນັກລົງທຶນ (3) ຂົງເຂດດັ່ງກ່າວແມ່ນຈຳກັດພື້ນທີ່ສຳປະທານເພາະ "ຖືກຈຳກັດເກີນໄປ" ແລະ "ສະເໜີແນະແຂວງເພື່ອກໍ່ໃຫ້ເກີດມີອຳນາດການອະນຸຍາດທາງດ້ານກົດໝາຍ (4) "ບັນຊີລາຍການສະຫລຸບຂອງທີ່ດິນແມ່ນສູນຫາຍ" ປະກອບກັບສະຖານະການທີ່ນັກລົງທຶນ "ຄົ້ນຫາທີ່ດິນທີ່ເໝາະສົມກັບເຂົາເຈົ້າ"; (5) "ນັກລົງທຶນທຸກທ່ານແມ່ນທວນຄືນການສັນຍານ້ອຍ ແລະມີການບັງຄັບໃຫ້ຄົ້ນຄືນສັນຍາ, ການໂຕ້ຖຽງກັນເລື່ອງຄ່າເສຍຫາຍ, ປັບໄໝ, ການສິ້ນສຸດສັນຍາ ແລະການໂຕ້ຖຽງກັນເລື່ອງລະງັບການສັນຍາ"; ການປະຕິບັດການຍອມໃຫ້ມີທີ່ດິນທີ່ບໍ່ເສຍຄ່າ - ການຂາຍທີ່ດິນເພື່ອການລົງທຶນ - ຕົວແທນບໍ່ຈຳເປັນຕ້ອງອຸດໜູນຕໍ່ນັກລົງທຶນ ແລະນອກຈາກ (ຖ້າເປັນໄປ

ໄດ້) ການລົງທຶນຮ່ວມກັນ (7) ເຖິງແມ່ນວ່າໂຄງການຍັງດໍາເນີນຢູ່, ການຕິດຕາມ ແລະກວດກາຂອງບັນດາກະຊວງຕ່າງໆຍັງນ້ອຍ ແລະຫ້ອງການຂອງສູນກາງ ແລະແຂວງແມ່ນຮັບຜິດຊອບການຄຸ້ມຄອງຊັບສິນບັດຂອງລັດ "ຍັງບໍ່ທັນໄດ້ຮັບຜົນສໍາເລັດໃນການສ້າງການເກັບເອກະສານ, ການຕິດຕາມ ແລະລະບົບການລາຍງານ" ***ເອກະສານມີຢູ່ GTZ ນະຄອນຫລວງວຽງຈັນ***

**Box 1: ການວັດແທກດິນສໍາປະທານ**

ການສໍາປະທານທີ່ດິນສ່ວນຫລາຍແມ່ນຄິດເປັນເງິນ (ຊະນິດ ເງິນດອນລ່າອາເມລິກາ), ພື້ນທີ່ (ເຮັກຕາຫລືຕາກິໂລແມັດ) ແລະ ເວລາ (ສ່ວນຫລາຍເປັນປີ). ເຫມືອນດັ່ງທີ່ໄດ້ກ່າວມາແລ້ວ, ເນື້ອທີ່ສາມາດອ້າງອີງເຖິງໄດ້ຫລາຍຢ່າງ ກໍານົດຕັ້ງແຕ່ການສໍາຫລວດ ແລະ ການຊອກຮູ້ຂອບເຂດຂອງເນື້ອທີ່ເພື່ອການພັດທະນາ ແລະການນໍາໃຊ້. ການຄິດໄລ່ດ້ານການເງິນຫມາຍເຖິງການຄໍານວນປະລິມານຂະຫນາດຂອງການລົງທຶນ (ສ່ວນຫລາຍແມ່ນການຄາດຄະເນເປັນຢ່າງລະອຽດຂຶ້ນສ່ວນ ຈົນເຖິງຄາດປະມານມູນຄ່າ ແລະຄໍານວນການຄໍ້າປະກັນ) ພ້ອມທັງແຫລ່ງລາຍຮັບທີ່ໄດ້ມາ. ຍ້ອນວ່າການສໍາປະທານມີຄວາມຫມາຍເຖິງການຈໍາກັດການນໍາໃຊ້ຫລາຍກວ່າການເປັນເຈົ້າຂອງທີ່ດິນຖາວອນ. ດັ່ງນັ້ນການນໍາໃຊ້ຕົວຈິງຈຶ່ງໄດ້ກໍານົດສໍາປະທານເປັນປີເປັນຫລັກ. ອາດເປັນໄປໄດ້ວ່າ ແນວຄວາມຄິດປັດຈຸບັນໄດ້ແນໃສ່ການລົງທຶນໂດຍເລັ່ງໃສ່ໃຫ້ມີຄວາມຕັ້ງໃຈປະຕິບັດລະບຽບຫລັກການ, ແນ່ໃສ່ທາງດ້ານການເງິນເຊິ່ງມີຂໍ້ສະດວກຫລາຍກວ່າການກໍານົດເອົາເນື້ອທີ່ດິນໃຫ້ເຊົ່າ (cf: GTZ 2006a: 80, ບັນທຶກທີ 5). ເຖິງແມ່ນວ່າຈະອ້າງອີງເຖິງພື້ນທີ່ເປົ້າຫມາຍແລ້ວກໍ່ຕາມ - ນອກຈາກນີ້ ການປະກົດຕົວເລັກໆນ້ອຍໆຂອງການລົງທຶນທີ່ມີເປົ້າຫມາຍຄ້າຍໆຄືກັນກໍ່ໄດ້ມີເລັກນ້ອຍ. ຈາກທັດສະນະຄະຕິຂອງການປະເມີນຜົນກະທົບທາງບວກ ແລະລົບແລ້ວ, ເນື້ອທີ່ດິນ ແລະໄລຍະເວລາໃຫ້ເຊົ່າເຊິ່ງອາດມີຄວາມສໍາຄັນຫລາຍ, ເຖິງແມ່ນສອງປະເດັນຍົກໃຫ້ເຫັນຄໍາຖາມເພີ່ມເຕີມສໍາລັບຕົວມັນເອງ: ມີເນື້ອທີ່ດິນທັງຫມົດເທົ່າໃດ ທີ່ປ່ຽນໄປໃຫ້ມີການສໍາປະທານທີ່ດິນ? ຈະມີຫຍັງເກີດຂຶ້ນສໍາລັບດິນໃຫ້ເຊົ່າ ແລະໃຫ້ສໍາປະທານ? ເວລາໃດຊຸມຊົນໃນທ້ອງຖິ່ນຈະໄດ້ຮັບຜົນປະໂຫຍດຈາກໂຄງການ ແລະອື່ນໆ

ນອກນັ້ນ, ເຂດທີ່ບໍ່ມີການກະທົບ ແລະ ເຂດທີ່ມີການກະທົບຈາກການສ້າງໂຄງການໄຟຟ້ານໍ້າຕົກ (ການຫາປາ ແລະນໍ້າຖ້ວມ) ແລະການຂຸດຄົ້ນບໍ່ແຮ່ (ມົນລະພິດທາງນໍ້າ) ທັງຫມົດແມ່ນອາດຮູ້ກັນດີແລ້ວ, ແລະຍັງມີການກະທົບຕໍ່ການເຄື່ອນຍ້າຍແຮງງານອີກດ້ວຍ (cf. Lyttleton ແລະທີມງານ 2004), ເຊິ່ງໄດ້ພັນລະນາສະພາບການຂອງການເຊົ່າດິນຂະຫນາດນ້ອຍຂອງເອກະຊົນ). ຄໍາຖາມກໍ່ວ່າ ພວກເຮົາຕ້ອງດໍາເນີນສືບຕໍ່ຊອກຫາວິທີການອັນເຫມາະສົມ ເພື່ອວັດແທກຜົນກະທົບຈາກການສໍາປະທານທີ່ດິນ.

**GTZ (Wehrmann ແລະທີມງານ) 2006b. ການສຶກສາກ່ຽວກັບນະໂຍບາຍທີ່ດິນ 5: ການຕະຫລາດກ່ຽວກັບດິນໃນຕົວເມືອງຂອງ ສ.ປ.ປ.ລາວ**

ການສຶກສາປະເດັນດັ່ງກ່າວແມ່ນອີງໃສ່ການຄົ້ນຄວ້າໄລຍະສີ່ອາທິດຢູ່ ແຂວງວຽງຈັນ, ແຂວງຫລວງພະບາງ, ແຂວງສະຫວັນນະເຂດ ແລະ ແຂວງອຸດົມໄຊ ເຊິ່ງໄດ້ເນັ້ນໃສ່ທີ່ດິນຂອງເອກະຊົນ ເຊິ່ງສຸດທ້າຍໄດ້ກາຍມາເປັນຮູບແບບດິນໃຫ້ສຳປະທານ. ດິນຂອງລັດກໍ່ດັ່ງທີ່ໄດ້ກ່າວມາແລ້ວ ແຕ່ເປັນໃນຮູບການທີ່ບອກເຖິງຂອບເຂດຊ່ອງຫວ່າງລະຫວ່າງຜູ້ທີ່ມີກຳມະສິດທີ່ດິນຂອງລັດ ແລະຂອງເອກະຊົນ. ໃນຂະນະທີ່ສົນທະນາລະບຽບການທາງດ້ານກົດຫມາຍ ເຊິ່ງເປັນຮູບການທົ່ວໆໄປໃນທາງບວກ, ປະໂຫຍດການສົນທະນາກໍ່ຈົບລົງໃນປັດຈຸບັນທັນດ່ວນພ້ອມກັບທີມງານທີ່ກ່ຽວຂ້ອງ ເຊິ່ງກໍ່ແມ່ນກໍລະນີດິນຂອງລັດໃຫ້ບຸກຄົນທີ່ບໍ່ໄດ້ມີການຢັ້ງຢືນມອບໃຫ້ (20). ***ເອກະສານມີຢູ່ທີ່ GTZ ນະຄອນຫລວງວຽງຈັນ***

**GTZ (Seidan ແລະທີມງານ) 2007. ການສຶກສາກ່ຽວກັບນະໂຍບາຍທີ່ດິນ 6: ດິນຊຸມຊົນທີ່ມີການບັນທຶກຢູ່ ສ.ປ.ປ.ລາວ**

ອີງຕາມການເຮັດວຽກ 6 ອາທິດທີ່ພື້ນທີ່ຕົວຈິງພ້ອມສຶກສາເອກະສານຕ່າງໆ ແລະ ສອບຖາມບຸກຄົນທີ່ກ່ຽວຂ້ອງຢູ່ນະຄອນຫລວງວຽງຈັນ, ການສຶກສາຂອງ GTZ 2007 ກ່ຽວກັບທີ່ດິນຊຸມຊົນທີ່ມີການບັນທຶກ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງທີ່ມີການກະທົບໃນທາງລົບຂອງການສຳປະທານທີ່ດິນ ກໍ່ແລ້ວແຕ່ເຫດຜົນທີ່ຈະເປັນໄປໄດ້: “ການເບິ່ງ ແລະຄິດທວນຄືນກ່ຽວກັບບູລິມະສິດການອອກໃບຕາດິນຢູ່ລາວ ເຫັນວ່າມີຄວາມຈຳເປັນເພື່ອຢຸດທ່າອ່ຽງໄປຫາການຫມູນໃຊ້ທີ່ດິນຂອງຊຸມຊົນໄປນຳໃຊ້ໃນເຫດຜົນອື່ນໆ, ເຊິ່ງສ່ວນຫລາຍແມ່ນທາງດ້ານກະສິກຳ ແລະການປູກຕົ້ນໄມ້“. ເງື່ອນໄຂການຊອກຫາແມ່ນ (1) ດິນຂອງຊຸມຊົນນຳໃຊ້ຢູ່ໃນປະເທດກວມເອົາພູມີປະເທດທີ່ກວ້າງໃຫຍ່ໄປຕາມຄວາມຫລາກຫລາຍຂອງເຜົ່າຊົນ. (2) ທຸກໆຊຸມຊົນທີ່ໄດ້ລົງຢ້ຽມຍາມ, “ດິນລວມຂອງຊຸມຊົນກຸ່ມນຳໃຊ້ທີ່ດິນໄດ້ມີບົດບາດສຳຄັນຕໍ່ກັບຊີວິດການເປັນຢູ່ທີ່ດີຂອງຊຸມຊົນ“ ໄດ້ມີການຢັ້ງຢືນການນຳໃຊ້ທີ່ດິນໃຫ້ຊຸມຊົນ “ສິ່ງດັ່ງກ່າວແມ່ນໄດ້ປະຕິບັດຕາມເປົ້າຫມາຍຈຸດປະສົງແຫ່ງຊາດ ກ່ຽວກັບການຫລຸດຜ່ອນຄວາມທຸກຍາກ ແລະ ການນຳໃຊ້ທີ່ດິນແບບຍືນຍົງທີ່ພົວພັນເຖິງຊັບພະຍາກອນທຳມະຊາດຕ່າງໆຢູ່ພາຍໃນປະເທດ; ແລະ (3) ການຫັນປ່ຽນການຄຸ້ມຄອງທີ່ດິນຂອງຊຸມຊົນໄປໃນຮູບການແຂງກະດ້າງຕ້ອງໄດ້ມີການປ່ຽນແປງດ້ານຕົວຈິງ ກໍ່ຄືດ້ານກົດຫມາຍເປັນຕົ້ນ, ແຕ່ກໍ່ມີທາງເລືອກບາງທາງເຫມືອນກັນ. ***ເອກະສານມີຢູ່ GTZ ນະຄອນຫລວງວຽງຈັນ***

**ຄະນະຄຸ້ມຄອງທີ່ດິນແຫ່ງຊາດ (NLMA), ສູນກາງຂໍ້ມູນຂ່າວສານດ້ານທີ່ດິນ ແລະການຄົ້ນຄວ້າແຫລ່ງ ຊັບພະຍາກອນທຳມະຊາດ (LNRRIC) 2007. ບັນຊີລາຍການການສຳປະທານທີ່ດິນແຫ່ງຊາດ**

ຕະຫລອດໄລຍະຫນຶ່ງເດືອນທີ່ເຮັດວຽກຢູ່ພື້ນທີ່ຕົວຈິງ, ຄະນະຄຸ້ມຄອງທີ່ດິນແຫ່ງຊາດໄດ້ລົງເຮັດວຽກຢູ່ທຸກໆແຂວງ ເພື່ອຮວບຮວມເອກະສານຂໍ້ມູນກ່ຽວກັບການສຳປະທານທີ່ດິນຢູ່ຂະແຫນງການກຳສິກຳ ແລະບໍ່ແຮ່. ເອກະສານເກັບກຳຈາກຫລາຍຫນ່ວຍງານຫ້ອງການປະກອບດ້ວຍ ຫ້ອງການການວາງແຜນ ແລະລົງທຶນຢູ່ແຂວງ, ຫ້ອງການກະສິກຳ ແລະປ່າໄມ້ແຂວງ, ຫ້ອງການຄຸ້ມຄອງທີ່ດິນຂອງແຂວງ, ແຕ່ເອກະສານເນື້ອໃນບໍ່ໄດ້ກວດຄືນ, ຫລືວ່າໄດ້ກວດຢູ່ກັບທີ່ ຫລືມີການຊັກຖາມຄືນ - ທັງນີ້ເນື່ອງຈາກເວລາມີຈຳກັດ. ເກືອບທັງຫມົດຂອງຂໍ້ມູນທີ່ເກັບໄດ້ບົ່ງບອກເຖິງລັກສະນະຂອງໂຄງການ, ສະຖານທີ່ຕັ້ງຂອງໂຄງການ, ເນື້ອທີ່, ໄລຍະເວລາການດຳເນີນໂຄງການ ແລະຫນ່ວຍງານທີ່ໄດ້ຮັບອະນຸຍາດ ແມ່ນໄດ້ມາຈາກ ບົດຂໍ້ຕົກລົງຂອງການລົງທຶນ. ຂໍ້ມູນອື່ນໆສຳລັບການຄັດເລືອກໂຄງການບົດລາຍງານການສຳຫລວດຂອງບົດວິພາກເສດຖະກິດ ແລະບົດສັນຍາ. ຂໍ້ມູນດັ່ງກ່າວກຳລັງນຳເຂົ້າວິເຄາະທາງດ້ານເນື້ອໃນ ແລະຄວາມຄົບຖ້ວນຂອງບົດ ພ້ອມດ້ວຍການກວດຄືນຂໍ້ມູນ ແລະຕິດຕາມແຜນການການລົງທຶນຢູ່ສູນກາງ ແລະກະຊວງກະສິກຳ ແລະປ່າໄມ້ທີ່ໄດ້ວາງຕາຕະລາງເວລາທີ່ຈະເລີ່ມໃນເດືອນສິງຫາ 2000. ***ສາມາດຮັບຂໍ້ມູນໄດ້ຈາກ LNRRIC***

**GTZ (ກຳລັງດຳເນີນການ). ການສຶກສາການຕະຫລາດທີ່ດິນຊົນນະບົດ**
***ສາມາດເອົາຂໍ້ມູນຈາກ GTZ ນະຄອນຫລວງວຽງຈັນ***

**GTZ (ກຳລັງດຳເນີນການ). ການສຶກສາການຂັດແຍ້ງ ແລະການແກ້ໄຂບັນຫາຂອງທີ່ດິນ**
***ສາມາດເອົາຂໍ້ມູນຈາກ GTZ ນະຄອນຫລວງວຽງຈັນ***

**ທະນາຄານໂລກ, ອົງການຊ່ວຍເຫລືອອົດສຕາລີ, ກົມທີ່ດິນ (ກຳລັງຈະມາເຖິງ). ໂຄງການໃບຕາດິນລາວໄລຍະທີ 2 ໄດ້ສັງລວມ ແລະກະກຽມການສຶກສາໄລຍະທີ 3**
***ສາມາດເອົາຂໍ້ມູນໄດ້ຈາກທະນາຄານໂລກ, ອົງການຊ່ວຍເຫລືອອົດສຕາລີ ຫລື ກົມທີ່ດິນ***

## 3.2. ຂະແຫນງການບໍ່ແຮ່

ຈາກການຢັ້ງຢືນຄວາມເປັນຈິງຈາກການທອບຄືນກ່ຽວກັບການປົກຄຸມຂອງບັນດາຊັບພະຍາກອນຕ່າງໆເຊິ່ງຄວາມຮູ້ກ່ຽວກັບການສຳປະທານທີ່ດິນ ໃນຂະແຫນງການບໍ່ແຮ່ໄດ້ມີການສຸມໃສ່ຢ່າງສູງທາງດ້ານການກະທຳໃຫ້ໄດ້ດີ ໂດຍມີຂອບເຂດອັນກວ້າງຂວາງຂະຫຍາຍອອກຕໍ່ໄປ. ບັນດາເອກະສານຕ່າງໆເກືອບທັງຫມົດແມ່ນໄດ້ພິມເຜີຍແຜ່ຈາກ ທະນາຄານໂລກ ຫລືບໍ່ແຮ່ເຊໂປນ, ເຊິ່ງບົດລາຍງານດັ່ງກ່າວໄດ້ອຳນວຍຂໍ້ສະດວກຕ່າງໆທີ່ນຳໄປສູ່ການພັດທະນາທາງດ້ານອຸດສາຫະກຳ ແຕ່ພ້ອມດຽວກັນກໍ່ຍົກໃຫ້ເຫັນເຖິງຄຳຖາມກ່ຽວກັບຄວາມໂປ່ງໃສ ແລະຄວາມເປັນເອກະລາດ ເຊິ່ງຜູ້ເບິ່ງດ້ານອຸດສາຫະກຳກໍ່ຕ້ອງຄຳນຶງເຖິງຄວາມຍືນຍົງຂອງສ່ວນລວມ (RTEA; ການປະເມີນຢ່າງວ່ອງໄວດ້ານການຄ້າ

ແລະ ສິ່ງແວດລ້ອມ 2007, ຕອນ 3.5 ລຸ່ມນີ້) ຖ້າຫາກມີຄວາມຍືນຍົງທາງດ້ານຜູ້ໃຫ້ການສະໜັບສະໜູນກໍ່ເວົ້າໄດ້ວ່າມີຄວາມຈຳເປັນທາງດ້ານການປົກຄອງທີ່ດີ ແລະ ມີການພັດທະນາແບບຍືນຍົງ. ແຫລ່ງທີ່ມາດັ່ງກ່າວໄດ້ຂະຫຍາຍອົງກອ້າງໃຫ້ຜູ້ເປັນເຈົ້າການເຂົ້າຮ່ວມ ໃນການຖົກຖຽງກັນໃນລະດັບສາກົນ ກ່ຽວກັບການພັດທະນາແບບຍືນຍົງໃນຂະແໜງການບໍ່ແຮ່ ຈົນກ້າວໄປເຖິງຂະແໜງອຸດສາຫະກຳວ່າຈ້າງຜູ້ຊ່ຽວຊານທີ່ປຶກສາຈົນໄປເຖິງພາກສ່ວນທີ່ເຕັມໃຈເຂົ້າຮ່ວມຂະບວນການ ກ້າວໄປເຖິງການກວດກາການຈັດຕັ້ງທີ່ປາສະຈາກການມີໜ້າຂອງພະນັກງານຢ່າງເປັນທາງການເຂົ້າຮ່ວມກໍ່ສາມາດເຮັດໄດ້ຢູ່ໃນລາວ. ຈາກທັງໝົດຂະແໜງການທີ່ໄດ້ກວດກາຄືນແລ້ວນັ້ນ, ຂະແໜງບໍ່ແຮ່ໄດ້ມີການປັບປຸງຢ່າງໄວທີ່ສຸດຈາກບ່ອນທີ່ວ່າ ເປັນບ່ອນປັບລະບຽບທາງດ້ານຫລັກການນະໂຍບາຍຢູ່ສູນກາງ ເຊິ່ງໄດ້ປະກົດມາແລ້ວທີ່ສູນວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມ (STEA) ແລ້ວກໍ່ໄດ້ສ້າງຕັ້ງການຄຸ້ມຄອງທີ່ດີນຢູ່ສູນກາງຂື້ນ (ລາຍງານຈາກໜັງສືພິມວຽງຈັນທາຍມ໌) ເຊິ່ງກົມທໍລະນີສາດ ແລະບໍ່ແຮ່ກຳລັງດຳເນີນການກວດຄືນ ກ້າວໄປເຖິງການສາມາດລົບລ້າງການສຳປະທານບໍ່ແຮ່ທີ່ມີຢູ່ໃນປັດຈຸບັນນີ້.

**ທະນາຄານໂລກ (Boland ແລະ Walker) 2001. ຂະແໜງການບໍ່ແຮ່ຢູ່ ສ.ປ.ປ.ລາວ: ຄວາມຍືນຍົງທາງດ້ານສັງຄົມ ແລະສິ່ງແວດລ້ອມ: ຜົນຂອງທີມງານທະນາຄານໂລກກ່ຽວກັບພາລະກິດການຕາມຫາຄວາມຈິງ.**

ບົດລາຍງານດັ່ງກ່າວແມ່ນການເຮັດວຽກຢູ່ພາກສະໜາມໄລຍະ 2 ອາທິດຂອງຕົ້ນປີ 2001. ໃນເວລານັ້ນໄດ້ປະເມີນຂະແໜງການບໍ່ແຮ່ຂອງລາວຈົນມາເຖິງຈຸດບ່ອນວ່າຈະໄດ້ມີການຂະຫຍາຍ ເປີດກວ້າງອອກໄປເລື້ອຍໆ, ແຕ່ກໍ່ປະກົດມີການຖືກຂັດຂວາງຍ້ອນປະເດັນຂອງຕາໜ່າງລະບົບໂຄງລ່າງຂອງນະໂຍບາຍ, ລະບຽບຫລັກການທີ່ຍັງບໍ່ແນ່ນອນ, ບັນຫາການນຳເຂົ້າ-ການສົ່ງອອກ, ຂາດຄວາມຮູ້ກ່ຽວກັບຄວາມເໝາະສົມທາງດ້ານເງິນມັດຈຳ ແລະ ໃນໄລຍະຜ່ານມານີ້ກໍ່ໄດ້ມີການປິດສອງໂຮງງານບໍ່ແຮ່ (ບໍລິສັດບໍ່ຄຳຢູ່ ແຂວງຫລວງພະບາງ ແລະ ບໍລິສັດເພັດຢູ່ ແຂວງບໍ່ແກ້ວ) “ເນື່ອງຈາກມີບັນຫາທາງດ້ານກົດໝາຍ ແລະສິ່ງແວດລ້ອມ“. ການພົບເຫັນປະກອບດ້ວຍ: (1) ໃນເວລາທີ່ມີໃບອະນຸຍາດໃຫ້ຜູ້ດຽວ, ພັດມີ 13 ໃບອະນຸຍາດໃຫ້ຂຸດຄົ້ນ ແລະ 28 ໃບອະນຸຍາດໃຫ້ລົງຫີນຊອກຄົ້ນຫາບໍ່ແຮ່ກວມເອົາຖ່ານຫີນລິກໄນ, ຍິບຊຳ, ແຮ່ທາດທີ່ໃຊ້ເຄືອບໂລຫະ,ສານປະກອບຂອງໂປຕາຊຽມ ແລະການຜະລິດເກືອ. ສ່ວນຢູ່ ເຊໂປນ ແລະ ພູເບ້ຍ ແມ່ນຢູ່ໃນ “ໄລຍະພັດທະນາກະກຽມ“; (2) ມີຄວາມຫຍຸ້ງຍາກ “ໃນການປະສານງານກັບອົງກອນຕ່າງໆຢູ່ຂັ້ນສູນກາງ ແລະແຂວງ” ເຊິ່ງເຮັດໃຫ້ການປັບປຸງລະບຽບຫລັກການໃຫ້ເປັນໄປຕາມຂໍ້ຕົກລົງກໍ່ມີຄວາມຫຍຸ້ງຍາກ (ກົມທໍລະນີສາດແລະບໍ່ແຮ່ ແລະອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ) ທັງນີ້ເພື່ອໃຫ້ຖືກຕ້ອງ ແລະປະຕິບັດໄປຕາມການກໍານົດຫລັກການ ການປະເມີນຜົນທາງດ້ານສິ່ງແວດລ້ອມ, ເຮັດໃຫ້ມີການແກ່ຍາວອອກໄປຫລາຍປີ; (3) ຄວາມຮັບຜິດຊອບດ້ານ ການປະເມີນຜົນກະທົບທາງດ້ານສິ່ງແວດ

ລ້ອມ ແລະສັງຄົມໄດ້ສະເຫນີໃຫ້ຢູ່ອີງການວິທະຍາສາດ ເຊິ່ງໃຫ້ການອົບຮົມແກ່ ພະນັກງານຂອງ ກົມທໍລະນີສາດແລະບໍ່ແຮ່ (ທາງດ້ານວິຊາທໍລະນີວິທະຍາ, ດ້ານບໍແຮ່, ດ້ານວິສະວະກໍາແລະອື່ນໆ) ແລະໃນຄວາມເປັນຈິງ "ຄວາມສໍາຄັນສໍາລັບການໃຫ້ການອົບຮົມທາງດ້ານວິທະຍາສາດສັງຄົມ ໂດຍພາຍໃຕ້ອີງການວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມກໍ່ໄດ້ມີການຮັບຮູ້ຢູ່ໃນແຜນປະຕິບັດງານຂອງສິ່ງແວດລ້ອມແຫ່ງຊາດມາແລ້ວ" ເອກະສານປີ 2000; (4) ພາກສ່ວນທີ 3 ເຂົ້າກວດກາໂດຍສະເພາະໂຄງການໃຫຍ່ທີ່ມາໃຫມ່ ເຊິ່ງແມ່ນວິທີການຫນຶ່ງເພື່ອກໍານົດລະບຽບຫລັກການຢ່າງຈະແຈ້ງ ຫລີກເວັ້ນການຊໍ້າຂອງໂຄງການ ພ້ອມກັນນັ້ນກໍ່ສ້າງຄວາມອາດສາມາດໃຫ້ແກ່ພະນັກງານທີ່ເຮັດວຽກກັບລະບຽບຫລັກການ; (5) ເຫັນວ່າມີຄວາມສ່ຽງກ່ຽວກັບການຈັດລະບຽບການຢູ່ແຕ່ສູນກາງໂດຍກໍານົດ"ການບໍລິການບ່ອນດຽວ" ວິທີການດັ່ງກ່າວນີ້ "ໃນເມື່ອຍັງຂາດເຂີນຂໍ້ແນະນໍາອັນຈະແຈ້ງ ແຂວງຈະມີບົດບາດບໍ່ເປັນເຈົ້າການ ແລະການພັດທະນາແຫລ່ງຊັບພະຍາກອນທີ່ເປັນທ່າແຮງ ກໍ່ຈະອີງໃສ່ແຕ່ປັດໃຈຈາກພາຍນອກ ໂດຍສະເພາະແມ່ນໄປຕາມແຜນຍຸດທະສາດຂອງເຂົາ ໂດຍກາຍໄປເປັນບົດບັນຍັດໃຫ້ປະຕິບັດຕາມ"; ແລະ (6) ໃນຂະນະທີ່ສິດໃນການທົດແທນຄືນໄດ້ມີການຮັບຮູ້ ກໍ່ໄດ້ມີຂອບຂອງການກໍານົດດິນທີ່ນໍາໃຊ້ ໂດຍສະເພາະການພົວພັນເຖິງການເຄື່ອນຍ້າຍສະຖານທີ່ປູກຝັງຢູ່ເລື້ອຍໆ ເຊິ່ງແມ່ນຮູບການທີ່ບໍ່ມີດິນຖາວອນຢູ່ເຂດເນີນສູງສໍາລັບການເພາະປູກ ແລະການເກັບພືດຜົນຜະລິດຈາກປ່າໄມ້) ສໍາລັບການທົດແທນຄືນທີ່ຖືກຕ້ອງຕາມກົດຫມາຍແມ່ນບໍ່ໄດ້ຖືກຮັບຮອງເອົາໂດຍກົດຫມາຍ ຫລືຈາກຕົວຈິງ" (ເນັ້ນຫນັກຈາກຕົ້ນສະບັບ; ເບິ່ງ Box 2: ການໃຫ້ສິດຕໍ່ກັບຊັບສົມບັດ)

***ສາມາດຫາຂໍ້ມູນທີ່*** *http://rspas.anu.edu.au/papers/rmap/Lao_report.pdf*

**Box 2: ທິດສະດີກ່ຽວກັບການນໍາໃຊ້ເຄື່ອງມື: ການໃຫ້ສິດຕໍ່ກັບຊັບສົມບັດ**

ແນວຄວາມຄິດ*ການໃຫ້ສິດ*ໄດ້ຖືກພັດທະນາໂດຍນັກເສດຖະສາດ Amartya Sen (1981) ທີ່ອ້າງເຖິງຫົນທາງໄປສູ່ຄວາມຫມາຍຂອງການພຽງພໍຢູ່ໄດ້, ຫລືວ່າໂດຍກົງແມ່ນການຜະລິດອາຫານ ຫລືວ່າໂດຍທາງອ້ອມແມ່ນການຫາເງິນຊື້ອາຫານ. ກົງກັນຂ້າມກັບຊັບສົມບັດທີ່ມີການຮັບຮູ້ຢູ່ໃນລະບົບການເປັນເຈົ້າຂອງຢ່າງເປັນທາງການ;ແຕ່ບາງເທື່ອກໍ່ບໍ່ແມ່ນ. ພັດທະນາກໍ່ຄືການອະທິບາຍວ່າບັນດາປະເທດທີ່ໄດ້ຮັບສະບຽງອາຫານຢ່າງພຽງພໍ ແລະເຫມາະສົມ ແຕ່ເຖິງປານນັ້ນກໍ່ຍັງມີຄົນອຶດຫິວຢູ່. ການໃຫ້ສິດໄດ້ຊ່ວຍໃຫ້ທ່ານ Sen ອະທິບາຍໄດ້ເຖິງປະກົດການຂອງ "ຄ່າຄວາມອຶດຫິວ", ໃນນັ້ນບັນດາກຸ່ມຄົນທຸກຍາກມີຄວາມອຶດຫິວຍ້ອນວ່າເຂົາບໍ່ມີວິທີການທີ່ຈະຊອກຫາອາຫານໄດ້. ຈຸດສໍາຄັນສໍາຫລັບທ່ານ Sen ບໍ່ໄດ້ຫມາຍຄວາມວ່າຈະມີວິທີການໃດທີ່ຈະເປັນເຈົ້າຂອງຊັບສົມບັດດັ່ງກ່າວ, ແຕ່ຫມາຍຄວາມວ່າເຂົາເຈົ້າຄວນລິເລີ່ມເປັນເຈົ້າການຊຸກຍູ້ດ້ວຍຕົນເອງວ່າອັນໃດທີ່ເຂົາເຈົ້າມີ ແລະເຮັດໃຫ້ເພື່ອໄດ້ມາເຊິ່ງສະບຽງອາຫານທີ່ພຽງພໍ ເພື່ອຄວາມຢູ່ໄດ້ (ວິທີການໃຫ້ສິດໂດຍມີກົນລະຍຸດໃຫ້). ຄວາມແຕກຕ່າງລະຫວ່າງ ຊັບສົມບັດ ແລະການໃຫ້ສິດມີຄວາມສໍາຄັນ ກ່ຽວກັບຄໍາຖາມວ່າ ລະບົບສະຫນອງສະບຽງອາຫານ ເຊິ່ງຍັງບໍ່ທັນເປັນໄປຕາມການກໍານົດ ແລະ ກໍ່ບໍ່ສາມາດຮັບປະກັນໄດ້ ໂດຍການຮັບຮູ້ທາງດ້ານການພົວພັນຢ່າງເປັນທາງການຂອງຊັບສົມບັດຕ່າງໆ ແຕ່ເຖິງຢ່າງນັ້ນກໍ່ຕາມ ກໍ່ຍັງຮັບຮູ້ຢ່າງເປັນກົດຫມາຍປະຕິບັດກັນມາເລື້ອຍໆຢູ່ທີ່ທ້ອງຖິ່ນດັ່ງກ່າວ.

**FOEI (Harbinson, Rod) 2003. ການລອບທຳຮ້າຍຊີວິດຢູ່ໃນລາວ: ການຄັດຄ້ານການຂະຫຍາຍໂຄງການບໍ່ທອງແດງໄລຍະ 2 ຂອງບໍລິສັດ Oxiana ຢູ່ ສ.ປ.ປ.ລາວ**

ໃນຂະນະທີ່ກຳລັງຂຽນບົດນີ້ກໍ່ແມ່ນໄລຍະທີ່ Oxiana ສະເຫນີຂະຫຍາຍກິດຈະການຈາກບໍ່ຄຳ (ການຜະລິດກິດຈະກຳຂອງໂຄງການບໍ່ຄຳເຊໂປນໄດ້ເລີ່ມຂຶ້ນທີ່ເດືອນທັນວາ ປີ 2002) ໄປຂະຫຍາຍກິດຈະການໂຄງການບໍ່ທອງແດງເຊິ່ງກຳລັງຈະດຳເນີນ, ບົດລາຍງານນີ້ໄດ້ມີຄວາມພະຍາຍາມ (ແຕ່ບໍ່ໄດ້ຮັບຜົນ) ເພື່ອເອົາຊະນະທະນາຄານເພື່ອການລົງທຶນຂອງເອີຣົບ ເພື່ອບໍ່ໃຫ້ທະນາຄານນີ້ປ່ອຍເງິນ 70 ລ້ານດອນລ້າ ເຊິ່ງແມ່ນເງິນກູ້ຢືມສຳລັບຂະຫຍາຍໂຄງການບໍ່ທອງແດງຢູ່ເມືອງເຊໂປນ. ສິ່ງທີ່ພົບເຫັນມີດັ່ງນີ້: (1) ທະນາຄານໂລກ ແລະ ບໍລິສັດສົ່ງອອກທາງດ້ານການເງິນ ແລະປະກັນໄພຂອງອົດສຕາລີ "ກໍ່ໄດ້ຮັບຮູ້ນຳກັນວ່າໂຄງການດັ່ງກ່າວມີຜົນກະທົບໃສ່ສິ່ງແວດລ້ອມເຖິງຂັ້ນລະດັບ A, ນັ້ນແມ່ນລັກສະນະທີ່ສ້າງຄວາມເສຍຫາຍອັນໃຫຍ່ຫລວງໃຫ້ແກ່ສະພາບແວດລ້ອມ" ແລະ, ໂດຍອີງໃສ່ຄຳເຫັນຂອງທະນາຄານໂລກກໍ່ໄດ້ຊີ້ໃຫ້ເຫັນວ່າ ໂຄງການດັ່ງກ່າວຈະມີຜົນກະທົບໃສ່ສິ່ງແວດລ້ອມຢ່າງເດັ່ນຊັດໄປທາງດ້ານແງ່ລົບ ເຊິ່ງມີຄວາມຮູ້ສຶກໄດ້ເປັນຢ່າງດີ ໂດຍສະເພາະທີ່ມີຮູບການຕ່າງໆໃນສິ່ງທີ່ບໍ່ຄາດຄິດກໍ່ສາມາດເກີດຂຶ້ນໄດ້; (2) ທະນາຄານເພື່ອການລົງທຶນຂອງເອີຣົບໄດ້ມີວິທີການມາດຕະຖານຕ່ຳກວ່າທະນາຄານໂລກ, ດັ່ງນັ້ນ ບໍລິສັດ Oxiana ຈຶ່ງຖືກປະຕິເສດ ແລະບໍ່ໄດ້ຮັບທຶນ; (3) ເຫມືອນດັ່ງປະທານຂອງທະນາຄານເພື່ອການລົງທຶນຂອງເອີຣົບໄດ້ປະກາດວ່າ ທະນາຄານບໍ່ມີທາງໃດທີ່ຈະວາງເງື່ອນໄຂໃສ່ໃຫ້ເງິນກູ້ທີ່ກ່ຽວພັນເຖິງສັງຄົມ ແລະ ສິ່ງແວດລ້ອມ ໃນເມື່ອໂຄງການຢູ່ນອກກຸ່ມສະຫະພັນເອີຣົບ; (4) ການສຶກສາການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະສັງຄົມສຳລັບຂະຫຍາຍກິດຈະການຂອງໂຄງການບໍ່ທອງແດງກໍ່ມີລັກສະນະໃຫ້ເຫັນຢ່າງຈະແຈ້ງລ້ອນແຕ່ອີງໃສ່ການສຶກສາຄັ້ງກ່ອນ ກ່ຽວກັບໂຄງການຂຸດຄົ້ນບໍ່ຄຳ ເຊິ່ງວິທີການດັ່ງກ່າວກໍ່ເຮັດໄປຢ່າງບໍ່ພໍໃຈເຊັ່ນວິທີການແຕກຕ່າງກັນຢ່າງສິ້ນເຊີງ ຄືການໃຊ້ [ຂູນຟູຣິກແທນທີ່ຈະເປັນທາດໄຊຢາໄນ[2]], ທາງດ້ານພູມສາດກໍ່ກາຍເປັນຫລຸມໃຫຍ່ ແລະສະຖານທີ່ຂຸດຄົ້ນກໍ່ເກືອບຫມົດໄປແລ້ວເຊິ່ງມີລັກສະນະແຕກຕ່າງ. ສຳລັບໂຄງການບໍ່ທອງແດງ ແມ່ນຕ້ອງການເນື້ອທີ່ກວ້າງແຂວງ ແລະ; (5) ອາດມີຜົນກະທົບຈາກເສດເຫລືອຂອງທາດໄຊຢາໄນ, ການປະກອບຂອງທາດອາຊິດ ແລ້ວໄຫລໄປຕາມຮ່ອງ, ແລະມີຜົນກະທົບຍ້ອນການເຊາະເຈື່ອນຂອງດິນ ເຊິ່ງກະທົບໃສ່ວຽກງານການປະມົງ ເຊິ່ງປາດັ່ງກ່າວກໍ່ຈະບໍ່ມີບ່ອນອາໄສຍ້ອນນ້ຳຂຸ່ນ

***ສາມາດເອົາຂໍ້ມູນທີ່*** *www.foei.org/en/publication/pdfs/laos.pdf*

**Jones ແລະທີມງານ (2004?) ການພັດທະນາຊຸມຊົນ ແລະໂຄງການເຊໂປນ**

ເອກະສານດັ່ງກ່າວແມ່ນການອະທິບາຍທຶນສະຫນັບສະຫນູນລ້າຂອງ ບໍລິສັດ Oxiana ເພື່ອປະຕິບັດກິດຈະກຳຢູ່ທ້ອງຖິ່ນຂອງເຂດ ເມືອງເຊໂປນ ຈະອະທິບາຍບັນລະຍາຍເຖິງບ່ອນວ່າໂຄງການໄດ້ດຳ

[2] www.foei.org/en/publications/link/mining/12case.html

ເນີນ ແນວຄວາມຄິດກ່ຽວກັບ "ສິດທິໃນສັງຄົມ" (Nelson 2006) ເພື່ອການປະຕິບັດງານຂອງບໍ່ແຮ່ເຂດເມືອງເຊໂປນ. ອີງຕາມຄະນະທີມງານ (ຄະນະທີມງານມາຈາກ ບໍລິສັດທີ່ປຶກສາຈາກ Enesar Consulting Pty Ltd.), ແນວຄວາມຄິດກ່ຽວກັບສິດທິຂອງສັງຄົມແມ່ນອົງປະກອບທີ່ມີຈຸດເດັ່ນ ທາງດ້ານການປະຕິບັດຕົວຈິງ. ທັງນີ້ຍ້ອນວ່າຢູ່ບ່ອນໃດສິດທິຂອງສັງຄົມຫາກຕ້ອງການຮັກສາໄວ້ຄືເກົ່າຕ້ານກັບການປ່ຽນແປງທາງດ້ານເສດຖະກິດສັງຄົມຂອງທ້ອງຖິ່ນ ແລະ ພື້ນຖານຄວາມຮູ້ທາງດ້ານວັດທະນາທໍາກໍ່ມີການປັບປຸງໃຫ້ດີຂື້ນ, ຄວາມຮັ່ງມີ ຫລືຄວາມອຸດົມສົມບູນພັດເຕີບໃຫຍ່ ແລະພັດທະນາບໍ່ສະເຫມີກັນ - ແລະໃນເວລານັ້ນກໍ່ຈະເກີດໃຫ້ມີຄວາມຫວັງສູງຂື້ນ. ນັ້ນສະທ້ອນໃຫ້ເຫັນຢ່າງຈະແຈ້ງ: ໂຄງການສິດທິຂອງສັງຄົມຕ້ອງການໃຫ້ມີການພັດທະນາເສດຖະກິດສັງຄົມຢ່າງຕໍ່ເນື່ອງຖ້າຫາກວ່າຕ້ອງການຮັກສາບາດກ້າວດັ່ງກ່າວໄປກັບການປ່ຽນແປງນີ້, ແລະໃຫ້ສືບຕໍ່ເບິ່ງຜູ້ທີ່ໄດ້ຮັບການກະທົບຈາກໂຄງການວ່າຄືແມ່ນ "ສິ່ງທີ່ດີ ແລະສົມເຫດສົມຜົນທີ່ໄດ້ກະທໍາຢູ່" ແລະໃຫ້ຮູ້ວ່າ "ບໍ່ມີສິ່ງນັ້ນຄືກັນກັບປະຕິບັດໃສ່ແຕ່ກັບກະດານແຜ່ນດຽວເທົ່ານັ້ນ". ບົດລາຍງານບົດນີ້ໄດ້ໃຫ້ບົດຮຽນບາງບົດຮຽນທີ່ລວມມີ (1) ເຖິງຈະມີບາງການຂັດຂວາງຂັ້ນທໍາອິດຈາກທາງພາຍໃນເພື່ອທີ່ຈະວາງແຜນການສັງຄົມ ແລະສິ່ງແວດລ້ອມໃນຂະນະທີ່ໂຄງການຍັງຢູ່ໃນຂັ້ນຕອນການປະເມີນຜົນຄວາມເປັນໄປໄດ້, ຕ້ອງໄດ້ຍອມຮັບ "ການສະຫລຸບລວມ ແລະລາຍລະອຽດຂອງການວາງແຜນສັງຄົມ ແລະສິ່ງແວດລ້ອມ [ໃນໄວໆນີ້]...ຜົນປະໂຫຍດຂອງການຢໍ້າໂຄງການ, ແລະບໍລິສັດ Oxiana ອາດຈະຍອມຮັບເອົາປັດຊະຍາແບບດຽວກັນຢ່າງແນ່ນອນສໍາລັບໂຄງການໃນອະນາຄົດ", (2) ການມອບຫມາຍຢ່າງສົມບູນຕໍ່ການປຶກສາ ແລະການເຂົ້າຮ່ວມຂອງຊຸມຊົນ" ແມ່ນ "ກະແຈສູ່ຮູບການ" ຂອງຄວາມສໍາເລັດຂອງໂຄງການການພັດທະນາຊຸມຊົນທ້ອງຖິ່ນ, ເຊິ່ງອີງຕາມລາຄາສູງຈາກການຫຍຸດງານ ເຊິ່ງອາດຈະເປັນຜົນກະທົບໃຫ້ເກີດມີເຫດການບໍ່ສະຫງົບຂອງແຮງງານ, ເຊິ່ງຍອມຮັບໃຫ້ເປັນ "ບໍ່ພຽງແຕ່ການເຫັນຜົນປະໂຫຍດຂອງຄົນອື່ນເທົ່ານັ້ນ ແຕ່ກໍ່ຍັງທຸລະກິດທີ່ດີແບບງ່າຍໆ; (3) ການລົງມືປະຕິບັດຫລັກການສໍາລັບການຕິດຕໍ່ກັບຊຸມຊົນທ້ອງຖິ່ນ ໄດ້ສະເຫນີທີ່ Box 3.

***ເອກະສານສາມາດເບິ່ງໄດ້ທີ່*** *www.minerals.org.au/__data/assets/pdf_file/6045/9A-1AlbertPeter.pdf*

Box 3: **ກົດເກນຂອງ LXML ໃນການບຳລຸງຮັກສາສິດທິທາງສັງຄົມເພື່ອຈະປະຕິບັດໂຄງການບໍ່ແຮ່ທີ່ເຊໂປນ**

ການຕິດຕໍ່ສື່ສານ ແລະການໃຊ້ເວລາແມ່ນສຳຄັນຫລາຍໃນການຟັງຫລາຍກວ່າການເວົ້າ
ນຳໃຊ້ອຸປະກອນການຕິດຕໍ່ສື່ສານໃຫ້ເຫມາະສົມລວມທັງໃຫ້ມີນາຍພາສາທີ່ດີ
ນຳໃຊ້ຄວາມຮູ້ທ້ອງຖິ່ນ ແລະຊັບພະຍາກອນທີ່ສາມາດນຳເອົາຂໍ້ມູນຂ້າມມາໄດ້
ປ່ຽນຈາກຫົວຂໍ້ທີ່ສັບສົນມາເປັນຂັ້ນຕອນທີ່ງ່າຍດາຍ
ກຽມພ້ອມທີ່ຈະອະທິບາຍຫລາຍເທື່ອ
ກຽບພ້ອມທີ່ຈະປະຕິເສດ, ແຕ່ໃຫ້ຄຳຕອບທີ່ມີເຫດຜົນທີ່ເຫມາະສົມ
ບໍ່ຕ້ອງຮີບຮ້ອນ, ແຕ່ຮູ້ຈັກຈັດການກັບຄວາມຮີບຮ້ອນ
ມີຄວາມເຂົ້າໃຈກ່ຽວກັບຄວາມຄາດຫມາຍທາງວັດທະນາທຳ
ມີຄວາມເຂົ້າໃຈກ່ຽວກັບທ້ອງເລື່ອງຂອງສັງຄົມ ເຊັ່ນ: ເລື່ອງແມ່ຍິງ, ຊົນເຜົ່າ, ແລະໂຄງສ້າງຂອງຫມູ່ບ້ານ
ມີຄວາມເຂົ້າໃຈກ່ຽວກັບກຸ່ມຜູ້ທີ່ເຂົ້າຮ່ວມທັງຫມົດ
ກ່າວທຸກໆຫົວຂໍ້
ກ່າວຄຳສັນຍາ
ຫ້າມສະແດງອາການທີ່ຈະເປັນການທຳລາຍຄວາມຫວັງ ຫລືຄວາມບໍ່ອົດທົນ
ຫ້າມກ່າວຄຳລວງ, ກ່າວຕາມຄວາມເປັນຈິງ
ຕ້ອງເຮັດໄດ້ຄືດັ່ງການມອບຫມາຍຢ່າງແທ້ຈິງ

ຂໍ້ມູນ: Jones ແລະທີມງານ

**ສະຖາບັນນະໂຍບາຍບໍ່ແຮ່ 2005. ບໍ່ແຮ່ພູເບ້ຍ - ຢູ່ໃນພາວະມີບັນຫາແລ້ວ**

ເລື່ອງຂອງບໍ່ແຮ່ພູເບ້ຍທີ່ໄດ້ແນໃສ່ການລົ້ນຂອງໄຊຍາໄນ ໃນເດືອນມິຖຸນາ 2005 (ໄດ້ລາຍງານຢູ່ໃນ UDNP 2006). ສິ່ງທີ່ພົບເຫັນ, ທີ່ອີງຕາມການລາຍງານຂອງວິທະຍຸລາວແລະການຕິດຕໍ່ກັບວຽງຈັນ, ລວມມີ (1) ການລົ້ນອາດມາຈາກຜົນຂອງການຮີບຮ້ອນເຮັດວຽກເພາະວ່າໂຄງການໄດ້ພະຍາຍາມທີ່ຈະສຳເລັດກ່ອນຕົ້ນລະດູຝົນ; (2) ບັນຫາທີ່ເກີດຂຶ້ນກິນເວລາໄປ 10 ວັນທີ່ຈະແກ້ໄຂບັນຫາເຖິງຈະມີການຮູ້ຢູ່ແລ້ວ, ເຊິ່ງຍົກໃຫ້ເຫັນ "ເປັນການທຳລາຍຜູ້ທີ່ກ່ຽວຂ້ອງຂ້າມເຖິງຄວາມອາດສາມາດຂອງບໍລິສັດ ເພື່ອປະເຊີນຫນ້າຢ່າງພໍເຫມາະກັບບັນຫາສິ່ງແວດລ້ອມ ລວມມີທັງການຂຸດຄົ້ນບໍ່ແຮ່ໃນຂອບເຂດຂອງຝົນຕົກຫນັກແລະ ພູມີປະເທດທີ່ສູງຊັນ, ໃນປະເທດທີ່ມີກົດເກນຄວາມອາດສາມາດຕ່ຳ ແລະ (3)

ໄດ້ມີ "ຫລັກຖານທີ່ສະແດງໃຫ້ເຫັນວ່າບໍລິສັດດັ່ງກ່າວໄດ້ເປັນພຽງແຕ່ເຄື່ອງບັງໜ້າທຳມະຊາດ ແລະການຍືດເວລານານຂອງຜົນກະທົບຂອງການລົ້ນ ແລະ ບັນຫາທີ່ຂາດຫົວໜ້າ ແລະຂາດຄວາມແນ່ນອນທາງດ້ານຂໍ້ມູນໃນການແຈ້ງການທີ່ຈະແລກປ່ຽນວັດຖຸດິບໃນປະເດັນນັ້ນໆ"
***ເອກະສານມີຢູ່ທີ່*** *http://mpi.org.au/campaigns/cyanide/phubia/*

**ທະນາຄານໂລກ 2006. ພາກແຜນການສຳລັບການພັດທະນາແບບຍືນຍົງຂອງພາກການຂຸດຄົ້ນບໍ່ແຮ່ຢູ່ໃນ ສ.ປ.ປ.ລາວ**

ເອກະສານນີ້ມີ 3 ພາກ - ບົດລາຍງານສະຫລຸບສັງລວມ, ບົດລາຍງານສະເພາະ 6 ບົດ (ລະບົບຂໍ້ມູນຂ່າວສານທາງພູມີສາດ, ເສດຖະກິດພູມີວິທະຍາ, ພື້ນຖານໂຄງລ່າງ, ການແຂ່ງຂັນສາກົນ ແລະເສດຖະກິດມະຫາພາກ) ແລະແຜນປະຕິບັດ - ແມ່ນໄດ້ອີງໃສ່ການເຮັດວຽກຂອງຜູ້ຊ່ຽວຊານ 11 ເດືອນ (ຈາກການສັນນິຖານໄດ້ລະຫວ່າງປີ 2004-2006), ແລະລວມມີຂໍ້ມູນຫລາຍກວ່າ 500 ໜ້າ (ລວມມີແຜນທີ່ແລະຕາຕະລາງ), ບົດປະເມີນຜົນ ແລະຂໍ້ແນະນຳກ່ຽວກັບພາກການຂຸດຄົ້ນບໍ່ແຮ່, ໄດ້ຈາກຄຸນລັກສະນະທາງກາຍະພາບເຖິງຂໍ້ມູນທາງຫລັກຖານທີ່ມີມາດົນແລ້ວ ແລະກ່ຽວກັບພາຍໃນປະເທດເຖິງພາກພູມີປະເທດສາກົນສຳລັບການພັດທະນາອຸດສາຫະກຳ. ສິ່ງທີ່ພົບເຫັນມີ: **(1)** ການຂຸດຄົ້ນບໍ່ແຮ່ 35 ແຫ່ງໄດ້ກຳລັງປະຕິບັດ, ແຕ່ມີພຽງແຕ່ 3 (ສັນນິຖານວ່າເປັນເຊໂປນ ແລະພູເບ້ຍໃນສອງສະຖານທີ່) ມີ "ລະບົບການຜະລິດທີ່ທັນສະໄໝ" ໃນນັ້ນເຄິ່ງໜຶ່ງລວມມີການລົງທຶນຂອງຕ່າງປະເທດ (ຈີນ, ໄທ, ຫວຽດນາມ ແລະອົດສະຕາລີ); ທັງໝົດໄດ້ປະຕິບັດໂດຍກະຊວງພະລັງງານ ແລະບໍ່ແຮ່ (7 ບໍ່ແຮ່), ກະຊວງປ້ອງກັນຊາດ (5 ບໍ່ແຮ່) ແລະ ກະຊວງການຄ້າ (1 ບໍ່ແຮ່); ທຸກໆບໍ່ແຮ່ "ແມ່ນສຳຄັນໃນການສະໜອງ [ການມີວຽກເຮັດ] ໃນຊຸມຊົນຂອງເຂົາເຈົ້າ" (51) ໃນສະໜາມການວາງຂໍ້ກຳນົດ, **(2)** ເຖິງແມ່ນວ່າ "ການກຳນົດປັດຈຸບັນຂອງ*ກິດຈະກຳການຂຸດຄົ້ນບໍ່ແຮ່, ສະຖານທີ່ຕັ້ງ,* ແລະ *ພື້ນຖານໂຄງລ່າງ* ແມ່ນໄດ້ມີຄວາມເຂົ້າໃຈຢ່າງຈະແຈ້ງ", (2, ໄດ້ລວມມີການເນັ້ນຄວາມສຳຄັນ), "ມັນເປັນການຍາກຫລາຍນີ້ຈະປະເມີນຈຳນວນຈິງຂອງອຸດສາຫະກຳການຂຸດຄົ້ນບໍ່ແຮ່ຂອງລາວ, ຍ້ອນວ່າບໍ່ມີການລວບລວມເອກະສານທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຜົນຜະລິດ ແລະຂໍ້ມູນດິບຂອງການເງິນ" (50, ໄດ້ລວມມີການເນັ້ນຄວາມສຳຄັນ); **(3)** ໃນຂະນະທີ່ການອະນຸຍາດ ແລະເອກະສານສະໜັບສະໜູນກ່ຽວກັບການສຳປະທານບໍ່ແຮ່ ໄດ້ແມ່ນກິດຈະກຳຂັ້ນຕົ້ນຂອງກົມທໍລະນີສາດ ແລະບໍ່ແຮ່ຕັ້ງແຕ່ກ່ອນປີ 2003, ມີບັນຫາກັບການຈັດຫາຂໍ້ມູນກ່ຽວກັບຂະບວນການໃຫຍ່ໃນການລົງທຶນ (ລວມມີກອບການເຮັດວຽກທາງກົດໝາຍ), "ບາງທີ" ກໍ່ອາດເປັນການສະແດງໃຫ້ເປັນເຫດຈູງໃຈໃຫ້ລະເວັ້ນນັກລົງທຶນຕ່າງຊາດ; **(4)** "ການຈຳກັດທາງດ້ານອົງການຈັດຕັ້ງ ແລະຄວາມອາດສາມາດຢ່າງແທ້ຈິງ" ຂອງກົມທໍລະນີສາດແລະບໍ່ແຮ່ (28-30) ສະພາບກ່ຽວກັບສ່ວນສຳຄັນທາງດ້ານກົດໝາຍເກືອບຈະອັນດຽວກັບອົງການວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມ, ໃນຂະນະທີ່ຊຽນແມ່ນ "ຕ້ອງການທີ່ຈະຈັດຕັ້ງການຄຸ້ມຄອງສິ່ງແວດລ້ອມ ແລະກິດຈະກຳການຕິດຕາມທາງ

ກົດໝາຍ ແຕ່ໃນປັດຈຸບັນຍັງບໍ່ທັນໄດ້ຈັດຕັ້ງປະຕິບັດການຕິດຕາມບັນຫາສິ່ງແວດລ້ອມໃດໆເລີຍ ອີງໃສ່ການຂາດເຂີນທາງດ້ານທຶນງົບປະມານ" (58). (ສານຈາກຜູ້ຂຽນ: ນັບແຕ່ 2 ປີຫລັງ, ຄວາມອາດສາມາດ ແລະການສະໜັບສະໜູນຂອງອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມແມ່ນໄດ້ເພີ່ມຂື້ນຢ່າງເປັນຕົວເປັນຕົນ - ເບິ່ງ ອົງການວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມ - ການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມ, ຫົວຂໍ້ຕໍ່ໄປ ແລະຄະນະກຳມະການຄຸ້ມຄອງທີ່ດິນແຫ່ງຊາດກໍ່ເປັນຜູ້ກຳນົດກົດໝາຍ). ພິຈາລະນາເບິ່ງອະນາຄົດ **(5)** ປະເທດລາວ "ແມ່ນຕັ້ງຢູ່ໃນພູມສັນຖານທີ່ອຳນວຍແກ່ຄວາມຫລາກຫລາຍທາງດ້ານຊັບພະຍາກອນບໍ່ແຮ່" ແລະມີແຮ່ທາດທີ່ເປັນທີ່ຮັບຮູ້ຢູ່ 572 ແຮ່ທາດ, ລວມມີຄຳ (ເຊິ່ງມີຢູ່ທີ່ເຊໂປນ ແລະພູເບ້ຍ, ເຊິ່ງສະຫງວນໄວ້ເພື່ອຊາດແມ່ນປະມານ 500-600 ໂຕນ), ທອງແດງ (ແມ່ນສະຫງວນໄວ້ທີ່ເຊໂປນ ແລະພູຄຳ, ສະຫງວນໄວ້ເພື່ອຊາດແມ່ນ 8-10 ລ້ານໂຕນ), ສັງກະສີ (ເຊິ່ງມີຢູ່ໄກໂສ ແລະພູດາ, ສະຫງວນໄວ້ເພື່ອຊາດປະມານ 2-3 ລ້ານໂຕນ), ໂປຕາຊຽມ ("ບາງທີ" ອາດເຖິງ 50 ລ້ານໂຕນ), ດິນຂາວເຄໂອນລິນທີ່ໃຊ້ເຮັດຖ້ວຍຊາມ ("ບາງທີ" ອາດເຖິງ 70 ລ້ານໂຕນ), ຍິບຊຳ ("ຫລາຍເຖິງ" 100ລ້ານໂຕນ), ນອກຈາກນັ້ນຍັງມີຖ່ານ, ແຮ່ແບລຽມ, ດິນຫີນ ແລະພອຍຕ່າງໆ; **(6)** ພື້ນຖານໂຄງລ່າງທີ່ມີຢ່າງຈຳກັດ ແລະການຜະລິດເສດຖະກິດຕ່ຳສະຫລັບກັບການຜະລິດໂລຫະ (ຈຳນວນຫລາຍກວ່າການຂຸດຄົ້ນຂອງທອງແດງຫລືສັງກະສີທີ່ຕ້ອງການການຂົນສົ່ງເຖິງ ແສນໂຕນຕໍ່ປີ) ຫລື "ການຊື້ຂາຍແຮ່ທາດຂະໜາດໃຫຍ່" (ແຮ່ເຫລັກແລະບໍ່ໂປຕາຊຽມ "ຕ້ອງຜະລິດໃຫ້ໄດ້ຫລາຍກວ່າ 5 ແສນໂຕນຕໍ່ປີ ຖ້າພວກເຂົາຍັງຕ້ອງການຕໍ່ສູ້ກັບຕະຫລາດທົ່ວພື້ນທີ່ຫລືທົ່ວໂລກ") ກຳນົດ "ຜົນກະທົບທາງລົບຢ່າງໃຫຍ່ຫລວງຂອງຄວາມເປັນໄປໄດ້ສຳລັບການລົງທຶນກ່ຽວກັບການຂຸດຄົ້ນບໍ່ແຮ່ຢູ່ໃນປະເທດລາວ"; ການຜະລິດ (ແສນໂຕນຕໍ່ປີ) ຕ້ອງການຖະໜົນຫົນທາງທີ່ສະດວກສະບາຍ, ຖ້າເປັນໄປໄດ້ (ຫ້າແສນໂຕນຕໍ່ປີ) ຕ້ອງການຂົນສົ່ງໄປທາງລົດໄຟ ຫລືທາງເຮືອໃຫຍ່ (ບົດລາຍງານ 5: ການແຂ່ງຂັນສາກົນ, ໜ້າ 17-18); **(7)** ການຂຸດຄົ້ນບໍ່ຄຳ, ເງິນ, ເພັດພອຍ ແລະສັງກະສີຍັງຕ້ອງການເພີ່ມຂື້ນ ເນື່ອງຈາກການເພີ່ມຂື້ນຂອງລາຄາເຄື່ອງໃຊ້ສອຍຕ່າງໆ ແລະການແຜ່ຂະຫຍາຍຂອງຕະຫລາດທາງພາກພື້ນທີ່, ຕົວຢ່າງ, ຈີນ ເພາະສະນັ້ນ, **(8)** ສະຖານທີ່ທີ່ເໝາະສົມສຳລັບການພັດທະນາບໍ່ແຮ່ ແມ່ນສິ່ງທີ່ຄາດການບໍ່ໄດ້ ເພາະວ່າສັນຍາໃນຄວາມໝັ້ນໃຈໃນການຄົ້ນພົບທີ່ໄດ້ໃຫ້ສິດແຕ່ພຽງຜູ້ດຽວສຳລັບຂໍ້ມູນທາງດ້ານພູມີສາດ[3] ພວກເຂົາເກັບກຳພື້ນທີ່ສຳປະທານ - ບົດລາຍງານໄດ້ແນະນຳໃຫ້ກົມທໍລະນີສາດ ແລະບໍ່ແຮ່ "ຕັດສິນໃຈຢ່າງລະມັດລະວັງ" ເພື່ອຈະເຂົ້າໄປເຖິງຂໍ້ມູນສ່ວນຕົວຂອງຂໍ້ມູນທາງດ້ານພູມີສາດ[3], ແຕ່ລະວັງເຖິງ "ຄວາມຟູມເຟືອຍໃນການກະທຳການເປີດເຜີຍຂໍ້ມູນຂອງການອາດສາມາດໃນທານຫລຸດຜ່ອນການພັດທະນາການຂຸດຄົ້ນຂອງບໍລິສັດ" ອາດຈະລົງທຶນໄດ້ (39)

***ຂໍ້ມູນມີຢູ່ທີ່*** *http://go.worldbank.org/UIJSQY8A0*

[3] "ຂໍ້ມູນທາງດ້ານພູມີສາດ" ແມ່ນຂໍ້ມູນທີ່ຕ້ອງການເພື່ອທີ່ຈະຕັດສິນໃຈວ່າບໍ່ແຮ່ທີ່ຢູ່ໃນເຂດນັ້ນແມ່ນມີຄ່າພໍທີ່ຈະພັດທະນາແຫລ່ງນັ້ນ ຫັນປ່ຽນດິນ ໃຫ້ກາຍເປັນທຶນ

**ກົມທໍລະນີສາດ ແລະບໍ່ແຮ່ 2006, ແຜນທີ່ຂອງການສຳປະທານພື້ນທີ່ໃນເດືອນ ກໍລະກົດ 2006**

ແຜນທີ່ຂອງການສຳປະທານພື້ນທີ່ຂອງ ກົມທໍລະນີສາດ ແລະ ບໍ່ແຮ່ສະແດງໃຫ້ເຫັນການສຳປະທານຂອງປີກາຍ, ແບ່ງສີຕາມລະດັບຂອງກິດຈະກຳ (ບໍ່ມີກິດຈະກຳ, ກິດຈະກຳພາຍຫນ້າ, ການຄົ້ນພົບ/ການສຶກສາຄວາມເປັນໄປໄດ້, ຫລືການໃຊ້ປະໂຫຍດ) ແລະມີລາຍການຂອງຂໍ້ມູນການໃຫ້ເຫດຜົນອີງຕາມບໍລິສັດ, ສັນຊາດຂອງບໍລິສັດ, ສະຖານທີ່ຕັ້ງຂອງໂຄງການ, ການສຳປະທານເນື້ອທີ່ ແລະບໍ່ແຮ່. ແຜນທີ່ຂໍ້ມູນຂອງການສຳປະທານບໍ່ແຮ່ໄດ້ປັບປຸງໃຫ້ທັນສະໄຫມສາມເຖິງສີ່ຄັ້ງຕໍ່ປີ, ແລະສາມາດຊື້ໄດ້ຈາກລະບົບຂໍ້ມູນຂ່າວສານທາງພູມີສາດ ແລະໃນຮູບແບບຮູບພາບຈາກກົມທໍລະນີສາດ ແລະບໍ່ແຮ່. ເກີດມີຂ່າວລືວ່າ, ໃນການເຮັດຫນ້າທີ່ກັບການກວດຄືນຂອງພະແນກຂຸດຄົ້ນບໍ່ແຮ່ ແລະການຫຍຸດໂຄງການຊົ່ວຄາວໃນປັດຈຸບັນຂອງການສຳປະທານທີ່ດິນໃຫຍ່, ຕົວເລກຂອງການສຳປະທານການຂຸດຄົ້ນບໍ່ແຮ່ (30 ໂຄງການໃນຊື່ດຽວ) ແມ່ນກຳລັງຢູ່ໃນຂະບວນການທີ່ກຳລັງຈະເກີດຂື້ນ, ຫລືກຳລັງຈະຖືກຍົກເລີກໃນໄວໆນີ້. ***ເອກະສານມີຢູ່ທີ່ ສູນຂໍ້ມູນການຂຸດຄົ້ນບໍ່ແຮ່ ທີ່ DGM***

**ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) 2006: ບົດລາຍງານການພັດທະນາຊັບພະຍາກອນມະນຸດ: ການຄ້າສາກົນ ແລະການພັດທະນາຊັບພະຍາກອນມະນຸດ**

ບົດລາຍງານບົດນີ້ກໍ່ໄດ້ພິຈາລະນາທີ່ຕອນທີ 3.5, ສະແດງໃຫ້ເຫັນສອງກໍລະນີສຶກສາເຊິ່ງຂື້ນກັບການຄົ້ນຄວ້າຕົ້ນສະບັບໃນຂະແຫນງການຂຸດຄົ້ນບໍ່ແຮ່. ໃນກໍລະນີຂອງບໍ່ແຮ່ເຊໂປນ, ເປັນຕົວແທນໃຫ້ແກ່ "ການກະທຳໂຄງການທີ່ໃຫຍ່ ແລະ ດີທີ່ສຸດຂອງການລົງທຶນຂອງຕ່າງປະເທດໂດຍກົງ" ຂອງອຸດສາຫະກຳ, ຈັບຕາເບິ່ງບັນຫາຂອງການກະທຳຂອງໂຄງການຂຸດຄົ້ນບໍ່ແຮ່ທີ່ດີທີ່ສຸດ: ໂຄງການໄດ້ສ້າງພະນັກງານ (ລວມມີທັງຈຳນວນທີ່ເທົ່າກັນສຳລັບຜູ້ຍິງໃນການຂັບລົດບັນທຸກ), ສ້າງໂຮງຮຽນ, ສ້າງສະຖານພະຍາບານ, ຖະຫນົນທີ່ຮອງຮັບທຸກສະພາບອາກາດ, ການກວດສອບລະເບີດທີ່ບໍ່ທັນແຕກ, "ກອງທຶນການພັດທະນາຄວາມໄວ້ໃຈ" (ຄາດວ່າເຖິງ $500000 ໃນປີ 2007), ເສດຖະກິດພື້ນທີ່ແມ່ນພົມພຽງທີ່ຈະດຶງດູດອັດຕາການຍ້າຍທີ່ໃຫ້ຫລຸດລົງມາທີ່ 9 ສ່ວນຮ້ອຍຕໍ່ປີ, ແລະຄາດຫວັງຈະໄດ້ $25 ລ້ານຕໍ່ປີໃນລາຍໄດ້ແຫ່ງຊາດ, ພາສີ ແລະລາຍໄດ້ຈາກການສຳປະທານເນື້ອທີ່. ໃນທາງກົງກັນຂ້າມ, ພັນທະທາງດ້ານສິ່ງແວດລ້ອມຂອງການສຳປະທານເນື້ອທີ່ 1947 ຕາກິໂລແມັດ ແມ່ນເປັນຈິງ, ລວມມີ "ການຕັດໄມ້ ແລະ ການເກີດຫລຸດ (ໂດຍສະເພາະແມ່ນຍາມຝົນ) ຄວາມຕ້ອງການຂອງລັດແມ່ນການຈັດການກັບທາດໄຊຍາໄນ, ການຈັດການກັບຂີ້ໂລຫະ ແລະຄວາມຕ້ອງການທີ່ຈະຮັກສານ້ຳ" (ເບິ່ງ Box 4: ແຮງງານສິນຄ້າ). ລາຍການ "ຄວາມສ່ຽງ" ໄດ້ພັນລະນາເຖິງການລວມກັນຂອງຄວາມສ່ຽງ ແລະຜົນກະທົບ, ແລະກໍ່ບໍ່ໄດ້ພັນລະນາເຖິງລາຍລະອຽດລົງເລິກນອກຈາກເວົ້າວ່າ "ນ້ຳ

ລົ້ນ“ (ມີສານປົນເປື້ອນທີ່ບໍ່ຊັດເຈນ[4]) ເກີດຂຶ້ນທີ່ບາງຈຸດ ແລະການບັນເທົາກໍ່ມີການປະຕິ ບັດຢ່າງດີ. “ຂໍ້ຂັດແຍ່ງບາງຢ່າງ“ ໄດ້ຖືກລາຍງານລະຫວ່າງຜູ້ທີ່ຍ້າຍມາໃຫມ່ ແລະຜູ້ທີ່ອາໃສຢູ່ກ່ອນ, ແລະ “ຊາວບ້ານພື້ນເມືອງ“ ບາງຄົນບໍ່ປະທັບໃຈໃນກິດຈະກໍາຂອງກອງທຶນຄວາມໄວ້ໃຈ ຫລືຄວາມຫວັງພາຍຫນ້າຂອງ [ການເຊັນສັນຍາຜູກຂາດ] ຂາຍໃຫ້ແກ່ບໍລິສັດ“ ທີ່ເປັນຜູ້ນໍາເຂົ້າຕາຫນ່າງອາຫານທີ່ຊື້ນໍາຊາວບ້ານຫມົດ. ບໍ່ດີບຸກທີ່ໃຊ້ເຄືອບໂລຫະຂອງ ນໍ້າຜາເທັນ, ໃນຂະນະທີ່ເຂົ້າຮ່ວມກິດຈະການ ໄດ້ສະແດງເຖິງຕົວຢ່າງປະເພດ “ແບບຕ່າງໆ“ ຂອງບໍ່ແຮ່ - ບໍ່ແຮ່ນ້ອຍທີ່ບໍ່ໄດ້ໃຊ້ເຕັກໂນໂລຊີການຜະລິດ “ທີ່ທັນສະໄຫມ“ ຫລືບໍ່ໄດ້ໃຊ້ຂະບວນການຈັດການທີ່ດີທີ່ສຸດ ແຕ່ປະຕິບັດຕົວຈິງກັບການຂຸດຄົ້ນບໍ່ແຮ່. ປຽບທຽບກັບເຊໂປນ, ເລື່ອງຂອງ ນໍ້າຜາເທັນແມ່ນເປັນຫນ້າປະທັບໃຈກວ່າ ແລະ (ອາດເຫັນໃນຄັ້ງທໍາອິດ) ງຽບກວ່າ. ການປ້ອງກັນສິ່ງແວດລ້ອມແມ່ນຍັງ “ອ່ອນ“: ການຕັດໄມ້ທໍາລາຍປ່າຍັງແຜ່ຫລາຍ, ຢາພື້ນເມືອງຫລຸດລົງ, ນໍ້າແມ່ນຖືກປົນເປື້ອນກັບມົນລະພິດຈາກການຂຸດຄົ້ນບໍ່ແຮ່, ແລະການທໍາມາຫາກິນແມ່ນເປັນແບບດຽວກັນຫມົດ: ປະຊາຊົນໃນພື້ນທີ່ແມ່ນເປັນຄົນຂຸດຄົ້ນບໍ່ແຮ່ທັງຫມົດ (ປະມານ 300 ຄົນເຮັດວຽກໃຫ້ບໍລິສັດ, ປະມານ 300 ຄົນແມ່ນຂຸດຄົ້ນບໍ່ແຮ່ເອງ ແລະຂາຍດີບຸກທີ່ໃຊ້ເຄືອບໂລຫະໃຫ້ແກ່ບໍລິສັດ), ແລະ ອາຫານສ່ວນຫລາຍແລ້ວແມ່ນນໍາເຂົ້າເນື່ອງຈາກວ່າ “ຕະຫລາດຂອງການກະສິກໍາ ແລະ ໂອກາດຂອງທຸລະກິດປະເພດອື່ນໆແມ່ນມີນ້ອຍ“. ແຕ່ວ່າລາຍໄດ້ສະເລ່ຍສໍາລັບຊ່າງຝີມືຂອງການຂຸດຄົ້ນບໍ່ແຮ່ຂອງດີບຸກທີ່ໃຊ້ເຄືອບໂລຫະແມ່ນ [85000 ກີບຕໍ່ມື້] ປະມານນັ້ນຫລືຫລາຍກວ່ານັ້ນ ເຊິ່ງສັງເກດໂດຍພະນັກງານຜູ້ຊ່ຽວຊານເຕັກນິກ ແລະ ການຈັດການຄົນລາວຢູ່ເຊໂປນ, ຜູ້ທີ່ບັນຈຸຢູ່ອັນດັບຕົ້ນໆຂອງຊັ້ນແຮງງານລາວ, ແລະບໍລິສັດຂຸດຄົ້ນບໍ່ແຮ່ ປະກອບສ່ວນພໍປະມານເຂົ້າໃນການພັດທະນາພື້ນທີ່ເຊິ່ງມີໂຮງຮຽນ, ໄຟຟ້າ ແລະ ເງິນເດືອນຂອງຕໍາຫລວດ, ຄູອາຈານ ແລະ ອຸປະກອນການແພດ.

***ເອກະສານມີຢູ່ທີ່***

[4] ຮູບພາບກ່ອນເດືອນ ມິຖຸນາ 2005, ການລົ້ນຂອງທາດໄຊຍາໄນທີ່ຢູ່ບໍ່ຂຸດຄົ້ນພູເບ້ຍ, ແຕ່ວ່າການລົ້ນຂອງສານເຄມີອາດຂື້ນກັບຂະບວນການຂອງການຜະລິດ - ອາດແມ່ນໄຊຍາໄນ (ສໍາລັບຄໍາ) ຫລື ອາຊິດຊູນຟູຣິກ (ສໍາລັບທອງແດງ)

**Box 4: ທິດສະດີການນຳໃຊ້ເຄື່ອງມື: ຜົນຜະລິດທີ່ບໍ່ເປັນຈິງ**

ເຖິງແມ່ນວ່າຊັບພະຍາກອນທຳມະຊາດຢ່າງແມ່ນ້ຳ, ແລະຫີນສາມາດປ່ຽນຮູບມາເປັນສິນຄ້າເຊັ່ນພະລັງງານນ້ຳຕົກ, ໄມ້ທ່ອນແລະຄຳ, ພວກມັນບໍ່ແມ່ນສິນຄ້າໃນຮູບແບບທຳມະຊາດຂອງມັນ. ພວກມັນເປັນສ່ວນຫນຶ່ງຂອງໂລກ. ນີ້ແມ່ນສິ່ງທີ່ຍອມຮັບຂອງແຮງງານສິນຄ້າ: ບາງສິ່ງບາງຢ່າງສາມາດຂາຍໄດ້, ແຕ່ວ່າສິ່ງນັ້ນບໍ່ໄດ້ຜະລິດມາເພື່ອຈຸດປະສົງນັ້ນ. ນັກເສດຖະສາດບູຮານທ່ານ Karl Polanyi (ໄດ້ເປີດຄຳອ້າງອີງ) ພັດທະນາແນວຄວາມຄິດເພື່ອທີ່ຈະຂັດແຍ່ງສຳລັບຄວາມລະມັດລະວັງທີ່ຕາມມາ ແລະ ໂດຍສະເພາະໃນຄວາມໄວໃນແຮງງານສິນຄ້າ (ຄືພວກທີ່ດິນແລະແຮງງານມະນຸດ) ໄດ້ປ່ຽນມາເປັນສິນຄ້າຢ່າງແທ້ຈິງ. ຍ້ອນວ່າມີການກະຈັດກະຈາຍລວມຢູ່ນຳ - ຕົວຢ່າງ, ຄວາມຕ້ອງການໃນການຫາແຫລ່ງອາຫານໃຫມ່ກັບການຫາປາ ຫລື ເຄື່ອງປ່າຂອງດົງ ເຊິ່ງມີຈຳນວນຫລຸດລົງເນື່ອງຈາກມີການແຂ່ງຂັນກັບໂຄງການ - ການປະເຊີນຫນ້າກັບສັງຄົມມີການປ່ຽນແປງເລັກນ້ອຍດີກວ່າການປະເຊີນຫນ້າກັບສິ່ງທີ່ວ່ອງໄວ ແລະ ພວກເຂົາເຝົ້າທີ່ຈະຂັດຂວາງ ຄວາມພະຍາຍາມຂຶ້ນກັບຕະຫລາດການປ່ຽນແປງແຮງງານກາຍເປັນສິນຄ້າຢ່າງວ່ອງໄວ. ທ່ານ Polanyi ໄດ້ອະທິບາຍຄຳຊີ້ແຈງເຫດຜົນສຳລັບກົດລະບຽບໃນຮູບແບບແຂງໆວ່າ: "ເພື່ອທີ່ຈະອະນຸຍາດໃຫ້ກົນໄກການຕະຫລາດແມ່ນຄົນເປັນຜູ້ສັ່ງການຜູ້ດຽວ ແລະ ສິ່ງແວດລ້ອມຂອງເຂົາເຈົ້າອາດສະແດງຜົນອອກໃນການທຳລາຍຊຸມຊົນ. ສຳລັບການກ່າວອ້າງເລື່ອງສິນຄ້າ "ກຳລັງແຮງງານ" ບໍ່ສາມາດຕັດອອກໄດ້, ໃຊ້ການຂາດຄວາມພິຈາລະນາ ຫລືບາງທີອາດບໍ່ໄດ້ພິຈາລະນາຊ້ຳ, ໂດຍບໍ່ມີການສົ່ງຜົນກະທົບຕໍ່ບຸກຄົນຜູ້ທີ່ເຄີຍເປັນຜູ້ຖືສິນຄ້າຊະນິດນີ້ໂດຍສະເພາະ. ການຂາຍສິນຄ້າດ້ວຍລາຄາສູງຂອງການປ້ອງກັນສະຖານທີ່ວັດທະນາທຳ, ທຳມະຊາດອາດຫລຸດລົງທາງດ້ານທາດຕ່າງໆ, ບໍລິເວນໃກ້ຄຽງແລະພື້ນທີ່ແມ່ນເປິະເປື້ອນ, ແມ່ນ້ຳມີມົນລະພິດ, ໃນທາງການທະຫານແມ່ນມີຄວາມອັນຕະລາຍ, ກຳລັງທີ່ຈະຜະລິດອາຫານແລະ ວັດຖຸດິບແມ່ນຖືກທຳລາຍ"

**ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ - ການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມ (ກຳລັງດຳເນີນ) ອົງການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມ**

ໂຄງການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມມີກິດຈະກຳຢູ່ 2 ພາກເຊິ່ງກ່ຽວພັນໂດຍກົງກັບການສຳປະທານທີ່ດິນ: ການພັດທະນາຂະບວນການຂອງການປະເມີນຜົນກະທົບຂອງສິ່ງແວດລ້ອມ ແລະ ສັງຄົມ ແລະ ການພັດທະນາຂະບວນການປະສົມປະສານໄລຍະຫ່າງຂອງການວາງແຜນ (ຢ່າງຫລັງນີ້ໄດ້ພິຈາລະນາຢູ່ຕອນ 3.5). ຜົນໄດ້ຮັບຂອງໂຄງການສຳຄັນສຳລັບປີ 2005-2006 ຄືແມ່ນອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມກຳລັງ "ປະຕິບັດການໃຫ້ໄດ້ຜົນໃນການໄດ້ຮັບໃບອະນຸຍາດຂອງບົດປະເມີນຜົນສິ່ງແວດລ້ອມ ແລະ ແນະນຳຈຳນວນຕໍ່ໃຫ້ກະຊວງແລະແຂວງ",ຕົວຢ່າງທີ່ປະກົດມີ "ການກວດກາທີ່ຕັ້ງຂອງໂຄງການພ້ອມທັງເລື່ອງທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ຊື່ໂຮງງານ

ຊີມັງ, ໂຄງການຂຸດຄົ້ນສັງກະສີ, ຊືນ, ໂຄງການຂຸດຄົ້ນບໍ່ຄໍາ, ໂຄງການຂຸດຄົ້ນຫີນ, ໂຮງງານຜະລິດດິນລະເບີດ ແລະ ອື່ນໆ". ກິດຈະກໍາປັດຈຸບັນກໍາລັງແນ່ໃສ່ການປັບປຸງໃຫ້ທັນສະໄຫມຂອງຂະບວນການບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມໃນການທີ່ຈະແກ້ໄຂຂະບວນການກັ່ນກອງ - ຂະບວນການຂອງການປະເມີນຜົນຂັ້ນທໍາອິດຂອງສິ່ງແວດລ້ອມ, ການປະເມີນຜົນກະທົບຂອງສິ່ງແວດລ້ອມ ແລະ ການປະເມີນຜົນກະທົບທາງສັງຄົມ ຈະປ່ອຍອອກມາໃນເວລາໃດ ແລະແນວໃດ, ແລະ ຮູບແບບແລະຄວາມຕ້ອງການທີ່ຖືກຕ້ອງກັບຄວາມສົນໃຈຂອງປະຊາຊົນໃນຂະນະນັ້ນສໍາລັບ ເອກະສານທີ່ນໍາອອກມາສະແດງ - ແລະເພື່ອສ້າງຂະບວນການອຸທອນ. ໃນໄລຍະປັດຈຸບັນ, ໂຄງການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມໄດ້ແນໃສ່ "ໃນຂະແຫນງການທີ່ສໍາຄັນເຊັ່ນ: ພະລັງງານໄຟຟ້າ ແລະ ການຂຸດຄົ້ນບໍ່ແຮ່, ແລະ ເຮັດວຽກກ່ຽວກັບຮູບການການຄຸ້ມຄອງສິ່ງແວດລ້ອມຂອງຂະແຫນງການນັ້ນໆ ເຊັ່ນ: ຂໍ້ຕົກລົງຂອງການສໍາປະທານ, ບົດປະເມີນຜົນກະທົບສິ່ງແວດລ້ອມ, ການກວດກາແລະການຕິດຕາມສິ່ງແວດລ້ອມ, ລວມທັງບັນຫາສິ່ງແວດລ້ອມສາທາລະນະ, ສ້າງຈິດສໍານຶກກ່ຽວກັບສິ່ງແວດລ້ອມ, ການບໍລິການ ແລະການປະຕິບັດຂັ້ນສູງຂອງອົງການຕ່າງໆ (ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຫ້ອງການວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມປະຈໍາແຂວງ). "ໄພຂົ່ມຂູ່" ຂອງຄວາມອາດສາມາດຂອງການປະຕິບັດຂອງ...ການອະນຸຍາດກ່ຽວກັບສິ່ງແວດລ້ອມ, ການກິດການແລະການຄວບຄຸມມົນລະພິດ ແມ່ນກໍາລັງເກີດຂື້ນ, ໂດຍການພັດທະນາຂອງຂະບວນການປະຕິບັດການຂັ້ນມາດຕະຖານທີ່ລະດັບສະເພາະຊາດ (STEA) ແລະສະເພາະແຂວງ (PSTEO) ແລະ "ເຮັດວຽກ" ຮ່ວມກັບຄະນະກໍາມະການວາງແຜນແລະການລົງທືນ ເພື່ອຈະພັດທະນາມາດຕະຖານສິ່ງແວດລ້ອມ ເຊິ່ງອາດຈະໃຊ້ໃນຂໍ້ຕົກລົງການສໍາປະທານ.

***ກະລຸນາຕິດຕໍ່ພະແນກ ESIA ທີ່ WREA ຂະແຫນງການສິ່ງແວດລ້ອມສໍາລັບຂໍ້ມູນເພີ່ມເຕີມ[5]***

**ຊັບພະຍາກອນນໍ້າ Ord, 2006. ພັດທະນາແລະປະສົມປະສານອຸດສາຫະກໍາອາລູມີນຽມຢູ່ໃນລາວ: ນະໂຍບາຍໂດຍລວມ**

ເອກະສານບົດນີ້ໄດ້ອະທິບາຍເຖິງການເຂົ້າຮ່ວມໂຄງການລະຫວ່າງ ຊັບພະຍາກອນນໍ້າ Ord (Ord, 49% ໃນ 70%), ບໍລິສັດການຂຸດຄົ້ນວັດຖຸທີ່ບໍ່ແມ່ນທາດເຫລັກຈີນສາກົນຈໍາກັດ (CNMIM, 51% ໃນ 70%) ແລະບໍລິສັດພື້ນທີ່ໃນລາວທີ່ບໍ່ລະບຸນາມ (30%). Ord ແມ່ນຄື "ບໍລິສັດຊັບພະຍາກອນຂອງອົສຕາລີ" ແລະ CNMIM ແມ່ນ "ບໍລິສັດການລົງທືນຂອງຈີນທີ່ກ່ຽວກັບແຮ່ທາດທີ່ບໍ່ແມ່ນໂລຫະ ແລະເປັນຕົວແທນສາກົນໃຫ້ແກ່ອຸດສາຫະກໍາຂອງເຂົາເຈົ້າ" ຜູ້ຂຽນ (Wilinson Media Pty Ltd.) ຂຽນໄວ້ວ່າ "ພູພຽງບໍລະເວນຢູ່ລາວເຮົາມີແຮ່ບອກໄຊທີ່ໃຫຍ່ທີ່ສຸດໃນໂລກທີ່ຍັງບໍ່ທັນໄດ້ພັດທະນາ", ບໍ່

[5] ໃນຂະນະທີ່ຂຽນເອກະສານ (ແຜນການ ການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມໄລຍະທີ 2, 2007) ທີ່ໄດ້ອ້າງອີງໃນນີ້, ພະແນກຂອງສິ່ງແວດລ້ອມ (ລວມທັງກົມການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມ) ໄດ້ຖືກຍ້າຍອອກຈາກ ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ມາຂື້ນກັບ WREA

ວ່າ "ORD, CNMIM ແລະລາວຢູ່ໃນຖານະທີ່ຈະກາຍເປັນຜູ້ທີ່ມີບົດບາດໃນອຸດສາຫະກຳອາລູມີນຽມລະດັບໂລກ "ໂດຍການພັດທະນາ" 138 ຕາກິໂລແມັດຂອງທີ່ດິນ [ການສຳປະທານທີ່ດິນ] ທີ່ພູພຽງບໍລະເວນ" (ເບິ່ງເອກະສານຕິດຂັດ 4) ໃນບ່ອນ "ທີ່ມີແຮ່ບອກໄຊ ໃນດິນແລະຮອບໆດິນ, ເຊິ່ງຄາດວ່າຈະມີປະມານ 2-2.5 ລ້ານໂຕນ". ໃນຂະນະດຽວກັນນັ້ນ "ການຕໍ່ລອງຍັງຢູ່ໃນຂັ້ນຕອນສຳລັບອາສາສະຫມັກຢີ່ປຸ່ນເພື່ອທີ່ຈະໃຫ້ຄວາມປອດໄພແກ່ທີ່ດິນຕອນນັ້ນ. ໃນຄວາມສາມາດຕົວນັ້ນ, ORD ກະງົບປະມານການຜະລິດປະຈຳປີໃຫ້ໄດ້ຫລາຍກວ່າ 20 ລ້ານໂຕນຕໍ່ປີ ໃນການຜະລິດບອກໄຊຈາກພູພຽງບໍລະເວນຖ້າເປັນໄປໄດ້, ເຊິ່ງເວລາທີ່ຟອກອອກມາແລ້ວອາດຈະໄດ້ພອຍເຖິງ 5-7 ລ້ານໂຕນຕໍ່ປີ". ການຜະລິດອາລູມີນຽມຕາມຄວາມຮຽກຮ້ອງຕ້ອງການຂອງໄຟຟ້າ, ໂຄງການໄດ້ວາງແຜນການທີ່ຈະສ້າງ "ການສຶກສາຄວາມເປັນໄປໄດ້, ແບບແຜນຂອງພະລັງງານນ້ຳເພື່ອສະຫນັບສະຫນູນການປະສົມປະສານກັບອຸດສາຫະກຳຂອງອາລູມີນຽມ" ການຕະຫລາດທີ່ມຸ່ງຫມາຍແມ່ນຈີນ ເຊິ່ງແຮ່ບອກໄຊຂອງພວກເຂົາແມ່ນ "ບໍ່ພຽງພໍເລີຍ" ໃນປີ 2005. ໂຄງການແມ່ນຄາດຫວັງການສະຫນັບສະຫນູນຈາກທະນາຄານໂລກ ແລະ "ຫ້ອງການທີ່ມີການງານທີ່ດີທີ່ສຸດ, ພື້ນຖານໂຄງລ່າງ ແລະສິ່ງແວດລ້ອມ". ອີງຕາມຕາຕະລາງເວລາ, ໂຄງການປັດຈຸບັນນີ້ກຳລັງຢູ່ໃນໄລຍະວ່າງຈ້າງໃນ "ການສຳຫລວດຂັ້ນທຳອິດ" ເຊິ່ງເຈາະໄປແລ້ວ 12000 ແມັດ ແລະເຫັນບໍ່ແຮ່ 500 ບໍ່ແຮ່), ຍ້າຍໄປຫາ "ການສຳຫລວດໃນອະນາຄົດ" (ເພີ່ມເຕີມອີກ 18000 ແມັດແລະຕ້ອງເຫັນ 700 ບໍ່ແຮ່) ໃນກາງປີ 2008 ແລະສຳເລັດການສຶກສາຄວາມເປັນໄປໄດ້ຂອງໂຄງການໃນເດືອນທັນວາ 2008

***ເອກະສານມີຢູ່ທີ່ ??***

***ວຽງຈັນທາຍມ໌ 2007***

**ລາວແລະຈີນອາດພັດທະນາພາກເຫນືອແລະແຂວງຍຸນນານເພື່ອຊ່ວຍພັດທະນາແຂວງພາກເຫນືອ, 4 ເມສາ**

**ຈີນເປັນຜູ້ລົງທຶນທີ່ຫລາຍກວ່າຫມູ່ໃນລາວ, 6 ມິຖຸນາ**

ໃນວັນທີ 3 ເດືອນເມສາທີ່ວຽງຈັນ, CPI ແລະລັດຖະບານແຫ່ງຈີນຂອງແຂວງຍຸນນານ "ໄດ້ເຊັນລົງນາມ 11 ສະບັບກ່ຽວກັບການຮ່ວມມືການລົງທຶນທີ່ມີມູນຄ່າເຖິງ 1.5 ລ້ານດອລລ່າ" ໃນນັ້ນລວມມີການພັດທະນາພະລັງງານນ້ຳຕົກ (ໂຄງການນ້ຳເພື່ອງ), ການກະສິກຳ ແລະ ຂະບວນການອຸດສາຫະກຳໃນວຽງຈັນ ແລະ ຂະບວນການອຸດສາຫະກຳໃນວຽງຈັນ ແລະ ເຈັດແຂວງພາກເຫນືອຂອງລາວ,

ການປູກຢາງຢູ່ສີ່ແຂວງພາກເຫນືອ ແລະໂຮງງານເຫລັກ[6] (ສັນນິຖານວ່າຢູ່ແຂວງຊຽງຂວາງ) ແລະການຂຸດຄົ້ນຖ່ານຫີນ. ໃນເດືອນມິຖຸນາ ອາດຈະກໍາລັງໄຕ່ຕອງເລື່ອງການຫຍຸດໂຄງການຊົ່ວຄາວຂອງການສໍາປະທານໃນປັດຈຸບັນ. ຜູ້ຈັດການທົ່ວໄປຂອງ DP ໄດ້ອ້າງວ່າ "ເຖິງແມ່ນວ່າລັດຖະບານຂອງເຮົາຕ້ອງການຈະຫຍຸດສະຫງັກການລົງທຶນໃນຂະແຫນງການຂຸດຄົ້ນບໍ່ແຮ່ ເພື່ອຈະອະນຸຍາດໃຫ້ການຄົ້ນຄວ້າຢ່າງກວ້າງຂວາງໃນຄວາມເປັນໄປໄດ້ຂອງຜົນກະທົບທາງລົບ, ຂ້າພະເຈົ້າເຊື່ອວ່າ ປະເທດຈີນຍັງຄົງເປັນປະເທດອັນດັບຫນຶ່ງທີ່ລົງທຶນຢູ່ ສ.ປ.ປ.ລາວ ຖ້າຫາກວ່າປະເທດຈີນລົງທຶນທຸລະກິດໃນຫລາຍໆຂະແຫນງການ" ໃນເດືອນເມສາທີ່ມີຫົວຂໍ້ທີ່ໄດ້ວາງແຜນແລ້ວ - ເພື່ອປະເຊີນກັບຄວາມປະສົງ - ການພັດທະນາ, ຄວາມສໍາພັນລະຫວ່າງຄໍາອ້າງອີງນີ້, ການຫຍຸດໂຄງການການສໍາປະທານທີ່ດິນຊົ່ວຄາວ ແລະປັດຈຸບັນມີການສ່ຽງຂອງໂຄງການຫລາຍຂຶ້ນໂດຍຄະນະກໍາມະການການຄຸ້ມຄອງທີ່ດິນແຫ່ງຊາດກ່ຽວກັບວ່າມັນຈະໄປສຸດຢູ່ໃສ (ວຽງຈັນທາຍມ໌ 2007c) ແລະການຊ່ວຍເຫລືອ ໄດ້ບອກໄວ້ໃນບົດຄວາມ "ຈາກພາກສ່ວນທີ່ຫນ້າສົນໃຈຈາກຍູນນານ" ໃນ "ການຊ່ວຍເຫລືອໃນການວາງແຜນການໃຫຍ່ທີ່ຈະພັດທະນາເສດຖະກິດແລະອຸດສາກະກໍາ" ໃນເກົ້າພາກເຫນືອຍັງຄົງຢູ່ໃນຄວາມສົນໃຈ ແລະອາດຈະເປັນການໂຕ້ວາທີກັນຕື່ມ.

### ເອີດ ຊີສເຕັມລາວ (ບໍ່ມີວັນທີ) ເອກະສານກ່ຽວກັບໂຄງການ

ບໍລິສັດຜູ້ຊ່ຽວຊານເອີດ ຊີສເຕັມລາວ ໄດ້ເຮັດວຽກກ່ຽວກັບ ອົງການວິທະຍາສາດເຕັກໂນໂລຊີ ແລະສິ່ງແວດລ້ອມ ແລະ ເຮັດວຽກກັບໂຄງການຂຸດຄົ້ນບໍ່ແຮ່ເຊໂປນ ແລະ ພູເບ້ຍ. ເອີດ ຊີສເຕັມລາວ ມີເອກະສານບາງເອກະສານ (ຢ່າງນ້ອຍກໍ່ແມ່ນແປດເອກະສານທີ່ກ່ຽວກັບກິດຈະກໍາຂອງບໍລິສັດທີ່ພົວພັນກັບເຊໂປນ, ພູເບ້ຍ ແລະ ກົມທໍລະນີສາດ ແລະບໍ່ແຮ່) ແລະ ສະເຫນີ ແຕ່ບໍ່ໄດ້ຕອບກັບທາງຈົດຫມາຍອີເລັກໂທຣນິກສໍາລັບຂໍ້ມູນທີ່ຂຶ້ນກັບການຮ້ອງຂໍ

***ເອກະສານມີຢູ່ທີ່*** www.esl.laopdr.com ***ແລະ*** www.earthsystems.com.au/lao_eng.htm

## 3.3 ພາກສ່ວນການການສິກໍາ ແລະ ການປູກຝັງ

ການສຶກສາໂດຍລວມໃນພາກນີ້ແມ່ນກ່ຽວກັບຂະແຫນງການກະສິກໍາ ແລະ ການປູກຝັງ, ຈາກຫລາຍສຽງແລະຫລາຍກໍລະນີທີ່ລວມຢູ່ໃນການສົນທະນາກັນກ່ຽວກັບການສໍາປະທານທີ່ດິນທີ່ສະແດງອອກມາ. (ຂະແຫນງປ່າຜະລິດແມ່ນບໍ່ໄດ້ລວມຢູ່ໃນບົດລາຍງານນີ້ເນື່ອງຈາກວ່າມັນບໍ່ໄດ້ອາໄສການສໍາປະທານ

---

[6] ວຽງຈັນທາຍມ໌ ເດືອນເມສາ 2007 ຫົວຂໍ້ໄດ້ໃຫ້ຕົວເລກລາຍລະອຽດທີ່ມີຄ່າໃນການອ່ານກ່ຽວກັບແຜນການຂະແຫນງການພັດທະນາການຂຸດຄົ້ນບໍ່ແຮ່ຂອງ ທະນາຄານໂລກ (ອະທິບາຍໃນຕອນ 3.2) ໂຮງງານເຫລັກໄດ້ຄ່າຂອງການຜະລິດຄື 5 ແສນໂຕນຕໍ່ປີ, ແລະລັດຖະບານຂອງແຂວງຢຸນນານໄດ້ລາຍງານວ່າ "ມີຈຸດປະສົງຈະພັກການຮ່ວມມືໃນການກໍ່ສ້າງຄົມມະນາຄົມ" ເນັ້ນໃສ່ "ການເຊື່ອມຕໍ່ກັບຕອນກາງຂອງລົດໄຟສິງກະໂປ-ຄຸນຫມິງ", "ທາງດ່ວນຄຸນຫມິງ-ບາງກອກໃນພາກສ່ວນລາວ" (ເສັ້ນທາງທີ 3) ແລະ "ການເດີນເຮືອຈາກລານແກນ-ແມ່ນ້ຳຂອງ ເພື່ອຈະຕິດຕໍ່ກັບເຄືອຂ່າຍການຄົມມະນາຄົມຂອງຈີນຕໍ່ລາວ" ໃຫ້ເກີດຜົນ.

ທີ່ດິນ[7]) ສໍາລັບສາມເຫດຜົນ, ພາກສ່ວນນີ້ເຂົ້າຄອບຄຸມ "ນະໂຍບາຍເນື້ອທີ່" ຫລາຍທີ່ສຸດໃນການໂຕ້ວາທີກ່ຽວກັບການສໍາປະທານທີ່ດິນ ແລະການວິເຄາະຊ່ອງຫວ່າງໄດ້ສະເຫນີໄວ້ທາງລຸ່ມໃນເອກະສານຕິດຄັດ 2. ກ່ອນອື່ນຫມົດ, ພື້ນທີ່ກໍ່ສ້າງໂຄງການການປູກຕົ້ນໄມ້ທີ່ມີຢູ່ແລ້ວ ແລະການຄາດຫວັງກ່ຽວກັບດິນ ນັ້ນແມ່ນມີໃຫ້ແລ້ວສໍາລັບການປ່ຽນແປງເພື່ອທີ່ຈະປູກ[8] ໃຫ້ພາກສ່ວນກະສິກໍາແລະການປູກຝັງເປັນພາກສ່ວນພິເສດໃນການສົນທະນາກ່ຽວກັບການພັດທະນາ, ການລົງທຶນ ແລະການດໍາລົງຊີວິດເພາະວ່າປະຊາຊົນລາວເຮົາແມ່ນຊາວກະສິກອນ. ສອງມາ ຄວາມສໍາຄັນຂອງການຫລຸດນ້ອຍຖອຍລົງຂອງສິ່ງແວດລ້ອມ ແມ່ນໄດ້ມີການບັນຍາຍເຊິ່ງຂະແຫນງການພັດທະນາກະສິກໍາ ແລະ ການປູກຝັງ ແມ່ນໄດ້ຜ່ານການສົນທະນາແລ້ວ ແລະ ຫມາຍຄວາມວ່າຄໍາຖາມສໍາລັບການມີທີ່ດິນ ແລະ ຄວາມເຫມາະສົມສໍາລັບກະສິກໍາ ແລະ ການປູກຝັງແມ່ນໄດ້ເພີ່ມການຕໍ່ລອງ ແລະຄວາມບໍ່ແນ່ນອນຂອງການແປຄວາມຫມາຍຂອງຊັບພະຍາກອນເຊັ່ນ: ແຮ່ທາດ ຫລືໄມ້ທ່ອນ. ສ່ວນທີ່ສາມແມ່ນທາງເລືອກອື່ນໆທີ່ຍັງເຫລືອ ແມ່ນການສັນຍາຜູກຂາດທີ່ມີການຖົກຖຽງກັນໃນການສ້າງພື້ນທີ່ສໍາລັບຂະແຫນງການກະສິກໍາ ແລະ ການປູກຝັງ. ສຸດທ້າຍ, ມີສິ່ງຫນຶ່ງທີ່ແມ່ນ "ອຸປະທານການຄັດເລືອກຕົວຢ່າງ": ການຄົ້ນຄວ້າທີ່ເປັນເອກະລາດໄດ້ແນໃສ່ຂະແຫນງການກະສິກໍາ ແລະ ການປູກຝັງທີ່ຫລາຍກວ່າການພິຈາລະນາການຂຸດຄົ້ນບໍ່ແຮ່, ປ່າໄມ້, ພະລັງງານນໍ້າ, ອຸດສາຫະກໍາ ແລະ ຂະແຫນງການທ່ອງທ່ຽວ, ບາງເທື່ອອາດເປັນຍ້ອນການປະສົມກັນຂອງສາມເຫດຜົນຂ້າງເທິງ, ແລະພ້ອມທັງອີງຕາມການພົວພັນໃນການແຍກຕົວທາງກາຍະພາບ ແລະ ເຫດຜົນທາງການເມືອງໃນຂະແຫນງການຂຸດຄົ້ນບໍ່ແຮ່, ພະລັງງານນໍ້າ ແລະ ການເຂົ້າຮ່ວມຂອງທະຫານໃນການທໍ້ຖອຍໃຈໃນການຄົ້ນຄວ້າທີ່ບໍ່ຂື້ນກັບໃຜ.

### Alton, Bluhm ແລະ ສົມສັກ 2005 - ການສຶກສາຢາງພາລາ, ສ.ປ.ປ.ລາວ, ໂຄງການ GTZ RDMA

ໃນການລົງເຮັດວຽກໃນພື້ນທີ່ລະຫວ່າງສອງຫາສາມເດືອນໃນເມືອງສິງ (ຫລວງນໍ້າທາ), ພາກເຫນືອຂອງໄທ ແລະຢຸນນານ ແລະການຄົ້ນຄວ້າເພີ່ມເຕີມໃນວຽງຈັນ, ການຄົ້ນຄວ້ານີ້ແມ່ນການອະທິບາຍຊ່ອງວ່າງລະຫວ່າງແມ່ນຫຍັງທີ່ຮູ້ກັນແທ້ທີ່ກ່ຽວກັບສັງຄົມ, ເສດຖະກິດ, ເຕັກນິກທີ່ເກີດຂື້ນຢູ່ບໍລິເວນນັ້ນ. ການຄົ້ນພົບມີ **(1)** "ການປູກຢາງພາລາແລະຂ່າວລືກ່ຽວກັບການປູກແມ່ນແຜ່ຫລາຍຢູ່ໃນ ສ.ປ.ປ.ລາວ. ສະຖານະການກ່ຽວກັບຢາງແມ່ນປ່ຽນແປງຢ່າງໄວວາ ທີ່ກະຊວງກະສິກໍາແລະປ່າໄມ້ບໍ່ມີ

---

[7] ການຄາດຫວັງຄັ້ງນີ້ແມ່ນ ການສໍາປະທານຊັບພະຍາກອນປ່າໄມ້ລ້ານຊ້າງ (HIPA) ປົກຄຸມ 6 ແສນເຮັກຕາ ແຕ່ວ່າຈະໄດ້ຫລຸດລົງ 10ພັນ ເຮັກຕາຕາມຂໍ້ກ່າວຫາ (GTZ 2006a:79) ແລະສະແດງຜົນເທິງແຜນທີ່ໃນ Hodgdon (2007); ເບິ່ງເອກະສານຕິດຄັດ 4.

[8] ຮູບການສໍາປະທານທີ່ດິນແມ່ນຍາກທີ່ຈະເຮັດອອກມາ; 5ແສນເຮັກຕາແມ່ນຖືກອ້າງອີງເລື້ອຍໆວ່າ ແມ່ນເປົ້າຫມາຍຂອງອຸດສາຫະກໍາຂອງການປູກຕົ້ນໄມ້ (Lang & Shoemaker 2006:4); ໃນເດືອນກຸມພາ, ຄະນະກໍາມະການການວາງແຜນແລະການລົງທຶນຄາດວ່າ 17 ບໍລິສັດແມ່ນມີເນື້ອທີ່ແລ້ວ 2ແສນ ເຮັກຕາ ໃນການສໍາປະທານທີ່ດິນເພື່ອປູກຢາງ. ເບິ່ງເອກະສານຕິດຄັດ 1.

ເນື້ອທີ່ປູກຝັງໂດຍປະມານເລີຍ". (6); **(2)** ພື້ນທີ່ທີ່ປູກຢາງໃນປີ 2005 ອາດຈະປະມານ 50000 ເຮັກຕາ; **(3)** "ນັກລົງທຶນຈີນ, ຫວຽດນາມ, ໄທ (ແລະອາດມີປະເທດອື່ນໆ) ກໍາລັງຄົ້ນຄວ້າທີ່ຈະລົງທຶນໃນຂະແຫນງການການປູກຢາງໃນ ສ.ປ.ປ.ລາວ, ແລະ ພວກເຂົາຊອກຫາການສໍາປະທານທີ່ດິນ ແລະການກະກຽມຕ່າງໆ(6);[9] **(4)** ໃນທາງກົບກັນຂ້າມຂອງເລື່ອງການພັດທະນາຄວາມປະສົງໂດຍສະເພາະ, ການສຶກສາຄວາມເຫມາະສົມຂອງດິນ "ເບິ່ງຄືວ່າແມ່ນສິ່ງທີ່ຈໍາເປັນຕ້ອງເຮັດກ່ອນສໍາລັບບໍລິສັດຢາງຫວຽດນາມເພື່ອຈະຕັດສິນໃຈໃນການລົງທຶນໃນລາວ" (6); ເຖິງແມ່ນວ່າຈະໃຊ້ວິທີການທາງວິທະຍາ - ໂດຍສະເພາະແມ່ນແຜນທີ່ທີ່ເຫມາະສົມກັບແຜນທີ່ທີ່ບໍ່ເຫມາະສົມ - ຕ້ອງການສໍາລັບການລົງທຶນໃນອະນາຄົດ; **(5)** "ການຕ້ອງການເນື້ອທີ່ຂອງບຸກຄົນພາຍນອກ ແລະຄວາມປາດຖະຫນາ [ຂອງບາງຊຸມຊົນ] ເພື່ອຈະປູກຢາງປະກອບກັບການຈະສ້າງສະຖານະການໃນຂະນະທີ່ [ຊາວບ້ານ] ບາງເທື່ອອາດເຕັມໃຈທີ່ຈະໃຫ້ເນື້ອທີ່ດິນຂອງພວກເຂົາບາງສ່ວນເພື່ອແລກປ່ຽນກັບທຶນ ຫລືການສະຫນັບສະຫນູນໃນການປູກຢາງ" (43); **(6)** ຂັ້ນຕອນການລົງທຶນແມ່ນໄດ້ອະທິບາຍຢ່າງລະອຽດ (ໃນເອກະສານຕິດຄັດ) ເຖິງແມ່ນວ່າ "ເຂົ້າໃຈຍາກ" **(7)** ຄຸນນະພາບຂອງການກວດຄືນບົດສັນຍາ 4 ບົດ ແມ່ນໄດ້ໃຫ້ຄວາມຕ້ອງການຢ່າງຫລວງຫລາຍ, ຈາກທັດສະນະຄະຕິຄວາມໂປ່ງໃສ ແລະຜົນປະໂຫຍດຂອງບໍລິສັດ (86-7). ບາງເທື່ອອາດແມ່ນສໍາຄັນທີ່ສຸດໃນການໂຕ້ວາທີຂອງການສໍາປະທານທີ່ດິນ **(8)** ໃນການສົນທະນາກັບເລື່ອງບໍລິສັດປູກຢາງ ຕ້ອງການສໍາປະທານດິນທີ່ມີເນື້ອທີ່ກວ້າງ, ການສຶກສາໂດຍປະມານໄດ້ສະແດງໃຫ້ເຫັນວ່າການສໍາປະທານທີ່ດິນທີ່ກວ້າງຢູ່ຫລວງນໍ້າທາຍັງເລື່ອນລອຍ ແລະ ຍັງບໍ່ແມ່ນການສະແດງຜົນທາງຂະແຫນງການນິເວດວິທະຍາ (ຈໍາພວກພູມີປະເທດຂອງພູ), ແຕ່ຫລາຍກວ່າການຕັດສິນໃຈຂອງພະນັກງານລັດທ້ອງຖິ່ນ.

**Hunt, Glenn 2005. ການປູກຂອງ SSNC-BGA ລົງຢ້ຽມຢາມຄໍາມ່ວນ: ລາຍງານການລົງພື້ນທີ່ວັນທີ 4 ເມສາ**

ບົດລາຍງານບົດນີ້ໄດ້ສະຫລຸບການຢ້ຽມຢາມ 1 ມື້ ໃຫ້ແກ່ [ບໍລິສັດລາວປູກຕົ້ນໄມ້] BGA ຫ້ອງການເມືອງຫີນບູນ ແລະສ່ວນແບ່ງຫມູ່ບ້ານໃນແຂວງຄໍາມ່ວນ ຂອງການສໍາປະທານທີ່ດິນຂອງບໍລິສັດ. ສິ່ງທີ່ພົບເຫັນຈາກການໄປຢ້ຽມຢາມຫ້ອງການມີ **(1)** ປະເດັນທີ່ດິນແມ່ນ "ເປັນປະເດັນທີ່ສໍາຄັນທີ່ສຸດ" ບໍລິສັດປະເຊີນຫນ້າກັບ "ຍ້ອນວ່າເວລາທີ່ຄົນໄດ້ທີ່ດິນແລ້ວ, ບາງຄົນກໍ່ຕ້ອງເສຍທີ່ດິນສະເຫມີ" (ທ່ານ Hunt ທີ່ເປັນຕົວແທນຂອງບໍລິສັດທີ່ເຜີຍແຜ່ບົດຄວາມຈາກໂຄງເລື່ອງຂອງບໍລິສັດ) **(2)**; ໃນການປະຕິບັດໂຄງການສອງສາມປີຫລັງ "ໄດ້ປະຕິບັດກິດຈະກໍາການພັດທະນາຊຸມຊົນແບບຫລາກຫລາຍ" ກ່ຽວພັນເຖິງຫົນທາງ (ທີ່ບໍລິສັດໄດ້ຈ່າຍໃຫ້) ໂຮງຮຽນ, ວັດ ແລະໄຟຟ້າ (ສາມຢ່າງສຸດທ້າຍແມ່ນກັບ

[9] ໃນການທີ່ຈະສົນທະນາກັບເລື່ອງການພັດທະນາການປູກຢາງຂຶ້ນກັບ "ການສໍາປະທານທີ່ດິນແລະການຈັດການຕ່າງໆ" (ຕົວຢ່າງ: ສັນຍາຜູກຂາດ), ການສຶກສາຄັ້ງນີ້ໄດ້ໃຫ້ລາຍລະອຽດເສດຖະກິດຂອງຄອບຄົວກັບການເປັນຜູ້ຖືຫຸ້ນຂະຫນາດນ້ອຍ (ເຖິງແມ່ນວ່າລັດຖະບານຈະຢູ່ເບື້ອງຫລັງກໍ່ຕາມ)

ແຮງງານ ຫລືການປະກອບສ່ວນທາງດ້ານການງານ "ເລັກໆນ້ອຍໆ" ຈາກປະຊາຊົນ)[10]; (3) ບັນຊີຂອງໂຄງການສຳປະທານທີ່ດິນແມ່ນໄດ້ໃຫ້ໂດຍຕົວແທນຂອງສັງຄົມ ແລະສິ່ງແວດລ້ອມຂອງບໍລິສັດທີ່ໄດ້ກ່າວວ່າ ການສຳປະທານທີ່ດິນແມ່ນໄດ້ປະຕິບັດແລ້ວ. (i) ຮອງຫົວໜ້າຂອງບໍລິສັດໄດ້ມາເຖິງໝູ່ບ້ານ (ii) ຫລັກສຳຄັນຂອງຊາວບ້ານແມ່ນຊາວບ້ານຕ້ອງການທີ່ດິນ (iii) ຕາມຂໍ້ຕົກລົງຂອງແຂວງ, ເມືອງ ແລະຊາວບ້ານ ແລະ (iv) ອີງຕາມກົດໝາຍ. ໃນລະຫວ່າງທີ່ລົງຢ້ຽມຢາມບ້ານ, (4) ບັນຊີໄດ້ຖືກນຳມາໃຫ້ໂດຍຫົວໜ້າ ແລະຕົວແທນຈາກບໍລິສັດໄດ້ຖິ້ມຄວາມສັບສົນກ່ຽວກັບສ່ວນປະກອບຂອງການດຳລົງຊີວິດທີ່ຂຶ້ນກັບການຖາງປ່າເຮັດໄຮ່, ແລະບໍ່ເຫັນດີກ່ຽວກັບບໍລິສັດທີ່ມີບົດບາດໃນການສຳປະທານທີ່ດິນ (cf. ທີ່ເຫັນໄດ້ໃນ 3.1 ຂ້າງເທິງ); (5) ນາຍບ້ານໄດ້ຕ້ອນຮັບໂຄງການຄືວ່າເປັນຜູ້ໃຫ້ແຮງງານ, ເພີ່ມເຕີມ (i) ໃນວັນທີ "ຄົນບາງຈຳນວນເທົ່ານັ້ນທີ່ໄດ້ເປັນພະນັກງານຖາວອນ", ພະນັກງານພວກນີ້ຢືນຢັນເນື້ອທີ່ຊັດເຈນ, ການສີດຢາຂ້າສັດຕູພືດ ແລະການໃຊ້ປຸ໋ຍ ແລະ (ii) ມັນ "ຍາກທີ່ຈະເວົ້າ" ວ່າວຽກເສີມຂອງເຂົາເຈົ້າມີເລື້ອຍປານໃດ; (6) ເປົ້າໝາຍທີ່ດິນສຳລັບການອະນຸລັກສຳລັບການປູກແມ່ນແບບປ່າລາວ; ແລະ (7) ຢູ່ໃນລະຫວ່າງການສົນທະນາຢ່າງບໍ່ເປັນທາງການຂອງສະມາຊິກໃນທີມ, ຫົວໜ້າທີມໄດ້ລາຍງານວ່າ, ໃນຂະນະທີ່ຖາມວ່າຮູ້ສຶກແນວໃດທີ່ຕ້ອງໄດ້ໃຫ້ດິນໃຫ້ແກ່ບໍລິສັດ, ທີ່ໝູ່ບ້ານບໍ່ມີຄວາມສາມາດທີ່ຈະຕໍ່ລອງ ໃນຂະນະທີ່ຕົວແທນຂອງບໍລິສັດໄດ້ນຳພະນັກງານປ່າໄມ້ແຂວງໄປນຳ.

***ເອກະສານມີຢູ່ທີ່*** *ingoproject@laopdr.com*

Hunt, Glenn 2006. **ການປູກຝັງທີ່ດິນກວ້າງໃຫຍ່ທີ່ເມືອງປາກກະດິງ: ລາຍງານຈາກການຢ້ຽມຢາມໂຄງການພັດທະນາຊົນນະບົດແບບປະສົມປະສານທີ່ປາກກະດິງ, ວັນທີ 23 ມີນາ**

ບົດລາຍງານບົດນີ້ ຂຶ້ນກັບການລົງຢ້ຽມຢາມພື້ນທີ່ 1 ວັນ, ໄດ້ແນໃສ່ສາມສີ່ພື້ນທີ່ຂອງໂຄງການ NGO ບ່ອນທຳອິດແມ່ນຢູ່ Oji [ບໍລິສັດ ປ່າໄມ່ປູກລາວ ຈຳກັດ] ໂຄງການປູກຕົ້ນໄມ້ວີກ, ບ່ອນທີສອງແມ່ນການສຳປະທານການປູກຕົ້ນປາມທີ່ໄດ້ຖືກລະຖິ້ມໂດຍ "ນັກລົງທຶນມາເລເຊຍທີ່ບໍ່ມີຄຳອະທິບາຍ", ແລະບ່ອນທີສາມແມ່ນບ່ອນທີ່ເສຍຊື່ສຽງທີ່ສຸດຄືສວນປູກໝາກພ້າວປາກກະດິງ (cf. VT 2007a). ສິ່ງທີ່ພົບເຫັນມີ (1) ຊາວບ້ານໃນເຂດສາມໂຄງການນັ້ນສູນເສຍການເຂົ້າເຖິງຊັບພະຍາກອນທຳມະຊາດຂອງເຂົາເຈົ້າລວມມີທັງເນື້ອທີ່ເຂດດິນຕອນເທິງ; (2) ການຊົດເຊີຍ, ເຖິງແມ່ນວ່າຈະແປໃຫ້ຢ່າງກວ້າງຂວາງເຊິ່ງລວມມີທັງພະນັກງານ, ເຊິ່ງກໍ່ບໍ່ເຂົ້າຮ່ວມນຳ ຫລືວ່າເປັນແບບ "ມີຂໍ້ຈຳກັດຫລາຍຂອງພະນັກງານ"; (3) ໂຄງການທີ່ຖືກຕ້ອງຕາມກົດໝາຍຂອງທັງສອງ (ບ່ອນທີ1) ແລະໂຄງການ "ທີ່ໜ້າສົງໃສ" (ບ່ອນທີ 2 ແລະບ່ອນທີ 3) ລວມມີການສຳປະທານທີ່ດິນ "ແມ່ນເປັນເຫດໃຫ້ເກີດຄວາມຍາກລຳບາກແກ່ຊາວບ້ານ" ທີ່ບ່ອນທີ 1, ບົດລາຍງານໄດ້ກ່າວວ່າ "ການບຽດບຽນ

[10] ເບິ່ງ High (2006) ສຳລັບການສົນທະນາທີ່ສຳຄັນຂອງການປະກອບສ່ວນຂອງສັງຄົມຂຶ້ນກັບແຮງງານ

ຊັບພະຍາກອນໃນຫມູ່ບ້ານແມ່ນຟືນສະແດງຂອງ [700-800 ເຮັກຕາ] ເນື້ອທີ່ປູກຝັງ" ນັ້ນແມ່ນການທີ່ໂຄງການບໍ່ໄດ້ຊົດເຊີຍຢ່າງຕະຫລອດຮອດຝັ່ງ, ອີກຢ່າງໂດຍການຊົດເຊີຍທາງດ້ານການເງິນໂດຍກົງ, ໂອກາດຂອງແຮງງານ ຫລືພື້ນຖານໂຄງລ່າງ. ຊັບພະຍາກອນໄດ້ສູນເສຍໃຫ້ທີ່ດິນທີ່ໃຊ້ປູກຝັງລວມມີທັງດິນກະສິກຳເຂດຕອນເທິງ, ເນື້ອທີ່ປ່າໄມ້ທີ່ໃຊ້ເພື່ອຜົນຜະລິດຂອງເຄື່ອງປ່າຂອງດົງ, ແລະດິນທີ່ສະຫງວນໄວ້ໃຫ້ຄອບຄົວໃຫມ່ - ຊາວບ້ານໄດ້ບອກຄວາມກັງວົນວ່າ "ບໍ່ມີຫນໍ່ໄມ້ພຽງພໍ [ເທົ່າທີ່ບອກ] ທີ່ບ່ອນທີ່ໄປເອົາສຳລັບຫມົດທຸກຄົນໃນຫມູ່ບ້ານ" ແລະໄດ້ບອກກ່ຽວກັບການລາຍງານວ່າ ພວກເຂົາໄດ້ຂໍໃຫ້ເອົາເຮືອນໄວ້ແຕ່ກໍ່ບໍ່ມີໃຜມາສົນໃຈເລີຍ. ສະມາຊິກທີມ (ພະນັກງານ NGO) ກໍ່ໄດ້ພັນລະນາໃນສະຖານະການທີ່ NGO ໄດ້ສະຫນັບສະຫນູນຄືການເຮັດທົ່ນທາງ ເຊິ່ງໃຊ້ໃນການປູກຝັງ ແລະການຕັດໄມ້ ເຊິ່ງຕໍ່ມາໄດ້ກາຍເປັນການປະເຊີນຫນ້າກັບການຜະລິດກິດຈະກຳຂອງໂຄງການ (cf. UNDP 2006: 97). ໃນບ່ອນທີ 2, ບົດລາຍງານໄດ້ບັນລະຍານເຖິງການລະຖິ້ມກົນຈັກຫນັກ, ການຢູ່ໃຫ້ກັບປ່າໄມ້ ແລະພະນັກງານ NGO ໄດ້ສິດຕັດໄມ້ເອງ, ໃນການທີ່ຈະເດົາວ່າພື້ນທີ່ນັ້ນກ້ຽງ, ຖືກປູກດ້ວຍຕົ້ນປານ (ເຊິ່ງປັດຈຸບັນນີ້ແມ່ນມີຫຍ້າຂື້ນປົກຄຸມໄປຫມົດ) ແລະຖືກລະຖິ້ມ. ທາງທີມງານໄດ້ອອກຄວາມເຫັນວ່າ "ຊາວບ້ານຫນຶ່ງຫລືສອງຄົນໄດ້ກັບໄປຄືນທີ່ພື້ນທີ່ນັ້ນແລະປູກເຂົ້າໃສ່ [ແຕ່ວ່າ] ເຄື່ອງປ່າຂອງດົງແມ່ນບໍ່ເຫລືອເລີຍ" ຍ້ອນວ່າພື້ນທີ່ນັ້ນ "ເປັນດິນເສຍທີ່ເຕັມໄປດ້ວຍຕົ້ນປານ ແລະຫຍ້າ". ໃນບ່ອນທີ 3, ທາງທີມງານໄດ້ລາຍງານວ່າ ການຕັດໄມ້ໄດ້ຕັດດິນຂອງສາມຫມູ່ບ້ານ ເຊິ່ງໃນອະດີດໄດ້ໃຊ້ເປັນບ່ອນເອົາເຄື່ອງປ່າຂອງດົງ, ການລ່າ ແລະບາງເທື່ອກໍ່ປູກເຂົ້າ ແລະຕໍ່ມາແມ່ນການພັດທະນາປູກຕົ້ນຫມາກພ້າວ - ແຕ່ວ່າບໍ່ເກີດຜົນ, ແຫ້ງແລ້ງ ແລະການປົກຫຸ້ມຂອງຫນໍ່ຕົ້ນຫມາກພ້າວ (ສະຫນັບສະຫນູນໂດຍການສຳພາດກ່ຽວກັບລັດທີ່ບໍ່ມີການທຳງານກ່ຽວກັບການເບິ່ງແຍງຫນໍ່ຂອງຕົ້ນຫມາກພ້າວ) - ແນະນຳວ່າ "ເປົ້າຫມາຍຂັ້ນຕົ້ນຂອງການປູກຕົ້ນໄມ້ບໍ່ແມ່ນການປູກຕົ້ນຫມາກພ້າວ ແຕ່ແມ່ນມີຄວາມຕ້ອງການທີ່ຈະຖອນໄມ້ທ່ອນ". ການສະຫລຸບນີ້ແມ່ນໄດ້ຮັບການສະໜັບສະໜູນໂດຍຄວາມຈິງທີ່ວ່າຕົ້ນໄມ້ຍັງຄົງເກີດຂື້ນເຖິງວ່າປັດຈຸບັນຈະມີການລະຖິ້ມ ແລະ ພື້ນທີ່ດິນປູກຝັງບໍ່ໃຫ້ຜົນຜະລິດທີ່ພື້ນທີ່ທີ 2 - ເຊິ່ງປຽບໄດ້ທາງຂະຫນາດ (ແລະຮູບຖ່າຍທາງພູມີປະເທດ) ຕ່ຳກວ່າ 30 km

***ເອກະສານມີຢູ່ທີ່ ເຄືອຂ່າຍຂອງ INGO** [ingoproject@laopdr.com](mailto:ingoproject@laopdr.com)*

**Diane, Atonella 2006. ການປ່ຽນແປງຢູ່ເລື້ອຍໆຂອງເສດຖະກິດ-ສັງຄົມ ຂອງການປູກຢາງຢູ່ຊາຍແດນຂອງລາວ**

**ບົດລາຍງານການລົງຕົວຈິງ**

ໃນການລົງຄົ້ນຄວ້າຕົວຈິງທີ່ພື້ນທີ່ເປັນເວລາ 4 ອາທິດ ໃນປີ 2005 ໄດ້ດຳເນີນໃນລະຫວ່າງໄລຍະການລົງພື້ນທີ່ສຳລັບການສຶກສາການແກ້ໄຂບັນຫາເສດຖະກິດຢູ່ແຖວຊາຍແດນຈີນ-ລາວ, ບົດລາຍງານນີ້ໄດ້ຂຽນຂື້ນເພື່ອເປັນສ່ວນປະກອບຂອງທ່ານ Alton ແລະເພື່ອນຮ່ວມງານ (2004) ລາຍງານ

ວ່າ "ກັບລາຍລະອຽດການວິເຄາະເພີ່ມເຕີມຂອງປ່າໄມ້ສັງຄົມ, ໃນການ "ຍ້າຍຕົ້ນໄມ້ໄປປູກບ່ອນໃຫມ່" ໃນພາກເຫນືອຂອງລາວ, ເຊິ່ງຂັດກັບພື້ນຖານຂອງການຂ້າມຊາຍແດນກັບຈີນ". ດັ່ງທີ່ທ່ານ Alton ກັບຄະນະທີມງານ, ທ່ານ Diana ໄດ້ແນໃສ່ການຜະລິດແບບນ້ອຍໆ. ການຄົ້ນພົບຂອງທ່ານ Diana ມີ (1) ພື້ນທີ່ໄດ້ໃຊ້ລະບົບການປູກຈາກຫ້ອງການກະສິກໍາປ່າໄມ້ເມືອງ ແລະຫ້ອງການກະສິກໍາແລະປ່າໄມ້ແຂວງ ເຊິ່ງສອນທາງກັບນະໂຍບາຍລະດັບຊາດຕາມຄວາມຈິງ "ອະນຸຍາດໃຫ້ການສໍາປະທານທີ່ດິນໃຫ້ການປູກຝັງແກ່ຊາວຈີນ [ນັກທຸລະກິດ]", (2) ລະບົບພື້ນບ້ານແມ່ນຍັງສ້າງບັນຫາໃຫ້ແກ່ຊາວບ້ານຢູ່ ເຊິ່ງຜູ້ທີ່ຕ້ອງການປູກຢາງຕື່ມອີກນອກຈາກເຂດດິນກະສິກໍາ, ແລະຜູ້ທີ່ຮຽກຮ້ອງວ່າລະບົບການແບ່ງເຂດແມ່ນຍັງສັບສົນຫລາຍ"[11]. ບາງເທື່ອສິ່ງສໍາຄັນທີ່ສຸດໃນການໂຕ່ວາທີວ່າດ້ວຍການສໍາປະທານ (3) ການຕົກລົງປູກຢາງ ແມ່ນປູກກັບຄອບຄົວແລະລະບົບເຄືອຂ່າຍສັງຄົມອື່ນໆ, ຫລາຍກວ່າການຂື້ນກັບສັນຍາໂດຍກົງ, "ໄດ້ຮັບການຢັ້ງຢືນວ່າມີຄວາມປອດໄພຕໍ່ຊາວນາຫລາຍຂື້ນໃນເງື່ອນໄຂຂອງທຶນ ແລະການສັນຍາທີ່ດິນແມ່ນມີຄວາມຫນ້າສົງໄສໃນເງື່ອນໄຂຂອງການນໍາແຮງງານເຂົ້າມາ ແລະການຕອບແທນຕະຫລາດຂອງກາວລາເຕັກ, ແລະ ໄລຍະເວລາຂອງການປ່ອຍດິນ" ແລະ ນອກຈາກນັ້ນ ຍັງມີຄວາມສ່ຽງສູງເນື່ອງຈາກວ່າພວກເຂົາໃຊ້ເນື້ອທີ່ກວ້າງກວ່າເກົ່າ ແລະ "ຫລຸດຜ່ອນດິນທີ່ເຫລືອໃຫ້ແກ່ຊາວນາໃນຕະລອດໄລຍະຂອງສັນຍາ (30-40 ປີ)
***ເອກະສານເອົາໄດ້ຈາກຜູ້ຂຽນ*** *Antonella.Diana@anu.edu.au*

**Lang & Shoemaker 2006. ການສ້າງຄວາມທຸກຈົນໃນລາວ: ທະນາຄານພັດທະນາອາຊີ ແລະ ອຸດສາຫະກໍາການປູກໄມ້**

ການໂຕ້ຖຽງທີ່ວ່າ "ປ່າໄມ້ແລະດິນທໍາມະດາແມ່ນສິ່ງສໍາຄັນໃນລະບົບການດໍາລົງຊີວິດຂອງຊຸມຊົນຊົນນະບົດໃນລາວ" ແລະ ໂດຍສະເພາະແມ່ນຊາວບ້ານທີ່ທຸກທີ່ສຸດ "ຜູ້ທີ່ຂື້ນກັບປ່າໄມ້ຫລາຍທີ່ສຸດ" ສໍາລັບການດໍາລົງຊີວິດ, ບົດລາຍງານບົດນີ້ໄດ້ກໍານົດເອົາ ທະນາຄານພັດທະນາອາຊີທີ່ໃຊ້ກໍາລັງໃນການປູກຕົ້ນໄມ້ຂັ້ນທໍາອິດ, ມີການໂຕ້ຖຽງວ່ານີ້ແມ່ນ "ຂື້ນກັບຫລັກຖານປອມ - ທີ່ມີເນື້ອທີ່ກວ້າງທີ່ບໍ່ໄດ້ໃຊ້ ຫລືຢູ່ພາຍໃຕ້ການເຊື່ອມໂຊມ ຂອງປ່າໄມ້...ທີ່ມີຄ່ານ້ອຍຫລືບໍ່ມີເລີຍສໍາລັບຊຸມຊົນ" (2) ອີງຕາມເອກະສານການວິເຄາະຂອງທະນາຄານພັດທະນາອາຊີ, ສິ່ງທີ່ພົບເຫັນມີຄື: (1) ການປະເມີນຜົນຂອງທະນາຄານພັດທະນາອາຊີແມ່ນໂຄງການປູກຕົ້ນໄມ້ອຸກສາຫະກໍາ (1993-2003) ແມ່ນບໍ່ປະສົບຜົນສໍາເລັດແລະການສະແດງຜົນຂອງມັນກໍ່ບໍ່ຫນ້າປະທັບໃຈ (2) ດັ່ງທີ່ຫລັກຖານທາງເອກະສານໄດ້ສະແດງມາແລ້ວຫລາຍສ່ວນ, "ຍັງມີພື້ນຖານທີ່ຍັງປະຕິບັດຢູ່ແຕກຕ່າງກັນໃນການເຂົ້າໃຈກັນເຊັ່ນ

[11] ທ່ານ Diana ໄດ້ຂຽນວ່າສິ່ງທີ່ຄຸກຄາມຢ່າງແທ້ຈິງທີ່ມີຕໍ່ກັບຊາວນາຜູ້ທຸກຈົນແມ່ນມາຈາກການປາບພື້ນທີ່ພ້ອມທັງການສະສົມຂອງຊາວນາຜູ້ທີ່ຮັ່ງມີ-ໃນການຂັດແຍ້ງກັນຢ່າງເປັນທາງການ [ຫລັກຄວາມຍຸດຕິທໍາ] ຂະບວນການອະນຸຍາດໃຫ້ທີ່ດິນ-ຕັດສິນຊາວນາຜູ້ທຸກຈົນໃນໂອກາດທີ່ຈະເກີດກວດ, ເຂົ້າເຖິງເນື້ອທີ່ການປູກຝັງ. Ducourtieux ແລະທີມງານ (2005) ລາຍງານສິ່ງທີ່ພົບເຫັນທີ່ຄ້າຍຄືກັນຢູ່ແຂວງ ໄຊຍະບູລີ

ການນຳໃຊ້ທີ່ດິນແນວໃດ ແລະ ຄ່າຂອງມັນຕໍ່ກັບບຸກຄົນພາຍນອກ (ພະນັກງານທະນາຄານພັດທະນາອາຊີ ແລະພະນັກງານລັດຖະບານສູນກາງ) ກັບຊາວບ້ານທ້ອງຖິ່ນ", ເຊິ່ງໄດ້ຄົ້ນພົບຫລາຍກໍລະນີ "ພວກເຂົາໄດ້ເວົ້າວ່າ ພວກເຂົາບໍ່ໄດ້ຫລຸດຈຳນວນເນື້ອທີ່ປ່າໄມ້" ແລະໃຊ້ປ່າໄມ້ສຳລັບການປູກເຂົ້າ, ການເພີ່ມຈຳນວນຂອງສັດລ້ຽງ ແລະສຳລັບການສະສົມໄມ້ທ່ອນ, ພືນ, ໄມ້ໄຜ່, ແລະເຄື່ອງປ່າຂອງດົງ; ແລະ (3) ຫລັກຖານທີ່ເກີດຈາກການສັງເກດນີ້ແມ່ນກົງກັນຂ້າມກັນ (ຖ້າຜູ້ຫນຶ່ງແນໃສ່ຄຳວ່າ "ບໍ່" ໃນການອ້າງອີງຂ້າງລຸ່ມ) ຫລືຖ້າສົນໃຈຫລາຍກວ່ານັ້ນ, ຄຳຖາມກ່ຽວກັບຂະບວນການເສດຖະກິດທີ່ມີຄຸນຄ່າ (ຖ້າຜູ້ໃດແນໃສ່ຄຳວ່າ "ນ້ອຍ") ອ້າງອີງໃນ - ທະນາຄານພັດທະນາອາຊີຢືນຢັນວ່າ "ການປູກອາດຈະຖືກສ້າງຂຶ້ນໃນບ່ອນທີ່ປ່າໄມ້ເຊື່ອມໂຊມ ເຊິ່ງອາດຈະມີຄ່າທາງເສດຖະກິດຫລືບໍ່ມີເລີຍ"

***ເອກະສານມີຢູ່ທີ່*** *http://chrislang.org/tag/lao*

Lang, Chris 2006. **ການຂະຫຍາຍຕົວຂອງອຸດສາຫະກຳການປູກຕົ້ນໄມ້ຢູ່ໃນກຳປູເຈຍ ແລະລາວ**

ອີງຕາມການດຳເນີນການຄົ້ນຄວ້າຄັ້ງທຳອິດແລະຄັ້ງທີສອງໃນທ້າຍປີ 2006, ບົດລາຍງານບົດນີ້ໄດ້ສະເຫນີລາຍລະອຽດບາງສ່ວນກ່ຽວກັບຂະແຫນງການປູກຕົ້ນໄມ້ໃນພາກເຫນືອຂອງລາວ ແລະທັງມີການປະກົດວ່າມີການປຽບທຽບກັນລະຫວ່າງລາວ ແລະກຳປູເຈຍ. ສິ່ງທີ່ພົບເຫັນມີ (1) ການສຳປະທານການປູກຕົ້ນໄມ້ແມ່ນເປັນລາງວັນໃຫ້ແກ່ ບໍລິສັດຢາງຫວຽດນາມຢູ່ພາກໃຕ້, ກັບບໍລິສັດຢາງຈີນຢູ່ທາງພາກເຫນືອ ແລະບໍລິສັດ ຈີນແລະອິນເດຍ ໃນແຂວງຈຸດສູນກາງ; (2) ປຽບທຽບກັບກຳປູເຈຍ, ການສຳປະທານທີ່ຂຶ້ນກັບການປ່ຽນແປງສັນຍາໃນລາວ ແມ່ນພົວພັນເຖິງການສົນທະນາໃນການແກ້ໄຂປ່າໄມ້ ແລະການຫລຸດລົງຂອງປ່າໄມ້ຫລາຍກວ່າ; (3) ໂຄງການປູກຢາງ Dac Lac ທີ່ມີເນື້ອທີ່ 10000 ເຮັກຕາຢູ່ທາງພາກໄຕ້ໄດ້ຖືກບັນລະຍາຍວ່າເປັນແບບທີ່ໃຫ້ເພີ່ມຂຶ້ນເປັນ 50000 ຫລື 100000 ຂອງເນື້ອທີ່ດິນສະເຫນີໃຫ້ແກ່ບໍລິສັດຫວຽດນາມ; (4) ອ້າງອີງເຖິງປັດຈຸບັນຂອງ "ດິນທີ່ເຊື່ອມໂຊມ", ໂຄງການ "ໄດ້ຈ່າຍຄ່າຊົດເຊີຍໃນບ່ອນທີ່ຕັດພືດທີ່ເປັນລາຄາ, ແຕ່ບໍ່ຮັບຈ່າຍໃນບ່ອນທີ່ເປັນນາເຂົ້າຢູ່ດິນຕອນເທິງຂອງຊາວນາ"; (5) ມີປ້າຍຫ້າມໃຫ້ສັດລ້ຽງໄປກິນຫຍ້າຢູ່ໃນໂຄງການປູກຢາງໃນແຂວງຈຳປາສັກເທົ່າທີ່ສັງເກດໄດ້; ແລະ (6) ຊາວບ້ານ 4 ຄົນໄດ້ພົບກັບທີມຄົ້ນຄວ້າໄດ້ຮັບເງິນຈຳນວນ 1$ ຕໍ່ມື້ໃນການທຳຄວາມສະອາດພື້ນທີ່ຫລັງຈາກສຳເລັດກິດຈະກຳ

***ເອກະສານມີຢູ່ທີ່*** *http://chrislang.org/tag/laos*

Hunt Glenn 2007. **ການຕັດສິນໃຈຂອງບ້ານ ແລະຄວາມຕ້ອງການຂອງບ້ານ. ບົດຮຽນຈາກສອງອາສາສະຫມັກຍີ່ປຸ່ນ, ໝູ່ບ້ານເປົ້າຫມາຍ. ການສະເໜີຜົນງານທີ່ກະຊວງກະສິກຳແລະປ່າໄມ້/ຄະນະກຳມະການຄຸ້ມຄອງທີ່ດິນແຫ່ງຊາດກ່ຽວກັບການສົນທະນາການປູກໄມ້, ວັນທີ 15 ກຸມພາ.**

ບົດສະເໜີຜົນງານ, ທີ່ຂຶ້ນກັບການຄົ້ນຄວ້າຂອງທ່ານ Hunt ອີງຕາມຫລັກຖານຈາກສອງໝູ່ບ້ານທີ່ໄດ້ປະຕິເສດທີ່ຈະເຂົ້າຮ່ວມ ໂຄງການການສຳປະທານການປູກຕົ້ນໄມ້ໃນການທີ່ຈະຂຽນບົດສະຫລຸບກ່ຽວກັບ ຂະບວນການຂໍຄວາມເຫັນທີ່ລວມມີໂຄງການສຳປະທານທີ່ "ການສຳປະທານ" ແມ່ນແບບສອບຖາມການສຳປະທານ, ສະຖານທີ່ທີ່ຊາວບ້ານໃນພື້ນທີ່ການສຳປະທານມີສິດໃນການຕໍ່ລອງແລະປະຕິເສດ. ສິ່ງທີ່ພົບເຫັນໃນໝູ່ບ້ານທຳອິດມີ (1) ຂະບວນການຂອງຫ້ອງການການວາງແຜນການນຳໃຊ້ທີ່ດິນ ແລະການກຳນົດດິນທີ່ເກີດຂຶ້ນໄດ້ສົ່ງຜົນກະທົບຕໍ່ຊາວບ້ານ" ມີການຕັດສິນໃຈຍ້ອນວ່າ, ໃນທາງກົງກັນຂ້າມກັບໝູ່ບ້ານອື່ນໆທີ່ທາງຫ້ອງການການວາງແຜນການນຳໃຊ້ທີ່ດິນ ແລະການກຳນົດທີ່ດິນ ເບິ່ງຄືວ່າມີການໂອນທີ່ດິນຈາກໝູ່ບ້ານ, ໃນໝູ່ບ້ານນີ້ໄດ້ສ້າງການມີອຳນາດ ແລະຄວາມຮັບຜິດຊອບ; ແລະ (2) "ການເຊື່ອມໂຊມຂອງດິນຕໍ່ປະຊາຊົນແມ່ນບໍ່ຄືກັນກັບການເຊື່ອມໂຊມຂອງດິນສຳລັບບໍລິສັດ" ໂດຍສະເພາະແມ່ນ "ຊາວບ້ານໄດ້ແຈ້ງການວ່າທີ່ດິນປັດຈຸບັນນີ້ຕົກເປັນເປົ້າໝາຍສຳລັບການປູກຕົ້ນໄມ້...ສຳລັບຄວາມແຕກຕ່າງແລະ ຫລາກຫລາຍຂອງການດຳລົງຊີວິດ". ໃນໝູ່ບ້ານທີ 2, (3) ບໍລິສັດປູກໄມ້ມີກົນລະຍຸດເຂົ້າເຖິງຊາວບ້ານໃນ 4 ໂອກາດແຕກຕ່າງກັນ, ແຕ່ໃນແຕ່ລະຄັ້ງບໍ່ປະສົບຜົນສຳເລັດ, ໃນຄວາມພະຍາຍາມທີ່ຈະເອົາດິນທີ່ບໍລິສັດປູກຕົ້ນໄມ້ນັ້ນ ເຊິ່ງອາດຈະຕົກກັບດິນຕອນນ້ອຍໆ ທີ່ພວກເຂົາໄດ້ປ້ອງກັນໃນໝູ່ບ້ານຂ້າງໆ; (4) ຊາວບ້ານໄດ້ຖາມອາສາສະມັກຍີ່ປຸ່ນ (ທີ່ມີໂຄງການຢູ່ໃນບ້ານຂອງເຂົາເຈົ້າ) ທີ່ເຂົ້າແຊກແຊງເຖິງຜົນປະໂຫຍດຂອງເຂົາເຈົ້າກັບຫ້ອງການຂອງບໍລິສັດທີ່ວຽງຈັນ, ເພື່ອທີ່ຈະໄປຖາມຄຳຖາມ; (5) ບໍລິສັດທີ່ວຽງຈັນໄດ້ລາຍງານວ່າລາວບໍ່ໄດ້ລະວັງກ່ຽວກັບກິດຈະກຳປະເພນີ ແລະຄິດວ່າທາງບໍລິສັດຈະນັບຖືຄວາມຕ້ອງການຂອງຊາວບ້ານ.

***ເອກະສານມີຢູ່ທີ່ ເຄືອຂ່າຍຂອງ INGO** ingoproject@laopdr.com*

**Barney, Keith 2007a. ບົດລາຍງານໂດຍຫຍໍ້ກ່ຽວກັບການສຳປະທານປ່າໄມ້ ແລະ ການຂັດແຍ້ງຂອງສັງຄົມໃນແຜ່ນດິນໃຫຍ່ອາຊີຕາເວັນອອກສ່ຽງໃຕ້ (ຮ່າງສະບັບວັນທີ 24 ເມສາ 2007)**

ບົດລາຍງານຂອງທ່ານ Barney 3 ໜ້າ, ທີ່ຂຶ້ນກັບວັນນະຄະດີທີ່ມີຢູ່ ແລະການສະແດງຄວາມເຫັນຂອງທ່ານເອງໃນເວລາທີ່ທ່ານລົງຕົວຈິງ ແລະການສະລຸບຫຍໍ້ປະຫວັດຂອງການສຳປະທານທີ່ດິນ ແລະ ສະຖານະການປັດຈຸບັນໃນການປະເຊີນໜ້າກັບການຂັດແຍ້ງທາງທີ່ດິນໃນປະເທດໄທ, ລາວ, ກຳປູເຈຍ, ຫວຽດນາມ ແລະມຽນມ້າ. ສິ່ງທີ່ພົບເຫັນໃນ ສ.ປ.ປ.ລາວ ມີ: (1) ການສຳປະທານການປູກໄມ້ເຊິ່ງເຂດກິດຈະກຳປະກອບມີ "ເຂດມີບັນຫາ" ສຳລັບພາກສ່ວນການປູກຕົ້ນໄມ້ຍ້ອນວ່າ (i) ໄລຍະຂອງເຂົາເຈົ້າເຕັງກັນກັບໄລຍະທີ່ໝູ່ບ້ານກຳລັງເຮັດການກະສິກຳ ແລະ (ii) ມີສິດນ້ອຍໃນການມີສ່ວນຮ່ວມ ຫລື ເປັນຕົວແທນໃຫ້ແກ່ຂະບວນການແບ່ງເນື້ອທີ່" (2) ຄວາມພະຍາຍາມໃນ "ການຈັດການແບບຍືນຍົງແລະລະບຽບຂອງຂະແໜງການປູກຕົ້ນໄມ້" ໄດ້ "ກ່ຽວກັບຄວາມພໍໃຈ" (3)

ຄວາມພະຍາຍາມນີ້, ພ້ອມທັງການເລີ່ມມາແຕ່ຕົ້ນ "ສ້າງຄວາມໝັ້ນຄົງໃຫ້ແກ່ປ່າຕອນເທິງຂອງປະຊາຊົນ (ເບິ່ງ GTZ 2007), ແມ່ນໄດ້ຖືກທ້າທາຍໂດຍ "ການບັງຄັບທາງດ້ານເສດຖະກິດການເມືອງທີ່ສຳຄັນຫລັງການລົງທຶນຂອງການປູກໄມ້; **(4)** ໃນຕົ້ນປີ 2007, ຄະນະກຳມະການການວາງແຜນແລະການລົງທຶນໄດ້ບົ່ງຂໍ້ມູນວ່າ "ເນື້ອທີ່ຕ່ຳທີ່ສຸດ 150000 ເຮັກຕາໄດ້ຖືກບໍລິຈາກໃຫ້ແກ່ບໍລິສັດປູກໄມ້ (ລວມມີປູກຢາງ ແລະຕົ້ນວິກ) ເປັນຕົວແທນໃຫ້ແກ່ການລົງທຶນ $500 ລ້ານ; ແຜນ ແລະຄວາມກົດດັນທີ່ຢູ່ໃນຂອບເຂດ; ແລະ **(5)** ໂຄງຮ່າງການຈັດຕັ້ງກົດຫມາຍສຳລັບການຈັດການ ແລະກົດຫມາຍສຳລັບການລົງທຶນຕ່າງປະເທດໂດຍກົງ (ແລະໂດຍສະເພາະແມ່ນການສຳປະທານທີ່ດິນ) ແມ່ນ "ຍັງຄົງຢູ່ພາຍໃຕ້ການພັດທະນາ" ການຊອກຫາຈາກປະເທດອື່ນໆແມ່ນຄ້າຍຄືກັບສະຖານະການໃນປະເທດລາວເຊິ່ງລວມມີ (a) ຂະບວນການສຳປະທານທີ່ດິນໄດ້ເລີ່ມຈາກ "ການຕົກລົງໃນບຸລິມະສິດ" ສຳລັບຂະໜາດຂອງເນື້ອທີ່ດິນເຊິ່ງບໍ່ມີລາຍລະອຽດປະກົດ (ກຳປູເຈຍ), **(b)** ການຂັດແຍ້ງກັນທາງດ້ານທີ່ດິນລະຫວ່າງຊຸມຊົນແລະ ລັດວິສາຫະກິດປ່າໄມ້ (SFE) ບໍ່ຈຳເປັນທີ່ຈະຕ້ອງອະນຸມັດໃຫ້ລັດວິສາຫະກິດປ່າໄມ້ຂອງຫວຽດນາມ ແລະ (c) ຄວາມຂັດແຍ້ງລະຫວ່າງທຳນຽມ ແລະຂໍ້ບັດຍັດຕໍ່ລະບົບຜູ້ເຊົ່າຊັບພະຍາກອນຕ້ອງໄດ້ເຂົ້າໃຈ ຜ່ານການພົວພັນຂອງເຂົາເຈົ້າເພື່ອທີ່ຈະ "ຕັດ [ເກົ່າແລະໃຫມ່] ລະຫວ່າງຄວາມທຸກຈົນ, ເສດຖະກິດສັງຄົມ ແລະຄວາມຍຸດຕິທຳທາງສັງຄົມ" (ໃນທົ່ວປະເທດ)

***ເອກະສານມີຢູ່ທີ່ຜູ້ຂຽນ*** *kbarney@yorku.ca*

Barney Keith 2007b. **ພະລັງງານ, ການເພີ່ມຂື້ນ ແລະ ການເຮັດໃຫ້ດິນຈືດ: ການປູກຕົ້ນໄມ້, ພະລັງງານໄຟຟ້ານ້ຳຕົກ, ນິເວດມີການປ່ຽນແປງ ແລະ ຊຸມຊົນກໍ່ມີການປ່ຽນແປງຢູ່ເຂດເມືອງຫີນບູນຂອງ ສ.ປ.ປ.ລາວ**

**ບົດລາຍງານຈາກພາກສະໜາມ**

ອີງຕາມການສັງເກດຂອງການທີ່ໄດ້ດຳເນີນໃນປີ 2005-2007 ຢູ່ເຂດເມືອງຫີນບູນ ເຊິ່ງແມ່ນພາກສ່ວນຫນຶ່ງຂອງ Oji-LPFL (formerly BGA) ຂອງໂຄງການປູກຕົ້ນໄມ້ ແລະແມ່ນເຂດລຸ່ມກ້ອງເຂື່ອນຂອງໂຄງການພະລັງງານໄຟຟ້ານ້ຳເທີນຫີນບູນ, ບົດລາຍງານດັ່ງກ່າວແມ່ນການສຶກສາກ່ຽວກັບດິນ ໂດຍການສັງເກດຢ່າງຊັດເຈນ ເພື່ອຈະຊ່ວຍໃຫ້ທ່ານ Barney ສາມາດຂຽນບົດນິພົນປະລິຍາເອກທາງດ້ານພູມີສາດ. ບົດລາຍງານທີ່ແມ່ນຂໍກຸນແຈພົບເຫັນແມ່ນເນັ້ນໃສ່ການພັດທະນາການປູກຕົ້ນໄມ້ ແລະເນັ້ນໃສ່ຄວາມໂປ່ງໃສຂອງໂຄງການ, ການຂັດສິດຜົນປະໂຫຍດເຊິ່ງໄປຄຽງຄູ່ກັນກັບລະບຽບຫລັກການຂອງການປະຕິບັດກິດຈະກຳ ແລະການສືບສວນວິທີການນຳໃຊ້ເພື່ອເຂົ້າໃຈ

ການປະຕິບັດຢູ່ບ້ານ, ຄວາມບໍ່ເຫມາະສົມນໍາການນໍາໃຊ້ທະນາຄານພັດທະນາ ແລະ ການບໍ່ແບ່ງຜົນກໍາໄລຂອງໂຄງການລົງທຶນຈາກເອກະຊົນ. ໂດຍສະເພາະ (1) ການສະຫລຸບຂອງບົດລາຍງານຢ່າງຈະແຈ້ງ (ບໍ່ຕ້ອງສົງໃສ) ຫລືວ່າຍ້ອນມີບັນດາບໍລິສັດຫລາຍພາກສ່ວນກ່າວໃນບົດລາຍງານນີ້…ຈຶ່ງໄດ້ເນັ້ນໃຫ້ມີການກະທໍາ ໂດຍການບັງຄັບໄດ້ປະຕິບັດຢ່າງເຫມາະສົມກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການເຂົາເຈົ້າ. ໂດຍການເນັ້ນຫນັກໃຫ້ມີການປະຕິບັດຢ່າງມີຫມາກຜົນ ເພື່ອທົດແທນສິ່ງທີ່ຊຸມຊົນໄດ້ສູນເສຍຍ້ອນໂຄງການຜະລິດໄຟຟ້ານໍ້າຕົກນີ້ (8). ສິ່ງທີ່ພົບເຫັນສະເພາະອີກຢ່າງຄື: (2) ບໍລິສັດປູກປ່າລາວ ຈໍາກັດ (LPFL) ມີຈຸດປະສົງວາງເປົ້າຫມາຍ "ທໍາລາຍປ່າ" ເພື່ອມາປູກຕົ້ນວິກ ແຕ່ຂາດເງື່ອນໄຂປັດໃຈຕ່າງໆເພື່ອວິເຄາະສິ່ງນັ້ນ. (3) ດິນທີ່ມີແຜນມອບໃຫ້ (LUPLA) ມີຂະບວນການນໍາໃຊ້ຕາມຈຸດປະສົງສະເພາະດິນທີ່ຊາວບ້ານບໍ່ໄດ້ນໍາໃຊ້. ແຕ່ຊາວບ້ານພັດບໍ່ມີອົງການທ້ອງຖິ່ນທີ່ຈະມີອິດທິພົນຕໍ່ຂະບວນການນີ້ໄດ້. (4) ໄລຍະສໍາເລັດໂຄງການການສໍາປະທານທີ່ດິນອີງໃສ່ຂໍ້ຕົກລົງລະຫວ່າງບໍລິສັດ ແລະລັດ (ຕົວຢ່າງ ການໃຫ້ຂໍ້ຜູກມັດດ້ານອຸປະກອນຕ່າງໆເພື່ອພັດທະນາບ້ານ) ກໍ່ເຫັນວ່າຍັງບໍ່ທັນໂປ່ງໃສແລະ ຈະແຈ້ງ ແລະຍັງບໍ່ທັນສະດວກແກ່ຊາວບ້ານ ກໍ່ຄືຜູ້ສັງເກດການທີ່ກ່ຽວຂ້ອງອີກດ້ວຍ; (5) ພາກສ່ວນພາຍນອກໄດ້ຮັບຜົນປະໂຫຍດຢ່າງຈະແຈ້ງຈາກການໄດ້ຈ້າງງານຢ່າງມີຜົນດີທີ່ໂຄງການໄດ້ນໍາມາໃຫ້ໃນຊ່ວງປີ 2005-2006. (6) ເມື່ອສົມທຽບການກັບປ່ອຍວາງບໍ່ໃຫ້ສິດ. ການທົດແທນມອບໃຫ້ຊາວບ້ານ ເພື່ອເຂົ້າໄປນໍາໃຊ້ທີ່ດິນ ເຫັນວ່າຍັງບໍ່ທັນເຫມາະສົມ, ຍິ່ງໄປກວ່ານັ້ນ, ຊາວບ້ານຮູ້ສຶກວ່າສິ່ງທີ່ໄດ້ຮັບຍັງບໍ່ທັນມີຜົນປະໂຫຍດຫຍັງເລີຍທີ່ໄດ້ຈາກໂຄງການ. ເຂົາເຈົ້າເຫັນວ່າ ເຂົາໄດ້ຕັດສິດທິເພື່ອທໍາການເພາະປູກ; (7) ຊາວບ້ານບໍ່ມີກົນໄກການສະເຫນີຂໍ້ຂ້ອງໃຈຢ່າງເປັນທາງການທີ່ຈະສະເຫນີຕໍ່ໂຄງການ ແລະກໍ່ມີຄວາມຜິດຫວັງບໍ່ໄດ້ຜົນປະໂຫຍດ ຖ້າຫາກວ່າອໍານາດການປົກຄອງທ້ອງຖິ່ນຖືກບໍລິສັດຊື້ຈ້າງຈ່າຍເງິນໃຫ້ເຂົາ; (8) ໄດ້ຮັບສາປະທານດັ້ງເດີມ ແມ່ນໄດ້ຮັບເງິນກູ້ຈາກທະນາຄານພັດທະນາອາຊີ ເຊິ່ງແມ່ນໂຄງການປູກຕົ້ນໄມ້ອຸດສາຫະກໍາ (ITPP) ເພື່ອເລີ່ມຕົ້ນໂຄງການ; (9) ຂໍ້ມູນພື້ນຖານຂອງຜູ້ໄດ້ຮັບສໍາປະທານສໍາລັບການນໍາໃຊ້ດິນຕົວຈິງ ເຊິ່ງໄດ້ມອບໃຫ້ເພື່ອຕໍ່ສູ້ທາງດ້ານການພັດທະນາ ປູກຕົ້ນໄມ້ໂດຍທົ່ວໄປ ແລະ CDM ໄດ້ຮັບການແຕ່ງຕັ້ງມາເປັນທາງການເພື່ອຊຸກຍູ້ລະດັບທີ່ມີຢູ່ແລ້ວນີ້. ເຖິງຢ່າງນັ້ນກໍ່ຕາມ ກໍ່ບໍ່ປາສະຈາກຄວາມຜິດພາດໄດ້ຕໍ່ລະບົບການປູກຝັງທີ່ອີງໃສ່ການດໍາລົງຊີວິດຕົວຈິງຂອງຊາວບ້ານ; (10) ບັນຫາສ້າງຂື້ນໂດຍການພັດທະນາກິດຈະກໍາການປູກຕົ້ນໄມ້ເຮັດໃຫ້ມີຄວາມໂກດເຄືອງຕໍ່ຜົນກະທົບດ້ານລົບ ຕໍ່ຊາວບ້ານທີ່ຢູ່ກ້ອງເຂື່ອນ ຈາກການສ້າງໂຄງງການພະລັງງານໄຟຟ້ານໍ້າຕົກ ເຊິ່ງໄດ້ເຮັດໃຫ້ເນື້ອທີ່ການກະສິກໍາທີ່ຢູ່ຕາມແຄມຝັ່ງຂອງປະຊາຊົນນໍ້າຖ້ວມ. ສິ່ງດັ່ງກ່າວນີ້ ໄດ້ເຮັດໃຫ້ຊາວບ້ານໄດ້ໄປອາໃສການປູກຝັງຢູ່ເຂດດິນເນີນສູງ ແລະ (11) BGA ບົດປະເມີນຜົນທາງດ້ານສັງຄົມ ແລະສິ່ງແວດລ້ອມໄດ້ປະເມີນໂດຍຜູ້ຊ່ຽວຊານຄົນຫນຶ່ງໃນປີ 2002 ແຕ່ບໍ່ໄດ້ເນັ້ນຫນັກເຖິງຜົນໄດ້ຮັບດ້ານລົບຈາກການກໍານົດເຂດດິນເນີນສູງ (ການຈູດປ່າເພື່ອການກະສິກໍາ) ເພື່ອພັດທະນາການປູກຝັງ

***ເອກະສານມີຢູ່ທີ່*** *http://www.yorku.ca/Publications/YCAR_Working_Paper_Series.html*

**DOF-JICA 2007. ໂຄງການທົດລອງວິທີການພັດທະນາການສໍາຫລວດເພື່ອວິເຄາະປ່າທີ່ຖືກທໍາລາຍຢ່າງແຮງໃນເຂດດິນທີ່ຈະມີການປ່ຽນໄປເຮັດຢ່າງອື່ນ ໂດຍອີງໃສ່ເທັກໂນໂລຊີພາບຖ່າຍທາງດາວທຽມ**

ການສຶກສາດັ່ງກ່າວໄດ້ອີງໃສ່ວິທີການຕ່າງໆສໍາລັບພາບຖ່າຍທາງດາວທຽມ, ພາບຖ່າຍທາງອາກາດ (ໄດ້ຖ່າຍທຸກໆປີ, ແຕກຕ່າງທາງລະດູການ ແລະທາງດ້ານຂະໜາດ) ເພື່ອກໍານົດວິເຄາະຜົນເຊື່ອມໂຊມຂອງດິນໃນການປ່ຽນແປງໄປເປັນດິນປູກຝັງ. ເຂດພູມີສາດສໍາລັບການສຶກສາແມ່ນ ເມືອງອາດສະພັງທອງ ແຂວງສະຫວັນນະເຂດ ເຊິ່ງເປັນເຂດທີ່ຫ່າງໄກສອກຫລີກ - ປະກອບດ້ວຍ SPOT 5 (2006) ແລະ LandSAT (ລະຫວ່າງປີ 1970 ຫາປີ 2004) ພ້ອມດຽວກັນກໍ່ໄດ້ປຽບທຽບການສໍາຫລວດຂອງຊາວບ້ານ ແລະສະຖານທີ່ສໍາປະທານດິນ. ການສະເໜີຜົນສໍາຫລວດມີການຊັກຊ້າຈົນມາຮອດທ້າຍເດືອນ ກໍລະກົດ 2007.

Lestrelin, Guillaume 2007. **ການເຊື່ອມໂຊມຂອງດິນຢູ່ໃນລາວ: ການປະກົດເປັນຈິງ ແລະການບັນລະຍາຍ**

ເອກະສານນີ້ແມ່ນ ການຕໍາໜິຕໍ່ຄໍາຮ້ອງຂໍ ເຊິ່ງການພັດທະນາຢູ່ລາວ ໄດ້ຖືກນາບຊູ່ຈາກລະບົບການເຊື່ອມໂຊມຂອງດິນ ແຜ່ຂະຫຍາຍອອກໄປຈາກດິນຖືກເຊາະເຈື່ອນ, ການເຊື່ອມໂຊມຈາກການທໍາລາຍປ່າໄມ້ ເຊິ່ງພົວພັນກັບຜົນກະທົບຢູ່ກ້ອງເຂື່ອນ (4) ນີ້ບໍ່ໄດ້ໝາຍຄວາມວ່າແມ່ນການພົວກັນໂດຍກົງກັບການສໍາປະທານທີ່ດິນ, ໄດ້ເວົ້າເຖິງການເຊື່ອມໂຊມຂອງການພັດທະນາດິນຕອນເທິງ ແລະ ການຖາມເຖິງການເຂົ້າເຖິງຂອງບ່ອນທີ່ສໍາປະທານທີ່ດິນທາງດ້ານການຈັດການ ແລະຕົວຢ່າງການພັດທະນາແບບນິຍົມ. ສິ່ງທີ່ພົບເຫັນມີ (1) "ຫລາຍກວ່າການວາງໃຈໃນການສັງເກດຫລັກຖານ, ການສົນທະນາກ່ຽວກັບສິ່ງແວດລ້ອມໄດ້ຖືກສ້າງຕັ້ງຂື້ນແບບວັນນະຄະດີຢ່າງເປັນທາງການປະກົດວ່າ ອີງຕາມການຄາດການລ່ວງໜ້າຫລາຍເກີນໄປ ພິຈາລະນາສາຍສໍາພັນແບບບັງເອີນລະຫວ່າງປ່າໄມ້ ແລະການກວດລ້າງພື້ນທີ່. ການເຊື່ອມໂຊມຂອງດິນ, ການຕົກຕະກອນ ແລະ ລະບອບການປົກຄອງແຫ່ງວິທະຍາສາດນໍ້າ ແລະຈາກນີ້, ກ່ຽວກັບປະເດັນສັງຄົມ ແລະເສດຖະກິດຄືຄວາມທຸກຈົນ, ໃນລະຫວ່າງການຜະລິດກະສິກໍາ ແລະຄວາມປອດໄພຂອງອາຫານ" (6); (2) ດິນຕອນເທິງ "ຜູ້ທີ່ຢູ່ເທິງນໍ້າ" ແລະຜູ້ທີ່ມີຄວາມອ່ອນແອທາງດ້ານນິເວດວິທະຍາຕາມຄໍາກ່າວ (ອີງຕາມຄວາມບາງຂອງດິນ ແລະຄວາມສູງຊັນຂອງດິນເປັນການຄຸມຄາມ ການປະເຊີນໜ້າກັນຂອງຜົນຜະລິດ ຂອງການພັດທະນາຊັບພະຍາກອນແຫ່ງຊາດ (ດິນຕອນລຸ່ມທີ່ກ່ຽວກັບການກະສິກໍາ ແລະພະລັງງານນໍ້າ), ຍັງຄົງມີຈຸດສໍາຄັນຂອງ "ການເຊື່ອມໂຊມ" ໃນການໂຕ້ວາທີ່ກ່ຽວກັບ ແລະການປະຕິບັດຂອງການຈັດວາງອານາເຂດໃໝ່ຄືກັນກັບ ການວາງແຜນການໃຊ້ທີ່ດິນ ແລະການກໍານົດທີ່ດິນ ແລະການຈັດສັນໝູ່ບ້ານໃໝ່ (BOX 5: ອານາເຂດ); ແຕ່ວ່າ, (3) ການຜູກມັດກັບປະເດັນຂອງຜົນຜະລິດຂອງດິນຕອນເທິງ

ແລະການເຂົ້າເຖິງແມ່ນໄດ້ມີການແນະນຳເພີ່ມຂື້ນເພື່ອໃຫ້ເປັນຮູບເປັນຮ່າງ ໃຫ້ເປັນທີ່ນິຍົມ ແລະ ຫລຸດກົນລະຍຸດການຈັດການການພັດທະນາດິນຕອນເທິງ

***ເອກະສານມີຢູ່ທີ່ຜູ້ຂຽນ*** *guillaume.lestrelin@durham.ac.uk*

**BOX 5: ທິດສະດີກ່ຽວກັບການນຳໃຊ້ເຄື່ອງມື: ອານາເຂດ**

ແນວຄວາມຄິດຂອງອານາເຂດ - ການປະຕິບັດການສ້າງອານາເຂດ - ໄດ້ຖືກພັດທະນາໂດຍນັກວິທະຍາສາດການເມືອງ ທ່ານ Robert Sack ຜູ້ທີ່ສັງເກດວ່າ ລັດສ້າງ ແລະຈັດການອານາເຂດເຫມືອນດັ່ງຍຸກປະຖົມບູຮານ. ແນວຄວາມຄິດໂດຍປະມານໄດ້ອ້າງອີງເຖິງທິດສະດີຂອງທ່ານ Max Weber ກ່ຽວກັບລັດ, ແລະ ສະຖານທີ່ຕັ້ງທີ່ບໍ່ຍອມໃຫ້ມີສິດທີ່ຈະໃຊ້ພື້ນທີ່ທີ່ເອົາໃຫ້, ແຕ່ວ່າປ່ຽນແປງມັນໄປໃນທາງທີ່ສຳຄັນສອງທາງ: ທາງທີ 1: ສິດທິຫນື່ງດຽວໃນຄວາມຮຸນແຮງແມ່ນບໍ່ອະນຸຍາດ, ມັນຕ້ອງການຄວາມເອົາໃຈໃສ່ຕໍ່ເນື່ອງຕໍ່ກິດຈະກຳທີ່ໄດ້ສ້າງຕັ້ງຂື້ນ ແລະ ຮັກສາກົດລະບຽບຂອງລັດໃນອານາເຂດ. ທາງທີ 2, ການສ້າງກິດຈະກຳແບ່ງອານາເຂດຂອງລັດແມ່ນສຳຄັນ ຕໍ່ເສດຖະກິດແລະສັງຄົມ. ພ້ອມກັນນັ້ນ, ການປະຕິບັດຂອງອີງການແບ່ງອານາເຂດ, ການດູແລ ແລະການຈັດວາງໃຫມ່ (ຫລືການແບ່ງອານາເຂດແບບສັ້ນ) - ກິດຈະກຳປະເພດພື້ນຖານໂຄງລ່າງ, ຊີວະພີຊີກ, ແລະການບໍລິຫານການຈັດປະເພດຂອງທີ່ດິນ, ນິຍາມ ແລະການແບ່ງບັນທີ່ດິນໃຫມ່ຂອງເມືອງ ແລະບ້ານ, ແລະການເກັບພາສີ - ປະກອບມີສ່ວນສຳຄັນຂອງກິດຈະກຳກັບການພົບປະກັນຂອງປະຊາກອນ ແລະປະຕິກິລິຍາຕໍ່ລັດ ແລະ ການກົບກັງຂ້າມກັນກັບການຮຽນແບບຂອງການໃຊ້ປະໂຫຍດຈາກລັດ ແລະ ການປ້ອງກັນປະຊາກອນຂອງເຂົາເຈົ້າ. ການແບ່ງອານາເຂດໃນອາຊີຕາເວັນອອກສ່ຽງໃຕ້ ເບິ່ງ Vandergeest ແລະ Peluso 1995 (ປະເທດໄທ), ທ່ານ Li 1999 (ອິນໂດເນເຊຍ); ທ່ານ Sowewine 2003 (ຫວຽດນາມ) ແລະທ່ານ Rigg (ລາວ)

**Manivong & Cramb 2007. ເສດຖະກິດຂອງຜູ້ຖືຫຸ້ນຂະຫນາດນ້ອຍໃນການຜະລິດຢາງໃນພາກເຫນືອຂອງລາວ**

ເຖິງແມ່ນວ່າການສຶກສາຄັ້ງນີ້ໄດ້ເລັ່ງໃສ່ການຜະລິດຂະຫນາດນ້ອຍ (ແລະເຖິງແມ່ນວ່າບໍ່ໄດ້ບອກເຖິງການສຳປະທານທີ່ດິນ) ແມ່ນການເຂົ້າເຖິງຢ່າງງ່າຍດາຍສຳລັບການປະຕິບັດຂອງການປະເມີນຜົນຂອງອຳນາດທີ່ດິນ. ຜູ້ຂຽນໄດ້ພັດທະນາແນວຄວາມຄິດຂອງ "ການໃຊ້ຄວາມອາດສາມາດ" ເຊິ່ງລວມມີການໃຊ້ຊັບພະຍາກອນທາງດ້ານກາຍະພາບ (ໃນກໍລະນີນີ້ແມ່ນ ດິນ, ພູມອາກາດ ແລະພູມີປະເທດ) ກັບການເຂົ້າເຖິງ (ໃນກໍລະນີນີ້ແມ່ນພື້ນຖານໂຄງລ່າງ) ລະດັບຂະຫນາດຂອງພື້ນທີ່ໃນຫລວງນ້ຳທາ ອີງຕາມຄວາມເຫມາະສົມສຳລັບປູກຢາງ. ບົດລາຍງານທີ່ຄ້າຍໆກັບບົດນີ້ແມ່ນໄດ້ສະແດງຢູ່ເທິງແຜນທີ່ຂອງເອກະສານຢູ່ທີ່

*www.nafri.org.la/documents/Special_report/Manivong%20and%20Cramb_REVISED.pdf*

**NAFRI (Vongkhamhor ແລະ ທີມງານ) 2007a. ປະເດັນສຳຄັນຂອງຜູ້ຮ່ວມຫຸ້ນຂະໜາດນ້ອຍຂອງການປູກຢາງຢູ່ທີ່ແຂວງອຸດົມໄຊ ແລະແຂວງຫລວງພະບາງ, ສ.ປ.ປ.ລາວ**

ບົດລາຍງານບົດນີ້ໄດ້ແນໃສ່ຜູ້ທີ່ມີຫຸ້ນສ່ວນນ້ອຍໆຂອງການປູກຢາງ ແລະກ່ຽວພັນກັບການສຳປະທານທີ່ດິນ. ຜ່ານການໂຕ້ວາທີກ່ຽວກັບການມີທາງເລືອກອື່ນ. ນອກນີ້ຍັງໄດ້ສະລຸບລວມຂະບວນການເຫັນດີໃຫ້ລົງທຶນ (23) ແລະຍົກສູງສາມຈຸດ: **(1)** ຍ້ອນວ່າມີຄວາມຕ້ອງການທີ່ຍົກສູງການນຳເຂົ້າເຖິງພື້ນທີ່, ການສັນຍາຂອງການປູກຢາງ ແລະບໍ່ລວມມີການສຳປະທານທີ່ດິນຂະໜາດນ້ອຍ (ໃນ 10 ເຮັກຕາ); **(2)** ຍ້ອນວ່າການຂັດແຍ່ງກັນລະຫວ່າງຫລັກຖານທີ່ແຕກຕ່າງກັນ (ຕົວຢ່າງ: ສົມມຸດວ່າການສຳປະທານແມ່ນໝາຍເຖິງການສຳປະທານທີ່ໃຫຍ່) ຫລືອາດຍ້ອນວ່າເກີດຄວາມສັບສົນກ່ຽວກັບສະຖານທີ່ ຫລືຂອບເຂດເນື້ອທີ່, ລາຍລະອຽດຂອງໂຄງການ, ລວມມີປັດຈຸບັນ ບໍ່ມີເອກະສານຂອງການສຳປະທານທີ່ດິນ, ແມ່ນເປັນການຍາກທີ່ຈະຕິດຕາມ ຖ້າບໍ່ມີການສະແດງອອກມາຕໍ່ກັບປະເດັນດັ່ງກ່າວ ແລະ **(3)** "ການວາງແຜນທີ່ຈະໃຊ້ດິນກວ້າງສຳລັບການປູກຢາງ ເບິ່ງຄືວ່າໄດ້ຮັບອະນຸຍາດໂດຍບໍ່ມີການບົ່ງບອກຕົວຈິງຂອງດິນເທິງແຜນທີ່. ທັງສອງກໍລະນີນີ້ແມ່ນສຳລັບການສຳປະທານທີ່ດິນຂອງລັດພ້ອມທັງການສັນຍາການປູກ. ໃນຂະນະທີ່ຕົວແທນສາຍພື້ນທີ່ພາຍໃຫ້ຫ້ອງການກະສິກຳ ແລະປ່າໄມ້ແຂວງ ແລະ PIPC [PDPI??] ແມ່ນຮັບຜິດຊອບນັກລົງທຶນຕ່າງປະເທດໃນຂະແໜງການກະສິກຳ, ຂໍ້ມູນກ່ຽວກັບການນຳໃຊ້ທີ່ດິນ ແມ່ນບໍ່ໄດ້ແບ່ງກັນເບິ່ງທັງສອງຝ່າຍ" (16)

***ເອກະສານມີຢູ່ທີ່ NAFRI***

**Schipani, Steven 2007. ການທ່ອງທ່ຽວແບບອະນຸລັກແມ່ນທາງເລືອກໃຫ້ແກ່ການປູກຢາງເທິງດິນເນີນສູງ. ຈຸດປະກາຍ 8: 5 -17**

ການສຶກສາຄັ້ງນີ້ ຂຶ້ນກັບປະສົບການຂອງນັກຂຽນທີ່ເປັນທີ່ປຶກສາຂອງ ການທ່ອງທ່ຽວແບບອະນຸລັກຂອງລັດຖະບານ, ໄດ້ໃຊ້ການປຽບທຽບຂອງການທ່ອງທ່ຽວແບບອະນຸລັກ ແລະການປູກຢາງຢູ່ແຂວງຫລວງນ້ຳທາເພື່ອ "ໃຫ້ດິນໂດຍການວາງແຜນພ້ອມທັງທັດສະນະຄະຕິແບບກວ້າງໄກເທິງທາງເລືອກຂອງກິດຈະກຳການດຳລົງຊີວິດ (ຊຸມຊົນທີ່ຂຶ້ນກັບການທ່ອງທ່ຽວແບບອະນຸລັກ) ໄດ້ມີຢູ່ພື້ນທີ່ປ່າໄມ້ແລ້ວ, ນັ້ນອາດແມ່ນການປ່ຽນແປງໄປສູ່ການປູກຢາງ" (6)[12] ສິ່ງທີ່ພົບເຫັນລວມມີ **(1):** ຊາວບ້ານ

---

[12] ບັນທຶກວ່າການເລັ່ງໃສ່ການປູກຢາງ, ເຊິ່ງໝູ່ບ້ານໄດ້ປູກ "ເປັນເຈົ້າຂອງຜູ້ດຽວຫລືພາຍໃຕ້ການເປັນເຈົ້າຂອງດິນຫລາກຫລາຍ ແລະຂໍ້ຕົກລົງການແບ່ງລາຍຮັບກັບຜູ້ລົງທຶນ" (6), Schipani (ເໝືອນດັ່ງທີ່ຫລາຍໆຄົນໄດ້ປະເຊີນໜ້າ-ຫລາຍກວ່າການເລີ່ມງານດ້ານການສຶກສາ-ການສຳປະທານທີ່ດິນ) ບໍ່ໄດ້ພະຍາຍາມເຖິງຄວາມແຕກຕ່າງລະຫວ່າງການຂຶ້ນກັບການສຳປະທານ, ການຂຶ້ນກັບສັນຍາ ແລະການຖືຫຸ້ນຂະໜາດນ້ອຍ

ແມ່ນຍອມຮັບການປູກຢາງ "ຫລືວ່າເປັນເຂົາເຈົ້າຜູ້ດຽວຫລືພາຍໃຕ້ການເປັນເຈົ້າຂອງທີ່ດິນຫລາກຫລາຍ, ແລະຂໍ້ຕົກລົງການແບ່ງລາຍຮັບກັບຜູ້ລົງທຶນລາວ ຫລືສາກົນ" (6); **(2)** ໃນປີ 2005, ຫລາຍກວ່າ 4580 ເຮັກຕາຂອງປ່າໄມ້ທີ່ເຊື່ອມໂຊມ ແລະຕອນດິນທີ່ເປົ່າວ່າງໄດ້ຖືກກວາດລ້າງ ແລະໄດ້ຖືກແທນທີ່ໂດຍການປູກຢາງຂະໜາດນ້ອຍຢ່າງກະທັນຫັນໃຫ້ກັບທາງຢາງຢູ່ເມືອງສິງ ແລະເມືອງນ້ຳທາ" **(3)** ການຖົກຖຽງກັນກ່ຽວກັບການທ່ອງທ່ຽວແບບອະນຸລັກພົບກັບຈຸດປະສົງຂັ້ນຕົ້ນຂອງການຈັດການປ່າສະຫງວນໃນ ສ.ປ.ປ.ລາວ, ໃນຂະນະທີ່ການປູກຢາງຊະນິດດຽວບໍ່ພົບຫຍັງເລີຍ; **(4)** ການທ່ອງທ່ຽວແບບອະນຸລັກຢູ່ຫລວງນ້ຳທາ "ແມ່ນການກຳເນີດລະດັບທີ່ຮີບດ່ວນ ແລະ ສຳຄັນສຳລັບການແລກປ່ຽນກັບຕ່າງປະເທດໂດຍບໍ່ມີການບັນທຶກກ່ຽວກັບທີ່ດິນ", ແມ່ນໄດ້ກຳເນີດເງິນແລ້ວຫລາຍກວ່າເນື້ອທີ່ຂອງແຂວງ 4580 ເຮັກຕາຈະກຳເນີດຂຶ້ນຖ້າມີການຜະລິດ, ແລະກຳລັງຂະຫຍາຍໃນການມີກຳໄລບົນພື້ນຖານການຊົມໃຊ້ຫລາຍກວ່າການກວາດລ້າງພື້ນທີ່ ແລະ ກໍ່ອາດແມ່ນການນຳແຮງງານເຂົ້າມາ; ແລະສະຫລຸບລວມແລ້ວ, **(5)** "ກິດຈະກຳການທ່ອງທ່ຽວແບບອະນຸລັກ ແລະການປູກຢາງສາມາດດຳເນີນໃນແຂວງດຽວກັນ, ແຕ່ບໍ່ແມ່ນໃນສະຖານທີ່ດຽວກັນຢ່າງທັນທີ" (15) (cf. VT 2007d)

***ເອກະສານມີຢູ່ທີ່*** *http://www.undplao.org/newsroom/juthpakai.php*

**ທະນາຄານພັດທະນາອາຊີ, ອົງການພັດທະນາຝະລັ່ງ ແລະ ກະຊວງກະສິກຳປ່າໄມ້ (ກຳລັງດຳເນີນ) ການກະສິກຳ ແລະ ຊັບພະຍາກອນທຳມະຊາດຕ້ອງການການປະເມີນ (TAR: LAO 40105)**

ການສຶກສາຄັ້ງນີ້ໄດ້ເຮັດວຽກເພື່ອທີ່ຈະບອກວ່າສິ່ງທີ່ເຫັນແມ່ນ "ການທ້າທາຍທີ່ບໍ່ມີລຳດັບຕໍ່ການວາງແຜນ ແລະ ການຈັດການທາງຊັບພະຍາກອນທຳມະຊາດ" ກ່າວຄື "ຄວາມກວ້າງພາຍນອກ-ສ້າງຄວາມກົດດັນ" ໂດຍບໍລິສັດຈີນ, ຫວຽດນາມ ແລະອິນເດຍ ເພີ່ມສິນຄ້າໂດຍກົງແລະການເຮັດໃຫ້ດິນຮາບພຽງໂດຍການປູກ ແລະ ການພັດທະນາຜູ້ຖືຫຸ້ນຂະໜາດນ້ອຍຂອງການກະສິກຳ. ສູນຂອງໂຄງການ ແລະເອກະສານຫົວຂໍ້ທີ່ຂຽນໂດຍ ຜູ້ຊ່ຽວຊານ ແລະອີງຕາມບົດສຸດທ້າຍທີ່ຢູ່ລະຫວ່າງກາງ ແລະທ້າຍປີ 2007 ແລະ ຈາກລາຍລະອຽດແລະການສຸມໃສ່ການເຮັດວຽກອາດຈະເລີ່ມຂື້ນ ເພື່ອໃຫ້ບົດອອກມາໃນທ້າຍປີ 2007.

***ຕິດຕໍ່ ADB, AFD ຫລື MAF ສຳລັບຂໍ້ມູນເພີ່ມເຕີມ***

Dwyer, Michael (**ກຳລັງດຳເນີນ). ສຶກສາດ້ານການວິເຄາະ (ການສຳປະທານຂະໜາດນ້ອຍເຊິ່ງທັດສະນະການເບິ່ງທີ່ມີການພົວພັນກັບຜູ້ເຊົ່າທີ່ດິນ ແລະ ການປະເມີນດິນທີ່ເໝາະສົມແລ້ວ)**

ເມື່ອເນັ້ນເຖິງການວິເຄາະວິທີການທີ່ເໝາະສົມ ແລະ ການຫລຸດຜ່ອນຜົນກະທົບຕໍ່ສັງຄົມ, ການຄົ້ນຄວ້າຂອງທ່ານ Dwyer ໄດ້ສືບສວນເບິ່ງຄືນຂໍ້ມູນຈາກການສ້າງພູມີສາດກຳນົດເຂດ ແລະການນຳໃຊ້ພູມີສາດຕ່າງໆກ່ຽວກັບດິນ, ຜູ້ເຊົ່າດິນ, ດິນນຳໃຊ້ ແລະດິນທີ່ມີຄວາມເໝາະສົມອາດນຳໃຊ້ເຂົ້າໃນ

ຂົງເຂດເສດຖະກິດຢູ່ພາກເໜືອ ຄືແຂວງຫລວງນ້ຳທາ ເຊິ່ງສິ່ງທີ່ພົວພັນກັບແຫລ່ງຊັບພະຍາກອນທຳມະຊາດໄດ້ມີການປ່ຽນແປງໄປ ຍ້ອນມີການກໍ່ສ້າງອາຄານຫລວງຫລາຍ ກ່ຽວກັບການນຳມາເຊິ່ງແມ່ນຈາກການລົງທຶນທັງນັ້ນ. ສິ່ງທີ່ພົບເຫັນມີ: (1) ການສຳປະທານທີ່ດິນຂະໜາດນ້ອຍ (ອະນຸຍາດໃຫ້ພຽງແຕ່ 10 ເຮັກຕາ) ກໍ່ໄດ້ນຳໃຊ້ບາງຄັ້ງຄາວໃນຮູບການສົມທົບກັບຄືການລວມກັນ ແທນທີ່ຈະປູກແຕ່ພືດຊະນິດດຽວ. ການສັນຍາການປູກໄດ້ກຽມໃຫ້ສະເພາະ "ດິນຂອງລັດທີ່ມີຢູ່ແລ້ວ" ກໍ່ຄື "ດິນຂອງລັດທີ່ສ້າງໃຫ້ມີໃໝ່ອີກ", (2) ເມື່ອກ່າວເຖິງຄວາມສຳຄັນດ້ານການປະຕິບັດຕົວຈິງກ່ຽວກັບແນວຄວາມຄິດຂອງການເຊື່ອມໂຊມ ແລະການປັບປຸງໃຫ້ດີຂື້ນ, ການປະຕິບັດຕົວຈິງຂອງດິນລັດທີ່ກໍ່ໃຫ້ເກີດເຫັນວ່າ ມີການພົວພັນກັນຢ່າງດີລະຫວ່າງດິນນຳໃຊ້ ແລະຜູ້ເຊົ່າດິນ ເຊິ່ງກຳລັງດຳເນີນກິດຈະກຳຕ່າງໆ, ລະຫວ່າງສະຖານທີ່ກ່ຽວກັບການວາງສະແດງການນຳໃຊ້ທີ່ດິນ ແລະການກຳນົດທີ່ດິນ (LUPLA) ແລະກົດໝາຍກ່ຽວກັບສິດເປັນເຈົ້າຂອງຊັບສົມບັດ; ແລະ (3) ຄວາມເຂົ້າໃຈກ່ຽວກັບຜົນກະທົບການພັດທະນາການປູກຢາງ ເພື່ອຄ້ຳປະກັນສະບຽງອາຫານມີຄວາມສັບສົນລະຫວ່າງການເປັນເຈົ້າຂອງທີ່ດິນ ຂອງໝູ່ບ້ານຕ່າງໆ ແລະການຈ້າງງານ, ພາສີ ແລະຕົວຈິງກໍ່ແມ່ນເປືອກນອກ, ການຂາດແຄນຂໍ້ມູນການນຳໃຊ້ທີ່ດິນຢ່າງຖືກຕ້ອງ, ແລະການສົ່ງໃຫ້ອີກຄືນໜຶ່ງໃນຮູບການ 2+3 ຂອງສັນຍາປູກຝັງ (ຮູບແບບຜູ້ຈັດການ) ກົງກັບ 1+4 ສັນຍາດ້ານການປູກຝັງ (ຮູບແບບຄ່າຈ້າງແຮງງານ)[13] ບົດລາຍງານຈາກການລົງເຮັດວຽກຢູ່ທ້ອງຖິ່ນສາມາດຫາໄດ້ຈາກທ້າຍປີ 2007.

***ສາມາດເອົາໄດ້ຈາກຜູ້ຂຽນ*** *mdwyer@berkerley.edu*

**NAFRI/ກະຊວງກະສິກຳແລະປ່າໄມ້ (ກຳລັງດຳເນີນ). ອົບຮົບການຄຸ້ມຄອງການສຳປະທານບາງເມືອງທີ່ຄັດເລືອກ**

**NAFRI & FAO (ກຳລັງຈະເຂົ້າມາ): ວິເຄາະການລົງທຶນ ແລະ ຜົນກຳໄລສຳລັບການພັດທະນາປູກຢາງ ແລະການຄ້ຳປະກັນສະບຽງອາຫານຢູ່ເຂດເມືອງພິນ ແຂວງສະຫວັນນະເຂດ**

**ສະຖາບັນຍຸດທະສາດລວມກ່ຽວກັບສິ່ງແວດລ້ອມ, ຍີ່ປຸ່ນ (ບໍ່ແນ່ນອນ) ປະກົດການຄົ້ນຄ້ວາກ່ຽວກັບການສຶກສາການປູກຝັງ (ປີ 2006)**

[13] ສັນຍາຜູກຂາດແມ່ນໄດ້ພັນລະນາເຖິງສ່ວນປະກອບ 5 ສ່ວນດັ່ງນີ້: ທີ່ດິນ, ແຮງງານ, ການປ້ອນວັດຖຸດິບ, ການຂະຫຍາຍ ແລະການຕະຫລາດ. ໃນແບບ 2+3, ຊາວບ້ານໃຫ້ແຮງງານແລະທີ່ດິນ, ໃນຂະນະທີ່ຜູ້ລົງທຶນໄດ້ໃຫ້ທັງໝົດ. ໃນແບບ 1+4, ຊາວບ້ານໄດ້ໃຫ້ແຕ່ທີ່ດິນ

### 3.4 ຂະແໜງການທ່ອງທ່ຽວ, ການຄ້າ ແລະ ອຸດສາຫະກຳ

ໂດຍມີການຍົກເວັ້ນເລັກນ້ອຍ, ການສຳປະທານທີ່ດິນໃຫ້ແກ່ການທ່ອງທ່ຽວ, ການຄ້າ ແລະກິດຈະກຳດ້ານອຸດສາຫະກຳເຫັນວ່າບໍ່ໄດ້ກັງວົນ ແລະ ມີຄວາມລະມັດລະວັງເໝືອນຂະແໜງການອື່ນໆ, ມີທ່າທີວ່າຍ້ອນ (i) ຂົງເຂດດັ່ງກ່າວບໍ່ໄດ້ເນັ້ນເຖິງການຂຸດຄົ້ນແຫລ່ງຊັບພະຍາກອນທຳມະຊາດ (ii) ຂົງເຂດດັ່ງກ່າວໄດ້ກວມເອົາເນື້ອທີ່ແຄບ ແລະ (iii) ໄດ້ມີການສົນທະນາເລື່ອງລາວຕ່າງໆເລັກນ້ອຍ[14]. ການສຶກສາສອງກໍລະນີຢູ່ທີ່ນີ້: GTZ (2006a) ຢູ່ພາກສ່ວນ 3.1 ແລະ RTEA (2007) ຢູ່ພາກສ່ວນ 3.5 - ເຊິ່ງໄດ້ເນັ້ນກ່ຽວກັບການທ່ອງທ່ຽວ, ການຄ້າ ແລະອຸດສາຫະກຳດ້ານການສຳປະທານທີ່ດິນ ຢ່າງນ້ອຍກໍ່ພຽງຜ່ານໆ. ເຖິງແມ່ນວ່າການສົນທະນາທາງການຄົ້ນຄວ້າ ແບບເລັກນ້ອຍໂດຍມີຄວາມລະມັດລະວັງ ເມື່ອສົນທະນາກັບບັນດາຂະແໜງການອື່ນໆ, ການນຳໃຊ້ການສຳປະທານທີ່ດິນເພື່ອດຶງດູດການລົງທຶນໄດ້ສະແດງໃຫ້ເຫັນການເຂົ້າຮ່ວມໃນຫລາຍໆໂຄງການທີ່ເປັນທີ່ຮູ້ດີເຊັ່ນ: ໂຮງແຮມ ແລະ ບ່ອນການພະນັນ ເຊັ່ນຢູ່ ໂຮງແຮມດອນຈັນພາເລຊ, ແດນສະຫວັນ, ໂບເຕັນ ແລະບ່ອນການພະນັນທີ່ສາມຫລ່ຽມທອງຄຳ; ສູນການຊື້ຂາຍຢູ່ຕະຫລາດເຊົ້າ, ແລະຂົງເຂດການຄ້າທີ່ກວ້າງຂວາງຄືສະໜາມກິລາຫລັກ 21 ເພື່ອເກມອາຊີ, ເຂດພັດທະນາການຄ້າຫ້ວຍຊາຍ ແລະເຂດການຄ້າສະຫວັນ-ເຊໂນ. ຂໍ້ມູນໂຄງການລະອຽດຢູ່ໃນບົດແນບທ້າຍ 1, ເຊິ່ງປະກອບຂໍ້ມູນຈາກໜັງສືພິມວຽງຈັນທາຍມ໌ ເຊິ່ງກ່າວເຖິງການສຳປະທານທີ່ດິນລະຫວ່າງເດືອນ ມັງກອນ 2006 ແລະ ເດືອນພຶດສະພາ 2007.

### 3.5 ການຄົ້ນຄວ້າດ້ານການພັດທະນາ

ການສຶກສາທົບທວນຄືນ ຂອງພາກສ່ວນດັ່ງກ່າວນີ້ແມ່ນການທົບທວນຄືນ ນອກຂະແໜງການສະເພາະ. ການສຶກສາແມ່ນມີທ່າອ່ຽງໄປດ້ານການຄົ້ນຄວ້າຂອງປະເດັນທີ່ສຳຄັນດ້ານການພັດທະນາ ກໍ່ຄືວິທີການເຊິ່ງໂຄງການມີທ່າອ່ຽງເນັ້ນໜັກໃສ່ການວາງແຜນຈາກຂໍ້ມູນ ໄດ້ຈາກພາບຖ່າຍທາງດາວທຽມຢູ່ໃນລະດັບແຂວງ, ເມືອງ ແລະເຂດ ຕາມມາດຕາສ່ວນທີ່ໄດ້ກຳນົດໃຫ້. ລັກສະນະການສຶກສາສອງຢ່າງກໍ່ບໍ່ເປັນໜ້າເຊື່ອຖືວ່າຈະພົບຮູບການສຳປະທານທີ່ດິນທີ່ມີຄວາມສຳຄັນສຳລັບການພັດທະນາພູມີປະເທດອັນກວ້າງຂວາງ ແລະ ກໍ່ອາດນຳໄປສູ່ການໃຫ້ການແນະນຳສືບສວນເບິ່ງຄືນໃນອະນາຄົດເພາະພົບເຫັນວ່າມີການສັບສົນປົນເປກັນເກີດຂື້ນ. ຍ້ອນວ່າເຂົາເຈົ້າໄດ້ພົບການສຳປະທານທີ່ດິນມາຈາກໄລຍະທີ່ໄກຫລາຍ, ການສຶກສາດັ່ງກ່າວຈິ່ງມີບົດບາດສຳຄັນທີ່ຈະຕ້ອງໄດ້ດຳເນີນ ເພື່ອເປັນຂົວຕໍ່ລະຫວ່າງຜູ້ນຳໃຊ້ດິນສຳປະທານທີ່ໄດ້ກ່າວໃນພາກສ່ວນ 1 ການສຳປະທານທີ່ດິນໃນຮູບການພົວພັນເຖິງຊັບສິນບັດນ້ອຍໆ ແລະລະຫວ່າງການສຳປະທານທີ່ດິນຂອງໂຄງການພັດທະນາປະຈຸບັນ ເຊິ່ງຕັດອອກຈາກຕົວຢ່າງຂອງຄວາມເປັນຈິງ, ເປັນຮູບປະທຳຂອງການຈັດວາງເລື່ອງການທຳມາຫາກິນຂອງ

[14] ຂໍ້ຍົກເວັ້ນ 2 ຂໍ້ທີ່ໄດ້ເວົ້າໃນນີ້ແມ່ນ GTZ (2006a) ໃນຕອນທີ 3.1 ແລະ RTEA (2007) ໃນຕອນທີ 3.5

ຊຸມຊົນທີ່ກ່ຽວພັນເຖິງການຕະຫລາດ, ການເຂົ້າມາຈັດການເລື່ອງກິດລະບຽບການຕ່າງໆ ແລະສິ່ງອື່ນທີ່ທຳມະຊາດປະກົດໃຫ້ເຫັນມີທັງດ້ານດີ ແລະບໍ່ດີເຊິ່ງມາພ້ອມໆກັນພາຍໃຕ້ຄັນຮົ່ມຂອງຄຳທີ່ວ່າ ການພັດທະນາ.

**ອົງການສະຫະປະຊາຊາດເພື່ອການພັດທະນາ 2006. ບົດລາຍງານການພັດທະນາຊັບພະຍາກອນມະນຸດຂອງປະເທດ: ການຄ້າສາກົນ ແລະ ການພັດທະນາຊັບພະຍາກອນມະນຸດ**

ເພື່ອປະກອບໃຫ້ຄົບບົດລາຍງານການພັດທະນາຊັບພະຍາກອນມະນຸດປີ 2001 ທີ່ກ່າວເຖິງ "ການພັດທະນາຊົນນະບົດ" ບົດລາຍງານປີ 2006 ໄດ້ກ່າວເຖິງວິທີການຂອງການຂະຫຍາຍຕົວໄປຍັງນາໆປະເທດຂອງຮູບການພັດທະນາຢູ່ລາວ. ໂດຍອີງໃສ່ການຄົ້ນຄວ້າໄລຍະຕົ້ນເປັນຫລັກ, ບົດລາຍງານໄດ້ກ່າວເຖິງ ການທົບທວນຄືນບັນດາຂະແໜງການຕ່າງໆເຊັ່ນ ການຜະລິດໄມ້, ໄມ້ແປຮູບ, ການທ່ອງທ່ຽວ, ກະສິກຳ, ເສດຖະກິດ, ບໍ່ແຮ່, ໄມ້ທ່ອນ, ພະລັງງານໄຟຟ້ານ້ຳຕົກ. ພ້ອມດຽວກັນກໍ່ສະຫລຸບສະຖິຕິ (ເບິ່ງສະເພາະຕາຕະລາງ 30, 32, 33 ຢູ່ເອກະສານຕິດຄັດ IV) ແລະບາງກໍລະນີຄົ້ນຄວ້າສຳລັບໂຄງການທີ່ມີການສຳປະທານທີ່ດິນ: ໂຄງການບໍ່ແຮ່ເມືອງເຊໂປນ ແຂວງສະຫວັນນະເຂດ, ໂຄງການນ້ຳຜາເຕັນບໍ່ດີບຸກທີ່ໃຊ້ເຄືອບໂລຫະຢູ່ແຂວງຄຳມ່ວນ ແລະນ້ຳງື່ມ 1, ນ້ຳມັງ 3, ນ້ຳເລິກ, ເທີນຫີນບູນ, ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2. ເມື່ອກ່າວເຖິງຂົງເຂດການນຳໃຊ້ເຂົ້າໃນການພັດທະນາຄົນເຊັ່ນ ຂະແໜງການກະສິກຳ, ປ່າໄມ້, ບໍ່ແຮ່, ພະລັງງານໄຟຟ້ານ້ຳຕົກ ແລະການທ່ອງທ່ຽວ, ບົດລາຍງານກ່ຽວກັບການສຳປະທານທີ່ດິນ ໄດ້ອະທິບາຍຢ່າງກວ້າງຂວາງ ກ່ຽວກັບຄວາມແຕກຕ່າງລະຫວ່າງ "ການສົ່ງອອກພ້ອມທັງການພັດທະນາຄົນໃຫ້ມີຄວາມສາມາດສູງ" ເຊັ່ນຂົງເຂດຂະແໜງການກະສິກຳ, ໄມ້ແປຮູບ, ການທ່ອງທ່ຽວແລະເສດຖະກິດກ່ຽວກັບການເຄື່ອນຍ້າຍປະຊາກອນ. ສິ່ງທີ່ກ່າວມານີ້ແມ່ນພົວພັນໂດຍກົງກັບການພັດທະນາຄົນ. ສິ່ງທີ່ພົບພັນກັບ ການພັດທະນາຄົນທີ່ມີຄວາມສາມາດນ້ອຍ" ໄດ້ແກ່ຂົງເຂດບໍ່ແຮ່, ໄມ້ທ່ອນ ແລະໄຟຟ້າເພື່ອການສົ່ງອອກ. ໃນຂະແໜງການດັ່ງກ່າວ, ການນຳໃຊ້ກຳລັງຄວາມສາມາດພັດທະນາຄົນໄດ້ອີງໃສ່ແຫລ່ງລາຍຮັບຈະແຈ້ງຈາກຊັບພະຍາກອນທີ່ນຳໃຊ້, ໂດຍສະເພາະມີການບັນເທົາໃຫ້ຫລຸດຜ່ອນ ແລະການຊົດເຊີຍຕ່າງໆ, ຜົນກະທົບຈາກການທຳລາຍສິ່ງແວດລ້ອມ, ການທຳມາຫາກິນຂອງຄົນທ້ອງຖິ່ນ ແລະການສົ່ງອອກອື່ນໆ. ເຖິງແມ່ນບໍ່ໄດ້ກ່າວໃນກອບປະເດັນຂອງການສຳປະທານທີ່ດິນ, ບົດລາຍງານສະເໜີການສຳປະທານແມ່ນອີງໃສ່ຊັບພະຍາກອນສົ່ງອອກ ເຖິງແມ່ນປັດຈຸບັນການສົ່ງອອກຈະເພີ່ມຂຶ້ນຢ່າງຕໍ່ເນື່ອງ ກໍ່ຄວນໃຫ້ມີຂອບເຂດຈຳກັດແລະຈັດວາງຍຸດທະສາດໃຫ້ດີ, ໂດຍການນຳໃຊ້ແຫລ່ງລາຍຮັບມາຈາກຊັບພະຍາກອນເພື່ອລົງທຶນໃສ່ຂະແໜງການສາທາລະນະສຸກ, ການສຶກສາ ແລະ ຂົງເຂດອື່ນທີ່ມີຜົນກະທົບທະວີຄູນຕໍ່ການພັດທະນາຄົນ ທີ່ມີການເຊື່ອມຕໍ່ກັບເສດຖະກິດຂອງທ້ອງຖິ່ນ, ໄດ້ມີການກະທົບທາງດ້ານລົບເລັກນ້ອຍ ຕໍ່ຂົງເຂດສາທາລະນະສຸກ ແລະຄວາມໝັ້ນຄົງຂອງຊົນນະບົດ ແລະມີໂອກາດນ້ອຍໃນເມື່ອ "ຂາດວິໃນກ່ຽວກັບພາສີ" ຫລືວ່າ "ການຊອກຫາການເຊົ່າດິນ"

Bechstedt & Gilbos (2007): **ເອກະສານຄວາມເປັນມາກ່ຽວກັບການປະເມີນຜົນກະທົບຄວາມທຸກຍາກ ແລະ ສັງຄົມ**

**ການປະເມີນ 2 (PSIA 2), 2 ເອກະສານ ແລະ ບົດສະຫລຸບ**

ເປັນເວລາ 85 ວັນໃນຊ່ວງປີ 2006-2007, ການສຶກສາດັ່ງກ່າວເພື່ອກວດສອບການກະທົບດ້ານສັງຄົມຂອງການໃຊ້ຈ່າຍເບື້ອງລັດໂດຍການສັງເກດການສຶກສາຜົນການບໍລິການເບື້ອງລັດ ພ້ອມທັງນະໂຍບາຍດ້ານກະສິກຳກ່ຽວກັບເຂດທຸກຍາກ, ໂດຍສະເພາະແມ່ນກຸ່ມຊົນເຜົ່າແລະຜູ້ຍິງ. ຄະນະທີມງານໄດ້ລົງທ້ອງຖິ່ນໄປຍັງຫລາຍໆເຂດ ແລະສຶກສາ 4 ຂົງເຂດຂອງໂຄງການພັດທະນາ ( ໂຄງການພັດທະນາຂອງລຸກຊຳບວກຢູ່ ແຂວງບໍລິຄຳໄຊ, ໂຄງການພັດນະຊົນນະບົດຢູ່ເຂດພູດອຍຂອງ GTZ ຢູ່ແຂວງບໍ່ແກ້ວ, ໄຊຍະບູລີ ແລະຫລວງນ້ຳທາ, ໂຄງການທະນາຄານໂລກກ່ຽວກັບກອງທຶນຫລຸດຜ່ອນຄວາມທຸກຈົນ ແລະ ໂຄງການປະຕິຮູບ ແລະ ບູລະນະການປົກຄອງຢູ່ແຂວງສາລະວັນ) ແລະ 3 ກໍລະນີ ສຶກສາດ້ານພືດຜົນແລະຂອງໃຊ້ເຊັ່ນ (ການປູກຢາງຢູ່ແຂວງຫລວງນ້ຳທາ, ປູກກາເຟຢູ່ ແຂວງເຊກອງ, ແລະ ການປູກສາລີຢູ່ແຂວງຫົວພັນ) ເຊິ່ງທັງຫມົດນັ້ນກໍ່ໄດ້ກຳນົດເນື້ອທີ່ດິນໃຫ້ສຳປະທານຢູ່ໃນພູມີປະເທດອັນກວ້າງຂວາງເພື່ອການພັດທະນາເຊິ່ງແມ່ນການທ້າທາຍທີ່ສຸດຢູ່ ສ.ປ.ປ.ລາວ ການສຶກສາໄດ້ວາດພາບກ່າວເຖິງທັງສອງບອ່ນຄື "ເທິງ" ແລະ "ລຸ່ມ" ເຊິ່ງມີຄວາມທ້າທາຍກ່ຽວກັບການພັດທະນາອີງໃສ່ແຕ່ແຫລ່ງຊັບພະຍາກອນຢ່າງດຽວ: **(1)** ອັດຕາການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ໄດ້ກຳນົດຄາດຄະເນຢ່າງຈະແຈ້ງວ່າມາແຕ່ແຫລ່ງຊັບພະຍາກອນທຳມະຊາດເທົ່ານັ້ນ (1:25) ໄດ້ມີການຮ່ວມກ່າວເຖິງການຂຸດຄົ້ນແຫລ່ງຊັບພະຍາກອນທຳມະຊາດ (ໄມ້, ແຮ່ທາດ, ເຄື່ອງປ່າຂອງດົງ) ແລະຂອບເຂດອັນກວ້າງຂວາງຂອງການສຳປະທານທີ່ດິນ…ເຊິ່ງບາງເທື່ອກໍ່ນຳມາເຊິ່ງການຈັດວາງພື້ນທີ່ປ່າທຳມະຊາດ ເພື່ອການປູກຢາງພາລາ, ມັນ ແລະຜົນລະປູກອື່ນໆທີ່ເປັນສິນຄ້າໄດ້ (1:171); **(2)** ລາຍຮັບຈາກການລົງທຶນດັ່ງກ່າວ "ຈະຊ່ວຍປະກອບສ່ວນຫລຸດຜ່ອນຄວາມທຸກຍາກຢ່າງຈະແຈ້ງ ຖ້າຫາກມີການລົງທຶນຢ່າງມີປະສິດທິຜົນ" (1:25) ແຕ່ເຖິງຢ່າງນັ້ນກໍ່ຕາມ **(3)** ພະນັກງານແຂວງ ແລະ ຊຸມຊົນທີ່ຢູ່ທ້ອງຖິ່ນໄດ້ຖືກເກາະຢູ່ລະຫວ່າງການ, ອັນທີຫນຶ່ງ "ກະຕືລືລົ້ນນຳແຫລ່ງທີ່ຈະໄດ້ຮັບຜົນປະໂຫຍດ ແລະ ຈະມີໂອກາດໄດ້ເຮັດວຽກ" ອັນທີສອງ "ການກຽມພ້ອມຂອງຂະແຫນງການເອກະຊົນເພື່ອສຳຫລວດຫາຜົນປະໂຫຍດຝ່າຍດຽວກັບຂາດປະສົບການໃນການຕໍ່ລອງ, ຂອບເຂດທາງດ້ານກົດຫມາຍບໍ່ຈະແຈ້ງ, ແລະການຈັດຕັ້ງຢູ່ທ້ອງຖິ່ນແມ່ນບໍ່ແຫນ້ນ, ແລະ **(4)** ການເລັ່ງໃສ່ການເຊື່ອມເສດຖະກິດໃນຮູບແບບການເຊື່ອມສານກັນຢ່າງແຂງແຮງ ແລະການຊັກຊວນການພັດທະນາຈາກພາຍນອກ - ທັງຫມົດນີ້ໄດ້ເຮັດໃຫ້ມີການອົບພະຍົກຈາກຊົນນະບົດເຂົ້າມາໃນເມືອງ, ຈາກນັ້ນກໍ່ໄປປະເທດເພື່ອນບ້ານໃກ້ຄຽງ ໂດຍສະເພາະແມ່ນປະເທດໄທ. ໃນເມື່ອເປັນແບບນັ້ນ, ຈິ່ງເກີດມີຄວາມສ່ຽງສູງຕໍ່ການຄ້າປະເວນີ, ການຕິດ

ເຊື້ອເອດສ໌, ການໃຊ້ຄວາມຮຸນແຮງທາງຮ່າງກາຍ ການຕົກເປັນເຫຍື່ອຂອງການຄ້າຂາຍມະນຸດ (ສະຫລຸບ: 32)

***ຂໍ້ມູນເພີ່ມເຕີມສາມາດເອົາໄດ້ທີ່ ທະນາຄານໂລກ ແລະ ອົງການສະຫະພາຍເອີລົບ ທີ່ວຽງຈັນ***

**ສະຖາບັນສາກົນສໍາລັບການພັດທະນາແບບຍືນຍົງ, ອົງການອະນຸລັກທໍາມະຊາສາກົນ, ຄະນະກໍາມະການແຜນການ ແລະ ການລົງທຶນ ແລ ະອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ. ໂຄງການປະເມີນກ່ຽວກັບການຄ້າ ແລະ ສິ່ງແວດລ້ອມແບບວ່ອງໄວ (ສະບັບຮ່າງ ບົດລາຍງານແຫ່ງຊາດສໍາລັບ ສ.ປ.ປ.ລາວ)**

ການຮ່ວມມືລະຫວ່າງອົງການດັ່ງກ່າວມາຂ້າງເທິງນັ້ນ, ໂຄງການໄດ້ປະເມີນກ່ຽວກັບການຄ້າແລະສິ່ງແວດລ້ອມ ແບບວ່ອງໄວ້ໄດ້ຄົ້ນຄວ້າ 7 ຫົວຂໍ້ສໍາຄັນສໍາລັບສຶກສາເອກະສານ ແລະໄດ້ສົນທະນາກັບຄະນະຊ່ຽວຊານ ຂອງຄະນະກໍາມະການດັ່ງກ່າວທີ່ປະກອບດ້ວຍ ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການຕ່າງປະເທດ, ສະຖາບັນມະຫາວິທະຍາໄລຂອງລາວ ແລະ ສະມາຄົມການຄ້າແລະອຸດສາຫະກໍາແຫ່ງຊາດລາວ ໄດ້ຮ່ວມກັນວິເຄາະບັນດາຂົງເຂດທີ່ຮ່ວມກັນດໍາເນີນຢູ່ດ້ານການຮ່ວມມືລະຫວ່າງຜູ້ຈັດຕັ້ງປະຕິບັດ ເຊິ່ງແຕ່ກ່ອນມາແມ່ນພາກສ່ວນກົງກັນຂ້າມ: ການຄ້າແມ່ນການສະຫນັບສະຫນູນຄ້າຍຄືເປັນທະນາຍ ແລະ ການປົກຄອງສິ່ງແວດລ້ອມກໍ່ແມ່ນການສະຫນັບສະຫນູນ ກໍ່ຄ້າຍຄືການເປັນທະນາຍ. ສິ່ງທີ່ພົບເຫັນປະກອບມີ: (1) ເພື່ອໃຫ້ການຄ້າໄດ້ດໍາເນີນໄປໃນແງ່ທາງບວກ, ສ້າງອົງກອນກ່ຽວຂ້ອງໃຫ້ມີຄວາມສາມາດ, ກໍ່ຕ້ອງໄດ້ມີແນວຄິດເນັ້ນເຖິງບັນຫາວິທີທາງໃຫ້ເກີດຂື້ນໄດ້ ແຕ່ບໍ່ໄດ້ຫມາຍຄວາມວ່າໃຫ້ຈໍາກັດຂະບວນການສຶກສາການປະເມີນຂົງເຂດສິ່ງແວດລ້ອມ ແລະສັງຄົມ, ຫມາຍຄວາມວ່າຕ້ອງຮັກສາບາດກ້າວເດີນກ່ຽວກັບກິດຈະກໍາການລົງທຶນໄປພ້ອມໆກັນ. ໃນຂົງເຂດລະດັບສາກົນ, (2) ປະເທດລາວແມ່ນເຕັມໄປດ້ວຍຊັບພະຍາກອນທໍາມະຊາດທີ່ມີຄຸນນະພາບສູງເຊັ່ນ: ບໍ່ແຮ່, ທ່າແຮງພະລັງງານໄຟຟ້ານໍ້າຕົກ, ປ່າໄມ້ ແລະຂົງເຂດຂະແຫນງການກະສິກໍາ. ສິ່ງນີ້ສາມາດດຶງດູດໃຫ້ນັກລົງທຶນມາດໍາເນີນທຸລະກິດໄດ້: ພ້ອມກັນນັ້ນເຂົາເຈົ້າກໍ່ຈະນໍາເອົາມາດຕະຖານຂອງເຂົາເຈົ້າເອງພ້ອມທັງລະບອບບໍລິຫານການພົວພັນຂອງເຂົາເຈົ້າເອງ - ຈາກນັ້ນກໍ່ອາດເກີດມີຮູບການເປັນນາຍຫນ້າຂາຍທັງຫມົດກິດຈະກໍາຕ່າງໆ ໃຫ້ຜູ້ປະມູນຄົນທໍາອິດ ເຊິ່ງຕ້ອງຫລີກເວັ້ນສິ່ງນີ້ໃຫ້ໄດ້ (47); (3) ເຖິງແມ່ນຈະມີການປະຕິບັດດໍາເນີນງານໄດ້ຢ່າງດີເລີດກໍ່ຕາມ, ການຕິດຕາມຢ່າງເປັນເອກະລາດ ກໍ່ເຫັນວ່າມີຄວາມຈໍາເປັນທັງນີ້ເພື່ອປ້ອງກັນຜົນເສຍຫາຍ ທີ່ອາດສາມາດເກີດຂື້ນໄດ້ຕໍ່ຄວາມຮັບຜິດຊອບຂອງບໍລິສັດ ກ່ຽວກັບຂົງເຂດສັງຄົມ. ກ່ຽວກັບຂົງເຂດພາຍໃນປະເທດ (4) ໃນເມື່ອມີຄວາມຈໍາເປັນຕ້ອງການອົງກອນທີ່ມີຄວາມສາມາດອັນກວ້າງໃຫຍ່ ແລະເຂັ້ມແຂງເພື່ອຕິດຕາມການຈັດຕັ້ງລະບຽບຫລັກການ (ຂະແຫນງການຄົ້ນຄວ້າລະດັບຊາດ) ໂອກາດທີ່ມີກໍ່ຄືຈະຕ້ອງປະເມີນລະອຽດຊ່ອງວ່າງຂອງອົງກອນດັ່ງກ່າວ(48); ແລະ (5) ຄວາມພະຍາຍາມເຂົ້າເປັນສະມາຊິກ

ອົງການການຄ້າໂລກ ສາມາດປະກອບແຫລ່ງຈາກພາຍນອກກ່ຽວກັບມາດຕະຖານສາກົນຂອງລະບອບກົດໝາຍ. ***ເອກະສານມີຢູ່ທີ່*** *http://www.iucnlao.org/News.htm*

**NAFRI (ອົງປະກອບການຄຸ້ມຄອງທີ່ດິນ) 2007b. ສະບັບຮ່າງວິເຄາະການກະເສດ-ນິເວດວິທະຍາ**
ປື້ມດັ່ງກ່າວແມ່ນອີງໃສ່ປະສົບການ LSFU ARP ຢູ່ເມືອງໂພນໄຊ ແຂວງຫລວງພະບາງ ແລະເມືອງນາໝໍ້ ແຂວງອຸດົມໄຊ, ໂດຍອີງໃສ່ວິທີການຂອງຄົນທ້ອງຖິ່ນ ເພື່ອເປັນເຈົ້າການກຳນົດເຂດ ແລະວິເຄາະລະບົບກະສິກຳ, ແນໃສ່ການສ້າງແຜນການແລະ ກຳນົດການຄົ້ນຄວ້າບຸລິມະສິດກະສິກຳປ່າໄມ້, ການພັດທະນາ ແລະ ການຂະຫຍາຍກິດຈະກຳອື່ນໆ (6). ວິທີການທີ່ນຳມາໃຊ້ ແລະການຈັດຕັ້ງປະຕິບັດແມ່ນການເກັບຂໍ້ມູນໄປພ້ອມກັນທັງສອງຢ່າງທັງທາງຊີວະວັດຖຸ ແລະເສດຖະກິດສັງຄົມ.ການເຮັດວຽກດັ່ງກ່າວກ່ຽວກັບການວິເຄາະການກະເສດ-ນິເວດວິທະຍາ ກຳນົດລັກສະນະຂອງເຂດເມືອງ, ເຂດບ້ານ, ສະຖານທີ່ຕັ້ງຂອງບ້ານ, ສາທາລະນຸປະໂພກ, ການປ້ອງກັນ ແລະການພັດທະນາປ່າໄມ້, ເຂດທຸກຍາກ, ແລະເຂດພັດທະນາສະຖານທີ່ບໍລິການຕ່າງໆ. ສິ່ງທີ່ພົບເຫັນມີຄື: (1) ການວິເຄາະການກະເສດ-ນິເວດວິທະຍາ ໂດຍອີງໃສ່ມາດຕະຖານຂອງເມືອງ ແລະ ຂອບເຂດສະຖານທີ່ການພັດທະນາ ເຫັນມາດຕະຖານວິທີການເຮັດແຜນທີ່ກຳນົດເຂດ ແມ່ນນ້ອຍຫລາຍສຳລັບແຜນທີ່ການນຳໃຊ້ທີ່ດິນ ແລະ ການກຳນົດດິນໃຫ້ນຳໃຊ້ຂອງຊາວບ້ານ. (2) ການສ້າງຄວາມເປັນເຈົ້າການກ່ຽວກັບການເກັບກຳຂໍ້ມູນ ແລະການວາງແຜນກິດຈະກຳຢ່າງນ້ອຍກໍ່ແມ່ນມີຄວາມສຳຄັນຄືກັນກັບການເກັບກຳຂໍ້ມູນ; (3) ຄຸນນະພາບຂອງຂໍ້ມູນແມ່ນໄດ້ມາຈາກການສະໜັບສະໜູນຈາກຫລາຍພາກສ່ວນ ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງເມືອງເຊິ່ງຄວາມຮູ້ ຂອງການສຶກສາເຂດດັ່ງກ່າວ ແມ່ນເຂົາມີຄວາມເຂົ້າໃຈຢ່າງກວ້າງຂວາງ. (4) ມູນຄ່າໃນການເກັບກຳຂໍ້ມູນແມ່ນຕ່ຳ ແຕ່ຄຸນນະພາບຊ້ຳພັດສູງເຊິ່ງໄດ້ຮັບແຫລ່ງຂໍ້ມູນດ້ານເສດຖະກິດສັງຄົມຈາກທ້ອງຖິ່ນ ແທນທີ່ຈະແມ່ນເອົາລະດັບຊາດມາເຮັດແທນ. ແລະ (5) ໂດຍການກຳນົດ "ປະເດັນແລະບັນຫາ" ກ່ຽວກັບການຄົ້ນຄວ້າ, ການຂະຫຍາຍ (ທາງອອກຈຳເປັນຕ້ອງໄດ້ເຜີຍແຜ່), ການພັດທະນາ (ທາງອອກແມ່ນຕ້ອງໄດ້ສ້າງໂຄງລ່າງ ຫລື ສາລານຸປະໂພກ). ການວິເຄາະການກະເສດ-ນິເວດວິທະຍາເຫັນວ່າແມ່ນປະເດັນທີ່ໃຫຍ່ແຕ່ກໍ່ຕ້ອງປັບໃຫ້ມີການຈັດການກະທຳໃຫ້ເກີດຂື້ນໃນທຸກໆກິດຈະກຳຂອງຂົງເຂດນີ້.
***ຂໍ້ມູນສາມາດເອົາໄດ້ທີ່ NAFRI***

**ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ - ການຊຸກຍູ້ໂຄງການຄຸ້ມຄອງສິ່ງແວດລ້ອມ (2007) ກະລຸນາເບິ່ງພາກ 3.2 ຂ້າງເທິງ**
ໂຄງການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມ ທີ່ດຳເນີນໄປໃນປັດຈຸບັດແມ່ນສະແດງໃຫ້ເຫັນ "ການວາງແຜນແບບເຊື່ອມສານໄດ້ມາຈາກພາບຖ່າຍທາງດາວທຽມ" ໄດ້ຈັດຕັ້ງປະຕິບັດຢູ່ແຂວງອຸດົມໄຊ ໂດຍການນຳໃຊ້ມາດຕາສ່ວນຂອງດິນຢູ່ແຂວງ ເພື່ອທົດສອບດ້ານການວາງແຜນໂດຍການວາງແຕ້ມຮູບທີ່

ໄດ້ຂໍ້ມູນຈາກພາບຖ່າຍທາງດາວທຽມ. ການກະທຳແມ່ນເຮັດໃນລະດັບຊາດ ແລະ ເຂດທ້ອງຖິ່ນ. ໂຄງການໄດ້ສະແດງໃຫ້ເຫັນວ່າ ການຈະເສື່ອມສານແຜນການທີ່ໄດ້ຮັບຂໍ້ມູນຈາກພາບຖ່າຍທາງດາວທຽມ ເຊິ່ງມີໜ້າທີ່ພົວພັນກັບການຕິດຕາມ ແລະກວດກາສະພາບແວດລ້ອມໄດ້ແນວໃດ, ການອອກຂໍ້ຕົກລົງອະນຸມັດກ່ຽວກັບສິ່ງແວດລ້ອມ, ການກວດຄືນຜົນກະທົບຕໍ່ການປະເມີນຜົນຈາກສິ່ງແວດລ້ອມ, ການຕັດສິນສະຖານທີ່ໂຄງການ ແລະການດຳເນີນງານຕ່າງໆຂອງໂຄງການ ເຊິ່ງອາດສາມາດກະທົບໃສ່ສິ່ງແວດລ້ອມ, ພ້ອມທັງໜ້າທີ່ການຄຸ້ມຄອງສິ່ງແວດລ້ອມຕ່າງໆ. ພ້ອມນັ້ນກໍ່ຈະຕ້ອງນຳໃຊ້ວິທີການແບບມີສ່ວນຮ່ວມ ແລະ ຄົ້ນຫາວິທີການໃຫ້ເກີດການຮ່ວມມືຢູ່ໃນພາກສ່ວນທີ່ມີສ່ວນຮ່ວມຢູ່ໃນແຂວງ. ຜົນງານດັ່ງກ່າວຄາດວ່າຈະໄດ້ໃນເດືອນ ສິງຫາ 2007.

***ຂໍ້ມູນລະອຽດສາມາດເອົາໄດ້ຈາກ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ***

**GTZ (ກຳລັງດຳເນີນ) ໂຄງການພັດທະນາຊົນນະບົດຢູ່ເຂດພູດອຍ**

ເຖິງແມ່ນການຄົ້ນຄວ້າບໍ່ແມ່ນການສົມທຽບຂອງຫົວຂໍ້ຂອງການສຳປະທານທີ່ດິນ, ໂຄງການພັດທະນາຊົນນະບົດຢູ່ເຂດພູດອຍກໍ່ໄດ້ເຮັດວຽກຢູ່ສອງແຂວງພາກເໜືອຂອງລາວກໍ່ຄື ແຂວງບໍ່ແກ້ວ ແລະ ແຂວງຫລວງນ້ຳທາ - ເຊິ່ງກ່ຽວກັບເລື່ອງນີ້ກໍ່ໄດ້ຫຍຸດສະຫງັກໄປໄລຍະໜຶ່ງກ່ຽວກັບການສຳປະທານທີ່ດິນອັນກວ້າງໃຫຍ່. ທັງນີ້ແມ່ນອີງໃສ່ຄຳສັ່ງແຫ່ງຊາດໃຫ້ຫຍຸດການສຳປະທານ[15]. ນອກນັ້ນແຂວງໄຊຍະບູລີຢູ່ເຂດເໜືອກໍ່ພົບເຫັນມີການສຳປະທານທີ່ດິນອັນກວ້າງຂວາງ ເຊິ່ງແມ່ນຍຸດທະສາດການພັດທະນາຂອງແຂວງ. ຢູ່ເມືອງສິງ, ແຂວງຫລວງນ້ຳທາ ແລະກໍ່ອາດມີຢູ່ເມືອງອື່ນໆອີກ, ໂຄງການໄດ້ຮ່ວມວາງແຜນກັບອຳນາດການປົກຄອງເມືອງດ້ານມາດຕາສ່ວນວາງແຜນການ, ເຊິ່ງແມ່ນເປັນຂໍກຸນແຈວິທີການໃຫມ່ນຳມາໃຊ້ ໂດຍການຮ່ວມກັບອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ແລະ ໂຄງການຊຸກຍູ້ການຄຸ້ມຄອງສິ່ງແວດລ້ອມ, ການສຶກສາຂອງສູນທົດລອງຄົ້ນຄວ້າກະສິກຳແຫ່ງຊາດ ໄດ້ສຶກສາສອງປະເດັນດັ່ງກ່າວມາແລ້ວຢູ່ຂ້າງເທິງນັ້ນ, ແລະ ການອອກແຮງການສຶກສາອື່ນໆ ກໍ່ມີຫລາຍແຕ່ບໍ່ໄດ້ກ່າວຢູ່ທີ່ນີ້. ການອອກແຮງກຳລັງດຳເນີນຢູ່ແມ່ນການວິເຄາະການເສື່ອມສານດິນໃຫ້ມີຄວາມເຫມາະສົມສຳລັບການຊົມໃຊ້ ແລະ ມີການຕັດສິນໃຈຢູ່ທ້ອງຖິ່ນເອງ.

***ສຳລັບຂໍ້ມູນເພີ່ມເຕີມ ໃຫ້ຕິດຕໍ່ຫ້ອງການ GTZ ໂຄງການພັດທະນາຊົນນະບົດຢູ່ເຂດພູດອຍ (ຫ້ອງການຢູ່ວຽງຈັນ)***

**ທະນາຄານພັດທະນາອາຊີ (ກຳລັງດຳເນີນ). ການປະເມີນຄັ້ງທີສອງກ່ຽວກັບການມີສ່ວນຮ່ວມການປະເມີນຄວາມທຸກຈົນ**

***ຂໍ້ມູນຍັງບໍ່ແນ່ນອນ; ຕິດຕໍ່ ທະນາຄານພັດທະນາອາຊີ ຫ້ອງການທີ່ວຽງຈັນ***

---

[15] NAFRI 2007a:38 ບັນທຶກທີ 8

ທະນາຄານພັດທະນາອາຊີ (ກຳລັງດຳເນີນ). ການປ້ອງກັນການຄ້າເດັກ ແລະ ຜູ້ຍິງ ແລະ ຊຸກຍູ້ການອົບພະຍົກແຮງງານຢ່າງປອດໄພຖືກຕ້ອງຢູ່ເຂດປະເທດລຸ່ມແມ່ນ້ຳຂອງ

*ຂໍ້ມູນຍັງບໍ່ແນ່ນອນ; ຕິດຕໍ່ ທະນາຄານພັດທະນາອາຊີ ຫ້ອງການທີ່ວຽງຈັນ*

ສະຫະພາບເອີຣົບ (ກຳລັງດຳເນີນ) ສະໜັບສະໜູນການພັດທະນາແບບຍືນຍົງຢູ່ເຂດເນີນສູງ ແລະ ສົນທະນານະໂຍບາຍຫາສະຖານທີ່ໃໝ່

ທະນາຄານໂລກ (ກຳລັງດຳເນີນ). ສົນທະນານະໂຍບາຍກ່ຽວກັບເຂດເນີນສູງ

## 4 - ພາກສະຫລຸບ

ປະເດັນທີ່ສຳຄັນຂອງບົດລາຍງານນີ້ໄດ້ພົບແມ່ນ ຜົນກະທົບໃນດ້ານລົບຂອງໂຄງການການສຳປະທານທີ່ມີ ການພົວພັນກັບການດຳລົງຊີວິດຂອງຊາວບ້ານ ເຊິ່ງມີຜົນມາຈາກ ສອງປະເດັນຫລັກ (ດັ່ງທີ່ໄດ້ສັງລວມຕໍ່ ໄປນີ້): ການຫັນປ່ຽນຊັບພະຍາກອນທຳມະຊາດ ໃຫ້ກາຍເປັນຕະຫລາດສິນຄ້າ *ແລະ* ສິດທິກ່ຽວກັບທີ່ດິນ, ທັງສອງປະເດັນແມ່ນສະແດງໃຫ້ເຫັນຄວາມສຳຄັນຂອງການສືບຕໍ່ການສຶກສາບັນຫາ *ແລະ* ການໃຫ້ການສະຫນັບສະຫນູນຄວາມພະຍາຍາມໃຫ້ມີການດຸ່ນດ່ຽງທີ່ດີຂື້ນລະຫວ່າງກົດລະບຽບ ແລະ ຂບວນການອະນຸ ມັດການລົງທຶນ.

ປະເດັນທີ່ຫນຶ່ງແມ່ນ ພຽງແຕ່ເກີດມາຈາກຂບວນການ ຂອງ ການຫັນປ່ຽນຊັບພະຍາກອນທຳມະຊາດໃຫ້ ກາຍເປັນສິນຄ້າແປຮູບ. ອີງຕາມການຄົ້ນຄວ້າຂອງ ໂປໂລນີ ສັງເກດວ່າມີການຜະລິດສິນຄ້າ(ພາກ 4) ແລະ ສິ່ງຜົນໃຫ້ເກີດມີ "ຄວາມບໍ່ດຸ່ນດ່ຽງຂອງສັງຄົມ " (ເບິ່ງຢູ່ໃນບົດຕົວຈິງ), ຜົນກະທົບຕໍ່ການດຳລົງຊີວິດຂອງໂຄງການສຳປະທານຢູ່ໃນພື້ນທີ່ອາດຈະເບິ່ງວ່າເປັນ "ມູນຄ່າ" ທີ່ບໍ່ສາມາດຫລີກລ້ຽງໄດ້ຈາກການຫັນປ່ຽນ ຊັບພະຍາກອນທຳມະຊາດ ໃຫ້ກາຍເປັນສິນຄ້າ, ການປະສົມປະສານເຂດຊົນນະບົດຮອບດ້ານໃຫ້ກາຍເປັນຕະລາດຂອງພາກພື້ນ ແລະ ຕະຫລາດໂລກ. ໂປລີນີເວົ້າວ່າ ນີ້ແມ່ນ "ການຄ້າທີ່ມີສິ່ງແລກປ່ຽນ" ລະຫວ່າງການປັບປຸງໃຫ້ດີຂື້ນ ແລະ ຄວາມບໍ່ດຸ່ນດ່ຽງ, ແລະ ແມ່ນມີຄວາມຈິ ງໄດ້. ດັ່ງທີ່ພະນັກງານປ່າໄມ້ຄົນຫນຶ່ງໄດ້ມີຄຳເຫັນ ຢູ່ໃນຫນັງສືພິມ ວຽງຈັນທາຍສ (2007) ວ່າ, " ພວກເຮົາຍອມຮັບວ່າໃນໄລຍະທຳອິດ ມັນຈະມີບາງບັນຫາກັບຊາວບ້ານ, ແຕ່ຖ້າວ່າມື້ນີ້ ເຮົາບໍ່ປ່ຽນຈາກການຜລິດແບບທ້ອງຖິ່ນ ໄປເປັນການຜລິດແບບ ອຸດສະຫະກຳ, ແລ້ວເວລາໃດພວກເຮົາຈິ່ງຈະເຮັດ?" ການອີງໃສ່ແຕ່ທຶນ*ຂອງເອກະຊົນ* (ສ່ວນຫລາຍແມ່ນມາຈາກຂ້າງນອກ), ເຊິ່ງອາດຈະດຶງດູດເອົາໂດຍການໃຫ້ສຳປະທານ, ພຽງແຕ່ຕ້ອງເພີ້ມຄວາມຮັບຜິດຊອບ ຄວາມປອດພັຍຂອງຂະແຫນງສາທາລະນະ (ເຊັ່ນດຽວກັບເອກະຊົນ ແລະ ຊຸມຊົນ), ແລະ ເຮັດໃຫ້ມີ " ຄວາມລ້າຫລັງ ຫລື ບໍ່ທັນກັບສະພາບ " ລະຫວ່າງຄວາມອາດສາມາດໃນການສ້າງກົດລະບຽບ ແລະ ການປະຕິບັດການລົງທຶນໃນຕົວຈິງ ເກີດມີບັນຫາຫລາຍຂື້ນ.

ແຕ່ໃນຂະນະທີ່ ການພັດທະນາຊັບພະຍາກອນທຳມະຊາດ ໂດຍການນຳໃຊ້ທຶນຂອງເອກະຊົນ ອາດຈະເຮັດ ໃຫ້ມີຄວາມລຳບາກ ກ່ຽວກັບອຸປະສັກຂອງໂຄງຮ່າງການຈັດຕັ້ງທີ່ມີຢູ່, ບໍ່ໄດ້ມີການອະທິບາຍຢ່າງຄົບຖວນ ວ່າເປັນຫຍັງໂຄງການການສຳປະທານໃນເຂດພື້ນທີ່ຈຶ່ງມີການພົວພັນທີ່ແຂງແຮງ ກັບ ຜົນກະທົບໃນດ້ານລົບ ຕໍ່ການດຳລົງຊີວິດຂອງຊາວບ້ານ. ມັນບໍ່ໄດ້ມີຄວາມຈຳເປັນວ່າ ການດຳລົງຊີວິດຂອງຊົນນະບົດ ແລະ ຊຸມຊົນຕ້ອງ " ຖືກທຳລາຍຢູ່ໃນຂບວນການ" ຂອງການພັດທະນາຊາດ.

ປະເດັນທີ່ສອງແມ່ນກ່ຽວກັບເງື່ອນໄຂທີ່ເປີດກວ້າງ *ຢູ່ພາຍໃນ* ຂບວນການ ຂອງການຫັນປ່ຽນຊັບພະຍາກອນທຳມະຊາດໄປສູ່ການຕະຫລາດສິນຄ້າ: ມັນມີຫລາຍປະເພດທີ່ດິນ ແລະ ຫລາຍຮູບແບບຂອງການເປັນເຈົ້າຂອງ ແລະ ສິດທິຂອງຜູ້ນຳໃຊ້, ທັງການຖືຄອງທີ່ດິນແບບບູຮານ ແລະ ເປັນທາງການ, ສິດທິທາງດ້ານກົດຫມາຍ. ບັນຫາມີຢູ່ວ່າ ຈະປ່ຽນຈາກຮູບແບບການນຳໃຊ້ທີ່ສັບສົນທີ່ມີຢູ່ນີ້ ແລະ ຮູບ

ແບບການຖືຄອງທີ່ດິນໄປສູ່ *ການມີຄຸ້ມຄອງໄດ້ ແລະ ການປະຕິບັດທີ່ໂປ່ງໃສ ກ່ຽວກັບການພັດທະນາຊັບພະຍາກອນທຳມະຊາດ,* ໂດຍການເຮັດໃຫ້ເກີດຂຶ້ນພ້ອມກັນ (i) ໃຫ້ມີຄວາມເປັນທຳຕໍ່ກັບລະບົບການດຳລົງຊີວິດແບບດັ້ງເດີມ - ແລະ ຕໍ່ຄວາມຄາດຫວັງຂອງຊາວບ້ານ ແລະ ຄວາມຕັ້ງໃຈຂອງລັດເພື່ອຮັກສາ ຫລື ປັບປຸງລະດັບການ ດຳລົງຊີວິດການເປັນຢູ່ໃນປະຈຸບັນ, ໂດຍສະເພາະໃນກໍລະນີທີ່ຕ້ອງມີການທົດແທນຄືນຄ່າເສັຍຫາຍ - ແລະ (ii) ຖືກກັບຄວາມຕ້ອງການຂອງຜູ້ປະຕິບັດໂຄງການພັດທະນາ ( ດ້ານການເງິນ ແລະ ອື່ນໆ ).

ຢູ່ໃນຫລາຍກໍລະນີ, ລັດແມ່ນມີອິດທິພົນທີ່ສຳຄັນຫລາຍ, ກ່ຽວກັບການຕໍ່ລອງເພື່ອໃຫ້ໄດ້ການສຳປະທານການລົງທຶນທີ່ກ່ຽວຂ້ອງ ເພື່ອຊ່ວຍເຂດບ້ານຊົນນະບົດ. ເຊິ່ງໄດ້ປະສົບຄວາມລົ້ມເຫລວໃນການປົກປ້ອງສິດ ຜົນປະໂຫຍດຂອງຊຸມຊົນ, ຊຸມຊົນສ່ວນຫລາຍບໍ່ສາມາດມີອຳນາດໃນການຕໍ່ລອງທີ່ສະເຫມີກັນ ກັບຜູ້ທີ່ມີສຳປະທານ ແລະ ໄດ້ຮັບຄວາມເດືອດຮ້ອນຈາກຜົນກະທົບໃນທາງລົບ.

ການສຶກສານີ້ໄດ້ສະແດງໃຫ້ເຫັນປະເດັ່ນ (1) ຄວາມຫມາຍທີ່ກວ້າງ ຂອງຄຳວ່າ “ສຳປະທານ” ດັ່ງທີ່ໄດ້ມີຢູ່ທັງໃນເອກະສານມືສອງ ແລະ ຢູ່ໃນສື່; (2) ບັນຫາທາງຄວາມສຳພັນລະຫວ່າງ ຊັບສິນ ແລະການຕັ້ງຊື່ (ເບິ່ງຢູ່ພາກສອງ) ຢູ່ໃນຂະບວນການຊົດແທນຄືນ; (3) ຄວາມແຕກຕ່າງ ລະຫວ່າງທິດສະດີ ຂອງ *ລູກຈ້າງ ກັບນາຍຈ້າງ/* ຍຸດທະສາດການລົບລ້າງ ຄວາມທຸກຍາກ ແລະ ການພັດທະນາທີ່ອີງໃສ່ຊັບພະຍາກອນພື້ນຖານ; (4) ການໂຕ້ຖຽງກັນກ່ຽວກັບຄວາມເຫມາະສົມຂອງ ການປະຕິບັດທີ່ດີທີ່ສຸດ ຂອງໂຄງການ, ການຕິດຕາມຂອງພາກສ່ວນທີ່ສາມ ແລະ ໂຄງການລົງທຶນຮ່ວມກັນ ແລະການສ້າງກົດລະບຽບຂື້ນມາ; ແລະ (5) ຊ່ອງວ່າງ ລະຫວ່າງ ກົດຫມາຍ, ນະໂຍບາຍ, ກົດລະບຽບ ແລະຫລັກການທີ່ມີຢູ່ ແລະ ການປະຕິບັດຕົວຈິງຂອງພວກເຂົາເຈົ້າ.

ໃນທີ່ສຸດ, ຈາກການທົບທວນຄືນ “ເອກະສານ” ກ່ຽວກັບການສຳປະທານທີ່ດິນຢູ່ໃນ ສ.ປ.ປ.ລາວ, ບົດລາຍ ງານນີ້ໄດ້ມີບາງຂໍ້ບົກພ່ອງ ເຊັ່ນ: ຍັງຂໍ້ມູນອີກຈຳນວນຫລາຍທີ່ກ່ຽວກັບການສຳປະທານທີ່ດິນ, ພ້ອມທັງ ມີຫລາຍຂໍ້ມູນ ທີ່ຮັບຮູ້ໂດຍພະນັກງານຂອງລັດຖະບານ, ອົງການ INGO ທີ່ເຮັດວຽກຢູ່ໃນລາວ ກ່ຽວກັບ ຄວາມສຳພັນລະຫວ່າງການສຳປະທານທີ່ດິນ ແລະ ການດຳລົງຊີວິດ, ເຊິ່ງບໍ່ມີເປັນເອກະສານທີ່ພິມເຜີຍແຜ່; ພ້ອມທັງ, ມີຫລາຍເລື້ອງທີ່ຮູ້ກ່ຽວກັບການສຳປະທານທີ່ດິນ ແລະ ການດຳລົງຊີວິດ ທີ່ຍັງບໍ່ໄດ້ຄິດເຖິງການຄົ້ນຄວ້າ. ສະນັ້ນ ຍັງມີຄວາມຮູ້ຢ່າງຫລວງຫລາຍທີ່ຍັງບໍ່ໄດ້ກ່າວເຖິງໃນບົດລາຍງານນີ້

ສິ່ງທີ່ສຳຄັນ ແມ່ນຊຸມຊົນຮູ້ຈັກເລື້ອງນີ້, ແລະ ບົດລາຍງານນີ້ໄດ້ກວມເອົາພາກທີ່ສຳຄັນ. ແຕ່ຍັງມີຫລາຍຂໍ້ມູນທີ່ໄດ້ຖືກເກັບກຳ ແຕ່ຍັງບໍ່ທັນໄດ້ພິມເຜີຍແຜ່ສູ່ສາທາລະນະ. ເວົ້າເຖິງຂໍ້ມູນມືສອງ ຕົວຢ່າງ: ການກວດ ຄືນຄວາມເປັນເອກະພາບກັນຂອງຂໍ້ມູນ, ອີງຕາມສະຖານທີ່, ບົດຮຽນຈາກພາຍໃນຊຸມຊົນ INGO ກັບບົດ ຮຽນອື່ນໆ, ທັງໃນກໍລະນີ ເຫນັ້ນໃສ່ການສຳປະທານ ແລະ ຂໍ້ມູນຈຳນວນຫລາຍທີ່ມີຢູ່ກ່ຽວກັບບັນຫາອື່ນໆ ເຊັ່ນ: ສຸຂະພາບ, ສະພາບເສດຖະກິດສັງຄົມ ແລະ ການລົງທຶນໄດ້ສະຫນອງຄວາມເປັນໄປໄດ້ອີກແບບຫນື່ງ ໃນການສະແດງໃຫ້ເຫັນ ພາບລວມ *ລະດັບຊາດ* ຂອງສາຍພົວພັນລະຫວ່າງ ການສຳປະທານ ທີ່ດິນ ແລະ ການດຳລົງຊີວິດ.